Food and Agriculture Organization of the United Nations







# ການນຳໃຊ້ຮູບແບບການລົງທຶນໃນການນຳໃຊ້ທີ່ດິນ ຢ່າງມີຄວາມຮັບຜິດຊອບໃນຂະແໜງການປ່າໄມ້

Landesa
Rural Development Institute

ຂໍ້ມູນອ້າງອີງ:

FAO ແລະ Landesa. 2024. ການນໍາໃຊ້ຮູບແບບການລົງທຶນໃນການນໍາໃຊ້ທີ່ດິນຢ່າງມີຄວາມຮັບຜິດຊອບໃນຂະແໜງການປ່າໄມ້. ວຽງຈັນ


The designations employed and the presentation of material in this information product do not imply the expression of any opinion whatsoever on the part of the Food and Agriculture Organization of the United Nations (FAO) concerning the legal or development status of any country, territory, city or area or of its authorities, or concerning the delimitation of its frontiers or boundaries. The mention of specific companies or products of manufacturers, whether or not these have been patented, does not imply that these have been endorsed or recommended by FAO in preference to others of a similar nature that are not mentioned.

The views expressed in this information product are those of the author(s) and do not necessarily reflect the views or policies of FAO.

© FAO, 2024

Some rights reserved. This work is made available under the Creative Commons Attribution-NonCommercial-ShareAlike 3.0 IGO licence (CC BY-NC-SA 3.0 IGO; https://creativecommons.org/licenses/by-nc-sa/3.0/igo/legalcode).

Under the terms of this licence, this work may be copied, redistributed and adapted for non-commercial purposes, provided that the work is appropriately cited. In any use of this work, there should be no suggestion that FAO endorses any specific organization, products or services. The use of the FAO logo is not permitted. If the work is adapted, then it must be licensed under the same or equivalent Creative Commons licence. If a translation of this work is created, it must include the following disclaimer along with the required citation: "This translation was not created by the Food and Agriculture Organization of the United Nations (FAO). FAO is not responsible for the content or accuracy of this translation. The original [Language] edition shall be the authoritative edition."

Disputes arising under the licence that cannot be settled amicably will be resolved by mediation and arbitration as described in Article 8 of the licence except as otherwise provided herein. The applicable mediation rules will be the mediation rules of the World Intellectual Property Organization http://www.wipo.int/amc/en/mediation/rules and any arbitration will be conducted in accordance with the Arbitration Rules of the United Nations Commission on International Trade Law (UNCITRAL).

**Third-party materials.** Users wishing to reuse material from this work that is attributed to a third party, such as tables, figures or images, are responsible for determining whether permission is needed for that reuse and for obtaining permission from the copyright holder. The risk of claims resulting from infringement of any third-party-owned component in the work rests solely with the user.

**Sales, rights and licensing**. FAO information products are available on the FAO website (www.fao.org/publications) and can be purchased through publications-sales@fao.org. Requests for commercial use should be submitted via: www.fao.org/contact-us/licence-request. Queries regarding rights and licensing should be submitted to: copyright@fao.org.



ຮູບໜ້າປົກ

ທາງຊ້າຍ: ©Prevention Food Loss Programme

ທາງກາງ: ©Cliff Massey

ທາງຂວາ: ©Arielle Nkodo

# ສາລະບານ


1. ພາກສະເໜີ 1

2. ກອບແຜນງານສຳລັບການວິເຄາະ 5

3. ກໍລະນີການປະຕິບັດທີ່ດີກວ່າຂອງການລົງທຶນທີ່ມີຄວາມຮັບຜິດຊອບ 11
   - 3.1. ກໍລະນີສຶກສາຈາກ ປະເທດເຊຍຣາ ລີອອນ 11
   - 3.2. ກໍລະນີສຶກສາຈາກ ສປປ ລາວ 19
   - 3.3. ກໍລະນີສຶກສາຈາກ ສາກົນ 22

4. ບົດບາດຂອງພາກສ່ວນທີ່ກ່ຽວຂ້ອງທີ່ເປັນພາກລັດ ແລະ ບໍ່ແມ່ນພາກລັດ ໃນການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບ 33

5. ພາກສະຫຼຸບ 37

ເອກະສານອ້າງອີງ 39




©FAO/Giancarlo Pucci



©Sealaska/Aaron Straight

# 1. ພາກສະເໜີ

ກິດຈະກຳປ່າໄມ້ ແລະ ຂະແໜງປ່າໄມ້ ກຳລັງໄດ້ຮັບການຮັບຮູ້ຫຼາຍຂຶ້ນໃນບົດບາດການແກ້ໄຂບັນຫາໂດຍການນຳໃຊ້ຊັບພະຍາກອນທຳມະຊາດ ກັບສິ່ງທ້າທາຍດ້ານການພັດທະນາແບບຍືນຍົງ (ອົງການອາຫານ ແລະ ການກະເສດ ແຫ່ງສະຫະປະຊາຊາດ (FAO, 2022). ບັນດາປະເທດຕ່າງໆທົ່ວໂລກໄດ້ໃຫ້ຄຳໝັ້ນສັນຍາໜັກແໜ້ນໃນການຫຼຸດຜ່ອນການຕັດໄມ້ທຳລາຍປ່າ, ການຟື້ນຟູລະບົບນິເວດປ່າໄມ້ທີ່ຊຸດໂຊມ, ບັນລຸເປົ້າໝາຍສະພາບອາກາດທົ່ວໂລກ ແລະ ການປົກປັກຮັກສາຊີວະນາໆພັນ. ເວົ້າສະເພາະ, ກິດຈະກຳຕ່າງໆເຊັ່ນ: ການອະນຸລັກປ່າໄມ້, ການຊື້ຂາຍກາກບອນ ແລະ ໂຄງການຊົດເຊີຍກາກບອນ, ການຟື້ນຟູພູມສັນຖານ, ການສ້າງສວນປູກຕົ້ນໄມ້ເພື່ອຜະລິດຊີວະມວນສານ ແມ່ນຕ້ອງການທີ່ດິນ ແລະ ມັກຈະມີການຈັດຕັ້ງປະຕິບັດໃນດິນລັດ ໂດຍລັດຖະບານ, ຜ່ານການຊື້ຂາຍທີ່ດິນ ຫຼື ການໃຫ້ເຊົ່າທີ່ດິນແກ່ຫົວໜ່ວຍທຸລະກິດ, ຫຼື ຜ່ານການຮ່ວມມືກັບຜູ້ມີສິດນຳໃຊ້ທີ່ດິນທ້ອງຖິ່ນ. ເມື່ອໄດ້ຮັບການປະຕິບັດຢ່າງຖືກຕ້ອງ, ກິດຈະກຳເຫຼົ່ານີ້ຈະສາມາດປະກອບສ່ວນເຂົ້າໃນຈຸດປະສົງຂອງຂະແໜງການປ່າໄມ້ ທັງສາມາດປັບປຸງຊີວິດການເປັນຢູ່ ແລະ ລາຍໄດ້ຂອງປະຊາຊົນທ້ອງຖິ່ນ. ຖ້າບໍ່ມີການປະຕິບັດທີ່ດີ, ຫຼື ໃນເງື່ອນໄຂທີ່ສິດ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທ້ອງຖິ່ນ ຍັງບໍ່ມີເອກະສານຢັ້ງຢືນເປັນລາຍລັກອັກສອນ,[1] ການປົກຄອງບໍລິຫານທີ່ດິນອ່ອນແອ, ແລະ ຂະບວນການສ້າງນະໂຍບາຍທີ່ກ່ຽວຂ້ອງກັບທີ່ດິນຂາດຄວາມໂປ່ງໃສ, ກິດຈະກຳເຫຼົ່ານີ້ ມີຄວາມສ່ຽງທີ່ຈະສົ່ງຜົນກະທົບຕໍ່ຜູ້ຊົມໃຊ້ທີ່ດິນ ແລະ ຊຸມຊົນທ້ອງຖິ່ນ ໃນການສູນເສຍທີ່ດິນທຳມາຫາກິນ ແລະ ຊີວິດການເປັນຢູ່ (Lay *et al.*, 2021). ພ້ອມດຽວກັນນັ້ນ, ສິ່ງນີ້ຍັງສາມາດສົ່ງຜົນສ້າງຄວາມສ່ຽງອັນໃຫຍ່ຫຼວງຕໍ່ການດຳເນີນງານ, ການເງິນ ແລະ ຊື່ສຽງ ຂອງຫົວໜ່ວຍທຸລະກິດທີ່ຈັດຕັ້ງປະຕິບັດກິດຈະກຳເຫຼົ່ານີ້ (USAID, n.d). ການຮັບຮອງເອົາຫຼັກການການລົງທຶນໃນການນຳໃຊ້ທີ່ດິນຢ່າງມີຄວາມຮັບຜິດຊອບ ສາມາດປ້ອງກັນຜົນກະທົບທາງລົບທີ່ອາດຈະເກີດຂຶ້ນ ພ້ອມທັງເສີມຂະຫຍາຍຜົນໄດ້ຮັບໃນທາງບວກ.

ອົງການອາຫານ ແລະ ການກະເສດ ແຫ່ງສະຫະປະຊາຊາດ (FAO) ໄດ້ຮັບຮອງເອົາເຄື່ອງມືສາກົນຈຳນວນໜຶ່ງເພື່ອເປັນທິດຊີ້ນຳ ໃນການລົງທຶນທີ່ມີການນຳໃຊ້ທີ່ດິນ ແລະ ປ່າໄມ້ ຢ່າງມີຄວາມຮັບຜິດຊອບ, ໃນການສະໜັບສະໜູນການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ໄປພ້ອມກັບການແກ້ໄຂບັນດາສິ່ງທ້າທາຍຂອງໂລກກ່ຽວກັບຄວາມບໍ່ໝັ້ນຄົງ ດ້ານສະບຽງອາຫານ, ຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບ. ການນຳໃຊ້ເຄື່ອງມືສາກົນເຫຼົ່ານີ້ ເຂົ້າໃນການປະເມີນກໍລະນີສຶກສາທີ່ເປັນຮູບປະທຳ ສາມາດຊ່ວຍກຳນົດ ແລະ ປະຕິບັດຮູບແບບທີ່ດີກວ່າໃນການຈັດຕັ້ງປະຕິບັດ.

ບົດສະຫຼຸບນະໂຍບາຍສິ່ງພິມ ນີ້ແມ່ນສຸມໃສ່ການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບ ໃນກິດຈະກຳປ່າໄມ້ຂະໜາດໃຫຍ່ ແລະ ຂະໜາດກາງ ທີ່ກ່ຽວຂ້ອງກັບບັນດາຫົວໜ່ວຍທຸລະກິດ, ເຊິ່ງຈັດຕັ້ງປະຕິບັດທັງຂົງເຂດປ່າໄມ້ ແລະ ບໍ່ແມ່ນປ່າໄມ້. ບົດສະຫລຸບນະໂຍບາຍຫຍໍ້ນີ້ ແມ່ນສຸມໃສ່ການນຳໃຊ້ສອງເຄື່ອງມືຫຼັກສາກົນຄື ບົດແນະນຳຕາມຄວາມສະໝັກໃຈກ່ຽວກັບການບໍລິຫານສິດຄອບຄອງນຳໃຊ້ຢ່າງມີຄວາມຮັບຜິດຊອບ ໃນເລື້ອງທີ່ດິນ, ການປະມົງ ແລະ ປ່າໄມ້ ໃນເງື່ອນໄຂຄວາມໝັ້ນຄົງດ້ານສະບຽງອາຫານຂອງຊາດ (VGGT) ແລະ ຫຼັກການຂອງຄະນະກຳມະການເພື່ອຄວາມໝັ້ນຄົງທາງດ້ານສະບຽງອາຫານໂລກ (CFS) ສຳລັບການລົງທຶນຢ່າງມີຄວາມຮັບຜິດຊອບໃນລະບົບອາຫານ ແລະ ການກະເສດ (RAI).[2] VGGT ແລະ CFS-RAI ແມ່ນເຄື່ອງມືໃນການສົ່ງເສີມການລົງທຶນ ທີ່ຮັບຮູ້ສິດຄອບຄອງນຳໃຊ້ຂອງປະຊາຊົນທ້ອງຖິ່ນ ແລະ ສົ່ງເສີມຮູບແບບທຸລະກິດທີ່ມີສ່ວນຮ່ວມ ເຊິ່ງສົ່ງເສີມການຮ່ວມມືທີ່ມີຄວາມໝາຍກັບພາກສ່ວນກ່ຽວຂ້ອງໃນທ້ອງຖິ່ນເຊັ່ນ: ຊຸມຊົນພື້ນເມືອງ ແລະ ທ້ອງຖິ່ນ, ແມ່ຍິງ, ຊາວໜຸ່ມ ແລະ ກຸ່ມທີ່ດ້ອຍໂອກາດ (ເບິ່ງຫ້ອງ 1). ເອກະສານນີ້ປະເມີນຫຼາຍກໍລະນີສຶກສາການປະຕິບັດທີ່ດີກວ່າ, ເຊິ່ງສະແດງໃຫ້ເຫັນຫຼັກການເຫຼົ່ານີ້ໃນກິດຈະກຳຕົວຈິງ. ສິ່ງພິມນີ້ແມ່ນມີຈຸດປະສົງ

[1] ມີການປະເມີນວ່າຫຼາຍກວ່າ 50 ເປີເຊັນ ຂອງເນື້ອທີ່ດິນທົ່ວໂລກ ແມ່ນບໍ່ໄດ້ຮັບການຂຶ້ນທະບຽນ ແລະ ຢູ່ພາຍໃຕ້ສິດຄອບຄອງນຳໃຊ້ຕາມປະເພນີທີ່ບໍ່ໄດ້ຮັບການຮັບຮູ້ໂດຍກົດໝາຍທາງການ (FAO, 2022).

[2] ໃນຂະນະທີ່ ຫຼັກການ VGGT ແລະ RAI ແມ່ນເຄື່ອງມືສອງຢ່າງທີ່ສຸມໃສ່ໃນທີ່ນີ້, ຫຼັກການຂອງສະຫະປະຊາຊາດເພື່ອການລົງທຶນຢ່າງມີຄວາມຮັບຜິດຊອບ (UN PRI) ແລະ ສັນຍາສາກົນແຫ່ງສະຫະປະຊາຊາດ (UN Global Compact) ກໍ່ສາມາດນຳໃຊ້ໄດ້ໃນທີ່ນີ້. ອົງການ UN PRI ສົ່ງເສີມການຮວບຮວມເອົາປັດໃຈການປົກຄອງສິ່ງແວດລ້ອມ, ສັງຄົມ ແລະ ບໍລິສັດ ເຂົ້າໃນການຕັດສິນໃຈດ້ານການລົງທຶນ (PRI, 2021). ສັນຍາສາກົນແຫ່ງສະຫະປະຊາຊາດ ສົ່ງເສີມໃຫ້ຫົວໜ່ວຍທຸລະກິດ ເຄົາລົບຕໍ່ ສິດທິມະນຸດ, ສິດທິຂອງຜູ້ອອກແຮງງານ, ຄວາມຍືນຍົງຂອງສິ່ງແວດລ້ອມ ແລະ ການຕ້ານການສໍ້ລາດບັງຫຼວງ (UN Global Compact, n.d.).

## ຫ້ອງ 1. ຮູບແບບການລົງທຶນຢ່າງມີຄວາມຮັບຜິດຊອບ ໃນຂະແໜງປ່າໄມ້

ຮູບແບບການລົງທຶນແມ່ນຖືວ່າມີຄວາມຮັບຜິດຊອບ ເມື່ອພວກເຂົາຮັບຮູ້ເຖິງສິດທິຂອງຜູ້ທີ່ມີສ່ວນຮ່ວມໃນທ້ອງຖິ່ນ, ປັບປຸງສົ່ງເສີມຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນ, ລວມເອົາຜູ້ຜະລິດຂະໜາດນ້ອຍ ແລະວິສາຫະກິດຂອງພວກເຂົາ, ພັດທະນາທັກສະຂອງປະຊາຊົນທ້ອງຖິ່ນ ແລະ ສົ່ງເສີມການຮ່ວມມືທີ່ມີຄວາມໝາຍ (FAO, 2014). ໃນຂະແໜງປ່າໄມ້, ໄດ້ມີການນຳໃຊ້ຮູບແບບ ແລະ ການປະຕິບັດທີ່ຫຼາກຫຼາຍ ເຊິ່ງໄດ້ປະກອບສ່ວນເຂົ້າໃນການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ພ້ອມທັງເຄົາລົບຕໍ່ສິດທິຂອງຊຸມຊົນທ້ອງຖິ່ນ ແລະ ຜູ້ນຳໃຊ້ທີ່ດິນ. ສິ່ງເຫຼົ່ານີ້ລວມມີຂໍ້ຜູກພັນສັນຍາການ ຜະລິດກະສິກຳ (Contract Farming), ຮູບແບບການຜະລິດກະສິກຳຕາມສັນຍາ (outgrower), ໂຄງການແບ່ງປັນຜົນປະໂຫຍດຕ່າງໆ, ການຮ່ວມທຸລະກິດ, ວິສາຫະກິດປ່າໄມ້ ແລະ ຂະແໜງປ່າໄມ້ທີ່ມີການຄຸ້ມຄອງໃນຂັ້ນທ້ອງຖິ່ນ (ເຊັ່ນ: ຄອບຄົວ ແລະ ຊຸມຊົນມີສິດຄອບຄອງສິດໃນການຕັດສິນໃຈກ່ຽວກັບການຄຸ້ມຄອງປ່າໄມ້ ເພື່ອການຄ້າ ແລະ ການນຳໃຊ້ທີ່ດິນ) (Macqueen *et al.,* 2018).

**ໝາຍເຫດ:**

1. Principles for Responsible Investment in Agriculture and Food Systems /ຫຼັກການ ໃນການລົງທຶນທີ່ມີຄວາມຮັບຜິດຊອບໃນ ຂະແໜງກະສິກຳ ແລະ ລະບົບອາຫານ. ໂຮມ www.fao.org/3/au866e/au866e.pdf;
2. **Macqueen, D., Bolin, A. Greijmans, Grouwels, S., & Humphries, S.** 2018. ນະວັດຕະກຳສູ່ ຄວາມຈະເລີນຮຸ່ງເຮືອງ ທີ່ເກີດຂຶ້ນໃນຮູບແບບທຸລະກິດປ່າໄມ້ທີ່ມີການຄຸ້ມຄອງໃນທ້ອງຖິ່ນ ແລະ ມູມມອງໃນ ການຂະຫຍາຍການປະຕິບັດໃຫ້ກວ້າງຂວາງ. ການພັດທະນາສາກົນ 125. https://doi.org/10.1016/j.worlddev.2018.08.004

ເບື້ອງຕົ້ນສຳລັບຜູ້ສ້າງນະໂຍບາຍພາຍໃນລັດຖະບານ, ແຕ່ຍັງສຳລັບນັກລົງທຶນ ແລະ ວິສາຫະກິດ ທຸລະກິດ, ອົງການຈັດຕັ້ງສັງຄົມ (CSOs) ແລະ ຜູ້ຜະລິດຂະໜາດນ້ອຍ ແລະ ຊຸມຊົນທ້ອງຖິ່ນ. ອົງການຈັດຕັ້ງລະດັບພາກພື້ນ ແລະ ສາກົນ, ຜູ້ຈັດຕັ້ງປະຕິບັດວຽກງານການພັດທະນາ, ຜູ້ໃຫ້ທຶນ ແລະ ສະຖາບັນ ການເງິນອື່ນໆ ທີ່ສະໜັບສະໜູນກິດຈະກຳປ່າໄມ້ ກໍ່ສາມາດໄດ້ຮັບປະໂຫຍດຈາກການຮຽນຮູ້ນີ້.

ບົດສະຫຼຸບນະໂຍບາຍສະບັບນີ້ ໄດ້ຮັບການພັດທະນາໂດຍອົງການ FAO ໂດຍຜ່ານໂຄງການການປະຕິບັດກົນໄກຫຼາຍພາກສ່ວນ ທີ່ມີຄວາມຍືດຫຍຸ່ນ (FMM) ນຳໃຊ້ເຄື່ອງມືສາກົນ ແລະ ຜະລິດຕະພັນຄວາມຮູ້ຕ່າງໆ," ແລະ ໂດຍສະເພາະໂຄງການຍ່ອຍຕ່າງໆເຊິ່ງມີຈຸດປະສົງເພື່ອສ້າງຈິດສຳນຶກ ແລະ ສົ່ງເສີມການນຳໃຊ້ຫຼັກການ VGGT ແລະ CFS-RAI ໃນປະເທດ ເຊຍຣາ ລີອອນ (Sierra Leone) ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ). ບົດສົ່ງພິມສະບັບນີ້ແມ່ນຜົນໄດ້ຮັບຈາກການຝຶກອົບຮົມ, ກອງປະຊຸມ, ແລະ ການແລກປ່ຽນແຜນງານພາກໃຕ້ - ພາກໃຕ້ (south-south) ທີ່ໄດ້ຈັດຂຶ້ນ ພາຍໃຕ້ໂຄງການນີ້.

ເອກະສານນີ້: (1) ສະເໜີພາບລວມຂອງຫຼັກການ VGGT ແລະ CFS-RAI, ສະແດງໃຫ້ເຫັນເຖິງຄວາມສົມບູນຂອງເຄື່ອງມືເຫຼົ່ານີ້ ແລະ ສະແດງໃຫ້ເຫັນເຖິງຜົນປະໂຫຍດຂອງການນຳໃຊ້ເຄື່ອງມືດັ່ງກ່າວ; (2) ສະໜອງກອບເຄື່ອງມືເພື່ອປະເມີນຮູບແບບການລົງທຶນຢ່າງມີຄວາມຮັບຜິດຊອບໃນຂະແໜງປ່າໄມ້; (3) ແລກປ່ຽນກໍລະນີສຶກສາຈາກປະເທດ ເຊຍຣາ ລີອອນ (Sierra Leone), ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ແລະ ປະເທດອື່ນໆ ອີກ 4 ປະເທດໃນທົ່ວໂລກ (ສະຫະລັດອາເມລິກາ, ປະເທດ ບຣາຊິລ, ອາຟຣິກາໃຕ້ ແລະ ການາ) ເຊິ່ງເປັນຕົວຢ່າງຂອງການຈັດຕັ້ງປະຕິບັດທີ່ດີກວ່າ ແລະ ມີຄວາມກ່ຽວຂ້ອງກັບບັນດາ ປະເທດຈຸດສຸມ; ແລະ (4) ການໃຫ້ຂໍ້ສະເໜີແນະໃນການ ຈັດຕັ້ງປະຕິບັດເຄື່ອງມືສາກົນດັ່ງກ່າວ ເພື່ອປັບປຸງການ ລົງທຶນໃນການນຳໃຊ້ທີ່ດິນ.

## ສະພາບການ (ບໍລິບົດ)

ການລົງທຶນໃນການນຳໃຊ້ທີ່ດິນ ໃນຂະແໜງປ່າໄມ້ໃນໄລຍະທົດສະວັດທີ່ຜ່ານມາ ແມ່ນໄດ້ຮັບແຮງຂັບເຄື່ອນໃນການຜະລິດສະບຽງອາຫານ, ເຊື້ອໄຟ, ອາຫານສັດ, ເສັ້ນໃຍ ແລະ ຊັບພະຍາກອນອື່ນໆ. ຄວາມພະຍາຍາມໃນການຟື້ນຟູ, ໂຄງການຫຼຸດຜ່ອນການປ່ອຍອາຍກັກໂບນິກ, ການຫຼຸດຜ່ອນຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດໄດ້ເຮັດໃຫ້ມີການລົງທຶນໃນການນຳໃຊ້ທີ່ດິນຢ່າງຫຼວງຫຼາຍ ໃນພື້ນທີ່ປ່າໄມ້ ແລະ ບໍ່ແມ່ນປ່າໄມ້. ເຖິງຢ່າງໃດກໍ່ຕາມ, ບໍ່ແມ່ນການລົງທຶນທັງໝົດດັ່ງກ່າວມາຈະສົ່ງຜົນດີຕໍ່ຊັບພະຍາກອນທຳມະຊາດລວມທັງປ່າໄມ້ເກົ່າແກ່, ພາກສ່ວນກ່ຽວຂ້ອງໃນທ້ອງຖິ່ນ ຫຼື ຕົວຜູ້ລົງທຶນເອງ. ການຄົ້ນຄວ້າ (2020) ຂອງສະຖາບັນໂລກ (Earth Institute) ໄດ້ສຶກສາຄົ້ນຄວ້າກວດກາການລົງທຶນຂະໜາດ

ໃຫຍ່ກ່ວາ 80,000 ແຫ່ງ ໃນທົ່ວພາກພື້ນຊາຮາຣາຂອງທະວີບອາຟຣິກກາ, ອາເມລິກາລາຕິນ ແລະ ອາຊີຕາເວັນອອກສ່ຽງໃຕ້ ພົບວ່າການຫັນປ່ຽນປ່າເປັນ ອຸດສະຫະກໍາສວນໄມ້ປູກເຊັ່ນ ຕົ້ນນໍ້າມັນປາມ, ຕົ້ນຢາງ, ຫຼື ຕົ້ນໄມ້ທີ່ໃຫ້ເສັ້ນໃຍ ມີອັດຕາການສູນເສຍປ່າໄມ້ເຂດຮ້ອນສູງຂຶ້ນ  ເມື່ອທຽບກັບພື້ນທີ່ທີ່ບໍ່ມີການລົງທຶນດັ່ງກ່າວ. ການສຶກສາເພີ່ມເຕີມ ຂອງ Feyertag ແລະ Bowie (2021) ໄດ້ສະແດງໃຫ້ເຫັນຕື່ມອີກວ່າຄວາມເສຍຫາຍທາງດ້ານການເງິນທີ່ອາດເກີດຂຶ້ນ ຍ້ອນຄວາມຂັດແຍ້ງລະຫວ່າງຫົວໜ່ວຍທຸລະກິດ ແລະພາກສ່ວນກ່ຽວຂ້ອງໃນຂັ້ນທ້ອງຖິ່ນແມ່ນສູງເຖິງ 4 ເທົ່າຂອງຄ່າໃຊ້ຈ່າຍສະເລ່ຍ ໃນການຈັດຕັ້ງປະຕິບັດມາດຕະການເພື່ອຫຼຸດຜ່ອນຄວາມສ່ຽງທາງສັງຄົມ.

ອີງຕາມສະພາບເງື່ອນໄຂ, ມັນມີຜົນກະທົບທີ່ບໍ່ດີຫຼາຍຢ່າງຕໍ່ຊຸມຊົນຕ່າງໆ, ນັບແຕ່ການສູນເສຍທີ່ດິນທໍາມາຫາກິນທັງໝົດ ແລະ ວິຖີການດໍາລົງຊີວິດ ຫຼື ບາງສ່ວນຂອງປະຊາຊົນ; ຂໍ້ຈໍາກັດໃນການເຂົ້າເຖິງປ່າໄມ້; ການປ່ຽນແປງທາງດ້ານເສດຖະກິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ທ້ອງຖິ່ນ ເຊິ່ງນໍາໄປສູ່ຄວາມຂັດແຍ່ງພາຍໃນຊຸມຊົນ; ແລະ ການເກີດຂຶ້ນຂອງຄວາມຮຸນແຮງ ແລະການລະເມີດສິດທິມະນຸດ (Gironde *et al.,* 2016).

ບັນຫາຕ່າງໆ ແມ່ນມີຄວາມຮຸນແຮງກວ່າເກົ່າໂດຍສະເພາະບ່ອນທີ່ບໍ່ມີ ການຮັບຮູ້ສິດໃນການຄອບຄອງນໍາໃຊ້ທີ່ດິນຕາມປະເພນີ, ສິດໃນການນໍາໃຊ້ທີ່ດິນ ແລະຊັບພະຍາກອນ ໃນຂັ້ນທ້ອງຖິ່ນຍັງບໍ່ມີລະບຽບການ,[3] ການຄຸ້ມຄອງທີ່ດິນ ແມ່ນ ອ່ອນແອ ແລະ ຂະບວນການຕັດສິນຄະດີທີ່ກ່ຽວຂ້ອງກັບບັນຫາທີ່ດິນຍັງຂາດຄວາມໂປ່ງໃສ (Lay *et al.,* 2021). ເວົ້າສະເພາະ, Alforte *et al.,* (2014) ໃນການສຶກສາຄົ້ນຄວ້າການສໍາປະທານທີ່ດິນ 73,000 ແຫ່ງ ທີ່ລັດຖະບານອະນຸຍາດໃຫ້ແກ່ບັນດາບໍລິສັດໃນ 8 ປະເທດ ພົບວ່າ 93 ເປີເຊັນ ຂອງທີ່ດິນແມ່ນມີປະຊາຊົນອາໄສຢູ່ແລ້ວ. ການສຶກສາຄົ້ນຄວ້າ 51 ກໍລະນີການລົງທຶນໃນອາຊີຕາເວັນອອກສ່ຽງໃຕ້ພົບວ່າ 47 ເປີເຊັນ ແມ່ນກໍ່ໃຫ້ເກີດຄວາມຮຸນແຮງ ແລະ 17 ເປີເຊັນແມ່ນກໍ່ໃຫ້ເກີດມີຜູ້ບາດເຈັບ ແລະ ເສຍຊີວິດ ( Munden Project Ltd, 2017). ການສຶກສາຄົ້ນຄວ້າຂອງ Gironde  *et al.,* (2016) ຍັງພົບວ່າການຄອບຄອງເຂດປ່າໄມ້ຂະໜາດໃຫຍ່ໃນພື້ນທີ່ປ່າໄມ້ມັກຈະກີດຂວາງກິດຈະກໍາການຫາຢູ່ຫາກິນຂອງປະຊາຊົນທ້ອງຖິ່ນ. ມັນແມ່ນສະຖານະການທີ່ໜ້າເປັນ ຫ່ວງຫຼາຍ, ໂດຍສະເພາະແມ່ນບັນດາປະເທດ ທີ່ເນື້ອທີ່ດິນຫຼາຍກວ່າ 50 ເປີເຊັນຂອງເນື້ອທີ່ດິນຂອງປະເທດຂອງພວກເຂົາແມ່ນຢູ່ພາຍໃຕ້ການສໍາປະທານດ້ານປ່າໄມ້ ຫຼື ການລົງທຶນດ້ານກະສິກໍາ










[3] ມີການປະເມີນວ່າຫຼາຍກວ່າ 50 ເປີເຊັນ ຂອງເນື້ອທີ່ດິນທົ່ວໂລກ ແມ່ນບໍ່ໄດ້ຮັບການຂຶ້ນທະບຽນ ແລະ ຢູ່ພາຍໃຕ້ສິດຄອບຄອງນໍາໃຊ້ຕາມປະເພນີທີ່ບໍ່ໄດ້ຮັບການຮັບຮູ້ໂດຍກົດໝາຍທາງການ (FAO, 2022).

(Hett *et al.*, 2020; Legault ແລະ Cochrane, 2021). ໃນປະເທດກາບອນ (Gabon), ໄດ້ມີການລາຍງານວ່າ ການຫັນປ່ຽນການນຳໃຊ້ທີ່ດິນຂະໜາດໃຫຍ່ ມີຜົນກະທົບທາງລົບຕໍ່ແມ່ຍິງຫຼາຍກວ່າຜູ້ຊາຍ ໃນແງ່ຂອງການປ່ຽນແປງຊີວິດການເປັນຢູ່, ຜົນກະທົບຕໍ່ກິດຈະກຳ ການທຳມາຫາກິນຂອງປະຊາຊົນທ້ອງຖິ່ນ ແລະ ຜົນຈາກການທຳລາຍ ສິ່ງແວດລ້ອມເຊັ່ນ: ມົນລະພິດໃນ ແຫຼ່ງນ້ຳ (Legault ແລະ Cochrane, 2021).

ລັດຖະບານ, ນັກລົງທຶນ ແລະ ຫົວໜ່ວຍທຸລະກິດ, ແລະ ພາກສ່ວນກ່ຽວຂ້ອງໃນຂັ້ນທ້ອງຖິ່ນທຸກຄົນ ສາມາດໄດ້ຮັບຜົນປະໂຫຍດຈາກການຈັດຕັ້ງປະຕິບັດ ຫຼັກການ VGGT ແລະ CFS-RAI ແລະ ສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບໃນ ທົ່ວຕ່ອງໂສ້ປ່າໄມ້. ໃນເວລາດຽວກັນ, ລັດຖະບານ ກໍ່ສາມາດແກ້ໄຂຄວາມກົດດັນທີ່ເພີ່ມຂຶ້ນໃນການແກ້ໄຂຄວາມທຸກຍາກ, ຄວາມອຶດຫິວ, ການຫວ່າງງານ, ການເຊື່ອມໂຊມຂອງສິ່ງແວດລ້ອມ ແລະ ສິ່ງທ້າທາຍອື່ນໆ ຂອງການພັດທະນາ ເຊິ່ງເປົ້າໝາຍການພັດທະນາແບບຍືນຍົງ ຂອງອົງການສະຫະປະຊາຊາດ (SDGs) ທີ່ກຳລັງຊອກຫາວິທີແກ້ໄຂ. ນັກລົງທຶນ ແລະ ບັນດາຫົວໜ່ວຍທຸລະກິດ ສາມາດຮັບປະກັນການລົງທຶນຂອງພວກເຂົາ, ຮັກສາສະຖຽນລະພາບຂອງການດຳເນີນງານ ແລະ ຜົນກຳໄລ, ຫຼຸດຜ່ອນຄວາມສ່ຽງໃນການຄອບຄອງການນຳໃຊ້ທີ່ດິນ ແລະ ຄວາມຂັດແຍ່ງ ແລະ ການລະເມີດສິດທິມະນຸດ ແລະ ສົ່ງເສີມຊື່ສຽງຂອງບໍລິສັດຂອງພວກເຂົາ (ເບິ່ງຫ້ອງ 2). ບັນດາພາກສ່ວນກ່ຽວຂ້ອງໃນຂັ້ນທ້ອງຖິ່ນ ສາມາດປະກອບສ່ວນເຂົ້າໃນການປັບປຸງຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ເສດຖະກິດທັງພາຍໃນ ແລະ ຕ່າງປະເທດ. ການລົງທຶນ ແລະ ການເຮັດທຸລະກິດຢ່າງມີຄວາມຮັບຜິດຊອບ ສາມາດເປັນທາງເລືອກທີ່ດີ ຫຼື ສິ່ງເສີມການຄອບຄອງນຳໃຊ້ ແລະ ການຄຸ້ມຄອງທີ່ດິນໂດຍກົງ ເພື່ອການຜະລິດ, ໂດຍສະເພາະແມ່ນຕ່າງຈາກການໂອນສິດ ການນຳໃຊ້ທີ່ດິນຂະໜາດໃຫຍ່ໃຫ້ແກ່ບັນດາຫົວໜ່ວຍທຸລະກິດ (FAO, 2015).

**ຫ້ອງ 2. ຜົນປະໂຫຍດຂອງຫົວໜ່ວຍທຸລະກິດ ແລະ ຜູ້ລົງທຶນ - ບົດຮຽນຄວາມຮູ້ຈາກປະເທດເຊຍຣາ ລີອອນ (Sierra Leone)**

ໃນ Sierra Leone, ບັນດາບໍລິສັດເຊັ່ນ Lizard Earth (ຜູ້ຜະລິດ ໂກໂກ້) ແລະ ບໍລິສັດ Goldtree Limited (ຜູ້ຜະລິດນ້ຳມັນປາມ) ລະບຸວ່າການຈັດຕັ້ງປະຕິບັດຮູບແບບການລົງທຶນຢ່າງມີຄວາມຮັບຜິດຊອບ ຊ່ວຍໃຫ້ພວກເຂົາມີ ແຫຼ່ງຊັບພະຍາກອນ ແລະ ການຄ້າທີ່ຍືນຍົງ, ແລະ ສາມາດເຂົ້າເຖິງແຫຼ່ງການເງິນສຳລັບຜະລິດຕະພັນຂອງພວກເຂົາ. ມັນ ໄດ້ຊ່ວຍປັບປຸງວັດທະນະທຳການຈັດຕັ້ງ ແລະ ອຳນວຍຄວາມສະດວກໃຫ້ແກ່ການປະດິດຄິດສ້າງ. ມັນຊ່ວຍໃຫ້ພວກ ເຂົາໄດ້ຮັບຜົນປະໂຫຍດທາງດ້ານສັງຄົມຕື່ມອີກ, ແລະ ເກັບກ່ຽວຜົນປະໂຫຍດທາງດ້ານຊື່ສຽງ. ສຳລັບບໍລິສັດ Lizard Earth, ຮູບແບບດັ່ງກ່າວແມ່ນກົນໄກທີ່ດີສຳລັບການປະຕິບັດເປົ້າໝາຍ ທີ່ສອດຄ່ອງກັບພາລະບົດບາດຂອງການຜະລິດໂກໂກ້ທີ່ມີຈັນຍາບັນ,ການປັບປຸງການຄຸ້ມຄອງນຳໃຊ້ທີ່ດິນ ແລະ ປັບປຸງຊີວິດການເປັນຢູ່ຂອງ ປະຊາຊົນທ້ອງຖິ່ນ. ບໍລິສັດ Goldtree ໄດ້ຖືເອົາຮູບແບບການລົງທຶນຢ່າງມີຄວາມຮັບຜິດຊອບ ແລະ ວິທີການຕ່າງໆ ໃນການ: (1) ປົກປັກຮັກສາສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ; (2) ສົ່ງເສີມຄວາມສຳພັນທີ່ມີຄວາມຮັບຜິດຊອບ ແລະ ມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນ; (3) ສະໜັບສະໜູນ ໂຄງການພັດທະນາຊຸມຊົນເພື່ອຊຸກຍູ້ວິຖີການດຳລົງຊີວິດແບບຍືນຍົງ; (4) ໃຫ້ການຝຶກອົບຮົມແກ່ຊາວກະສິກອນໃນການປະຕິບັດການຄຸ້ມຄອງບໍລິຫານສວນ ແລະ ປະຕິບັດກະສິກຳທີ່ດີ; ແລະ (5) ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວກະສິກອນທີ່ເປັນຜູ້ປະກອບການ ແລະ ຊ່ວຍໃຫ້ພວກເຂົາໄດ້ຮັບໃບຢັ້ງຢືນ, ເຊັ່ນ ສະພາຄຸ້ມຄອງປ່າໄມ້ (FSC) ແລະ ສະມາຄົມການຜະລິດນ້ຳມັນປາມແບບຍືນຍົງ (RSPO).

**ແຫຼ່ງທີ່ມາ:** Lizard Earth and GoldTree presentations made at the Training Workshop on Responsible Investments in Agriculture, Forestry and Food Systems held on 30 September 2021 in Freetown, Sierra Leone.

# 2. ກອບແຜນງານສຳລັບການວິເຄາະ

ທັງຫຼັກການ VGGT ແລະ CFS-RAI ແມ່ນໄດ້ໃຫ້ທິດຊີ້ນຳໃນການສະໜັບສະໜູນ ການບັນລຸເປົ້າໝາຍຄວາມໝັ້ນຄົງດ້ານສະບຽງອາຫານ ສຳລັບທຸກຄົນ. ເຄື່ອງມືທັງສອງປະກອບສ່ວນເຂົ້າໃນການລົບລ້າງຄວາມທຸກຍາກ ແລະ ຄວາມອຶດຫິວ; ເຄົາລົບສິດຄອບຄອງນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ເພື່ອຍົກສູງຊີວິດການເປັນຢູ່ຂອງປະຊາຊົນ; ຮັບຮູ້ສິດທິມະນຸດ; ສົ່ງເສີມຄວາມສະເໝີພາບທາງດ້ານສັງຄົມ ແລະ ບົດບາດຍິງ-ຊາຍ; ແລະ ເພື່ອສະໜັບສະໜູນ ການປະຕິບັດລະບຽບກົດໝາຍ, ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບ.

ຫຼັກການ VGGT ມີຈຸດປະສົງຕົ້ນຕໍໃນການສົ່ງເສີມສິດຄອບຄອງນຳໃຊ້ທີ່ປອດໄພ ແລະ ການເຂົ້າເຖິງທີ່ດິນ, ການປະມົງ ແລະ ປ່າໄມ້ຢ່າງເທົ່າທຽມກັນກ່ຽວກັບສິດຄອບຄອງນຳໃຊ້ທຸກຮູບແບບ: ພາກລັດ, ເອກະຊົນ, ຊຸມຊົນ, ຊົນເຜົ່າ, ປະເພນີ ແລະ ແບບບໍ່ເປັນທາງການ. ເວົ້າສະເພາະ, ຫຼັກການ VGGT ໄດ້ໃຫ້ການຮັບຮູ້ສິດທິທີ່ຖືກຕ້ອງທັງສິດທີ່ຖືກຕ້ອງຕາມກົດໝາຍ (ຕົວຢ່າງ, ການໄດ້ຮັບການຮັບຮູ້ໃນທາງກົດໝາຍເປັນທາງການ) ແລະ ອື່ນໆທີ່ຖືກຕ້ອງຕາມກົດໝາຍທາງສັງຄົມ (ຕົວຢ່າງ, ມີການຍອມຮັບໃນສັງຄົມຢ່າງກວ້າງຂວາງ ເຖິງແມ່ນວ່າບໍ່ມີການຮັບຮູ້ທາງກົດໝາຍ), ເຊັ່ນວ່າສິດທິຕາມປະເພນີໃນທີ່ດິນ ຂອງລັດ. ຫຼັກການ VGGT ແມ່ນອີງໃສ່ການຮັບຮູ້ວ່າ"...ສິດໃນການຄອບຄອງນຳໃຊ້ທີ່ບໍ່ພຽງພໍ ແລະ ບໍ່ປອດໄພ ເພີ່ມຄວາມສ່ຽງ, ຄວາມອຶດຫິວ ແລະ ຄວາມທຸກຍາກ, ແລະ ສາມາດນຳໄປສູ່ຄວາມຂັດແຍ່ງ ແລະ ການເຊື່ອມໂຊມຂອງສິ່ງແວດລ້ອມ ເມື່ອຜູ້ນຳໃຊ້ມີການແຂ່ງຂັນຕໍ່ສູ້ ເພື່ອຄວບຄຸມຊັບພະຍາກອນເຫຼົ່ານີ້" (FAO, 2012). ຫຼັກການ VGGT ໄດ້ຮັບການພັດທະນາຂຶ້ນ ໂດຍຜ່ານຂະບວນການ ທີ່ມີສ່ວນຮ່ວມ ຂອງພາກສ່ວນກ່ຽວຂ້ອງລະຫວ່າງລັດຖະບານ ແລະ ສາກົນ. ໄດ້ຮັບການຮັບຮອງໂດຍຄະນະກຳມະການ ເພື່ອຄວາມໝັ້ນຄົງທາງດ້ານສະບຽງອາຫານໂລກ (CFS) ໃນປີ 2012, ເຄື່ອງມືດັ່ງກ່າວ ແມ່ນຄູ່ມືແນະນຳສາກົນທີ່ສົມບູນແບບ ໃນການສ້າງຄວາມເຂັ້ມແຂງ ໃຫ້ແກ່ການຄຸ້ມຄອງສິດການນຳໃຊ້. ຫຼັກການຫຼັກ ແລະ ການຈັດຕັ້ງປະຕິບັດ ຫຼັກການ VGGT ສຳລັບປະເທດ ແລະ ບໍ່ແມ່ນປະເທດແມ່ນສາມາດເບິ່ງໄດ້ໃນຫ້ອງ 3.

ຈຸດປະສົງຕົ້ນຕໍຂອງຫຼັກການ CFS-RAI ແມ່ນເພື່ອສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບ ໃນລະບົບກະສິກຳ ແລະ ອາຫານ ເຊິ່ງປະກອບສ່ວນເຂົ້າໃນການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ. ເຊັ່ນດຽວກັນກັບຫຼັກການ VGGT, ຫຼັກການ CFS-RAI ແມ່ນໄດ້ຮັບການພັດທະນາໂດຍຜ່ານຂະບວນການມີສ່ວນຮ່ວມຂອງຫຼາຍພາກສ່ວນ ຂອງສາກົນ ແລະ ລະຫວ່າງລັດຖະບານ ຕ່າງໃນຄະນະກຳມະການເພື່ອຄວາມໝັ້ນຄົງ ທາງດ້ານສະບຽງອາຫານໂລກ (CFS). ໂດຍໄດ້ຮັບການຮັບຮອງຈາກ CFS ໃນປີ 2014, ເຄື່ອງມືດັ່ງກ່າວເປັນຕົວແທນຄູ່ມືແນະນຳສາກົນທີ່ສົມບູນແບບທີ່ສຸດ ສຳລັບການລົງທຶນໃນການນຳໃຊ້ທີ່ດິນ. ຫຼັກການດັ່ງກ່າວມີຂອບເຂດກວ້າງຂວາງ, ກວມເອົາການລົງທຶນທຸກປະເພດໃນຕ່ອງໂສ້ມູນຄ່າກະສິກຳ ແລະ ລະບົບສະບຽງອາຫານ ແລະ ລວມເອົາທຸກພາກສ່ວນ ທີ່ມີສ່ວນກ່ຽວຂ້ອງ, ໄດ້ຮັບຜົນປະໂຫຍດ ຫຼື ໄດ້ຮັບຜົນກະທົບຈາກການລົງທຶນດ້ານກະສິກຳ. ຫຼັກການ 10 ຂໍ້ ຂອງ CFS-RAI ແມ່ນໄດ້ຮັບການນຳສະເໜີໃນ ຫ້ອງ 4.

ຫຼັກການ VGGT ແລະ CFS-RAI ແມ່ນເຄື່ອງມືເສີມການປະຕິບັດ. ບັນດາພາກສ່ວນກ່ຽວຂ້ອງ ສາມາດນຳໃຊ້ຫຼັກການ VGGT ເພື່ອແກ້ໄຂບັນຫາທີ່ກ່ຽວຂ້ອງກັບສິດຄອບຄອງນຳໃຊ້ (ທີ່ດິນ, ການປະມົງ ແລະ ປ່າໄມ້) ສິ່ງຜົນກະທົບຕໍ່ທີ່ດິນ ຈາກການລົງທຶນທີ່ມີການນຳໃຊ້ທີ່ດິນ. ບັນດາພາກສ່ວນກ່ຽວຂ້ອງສາມາດນຳໃຊ້ ຫຼັກການ CFS-RAI ເພື່ອແກ້ໄຂບັນຫາກ່ຽວກັບການລົງທຶນທີ່ມີການນຳໃຊ້ທີ່ດິນໃນຮູບແບບເພີ່ມເຕີມຕ່າງໆ, ລວມທັງແຕ່ນອກເໜືອຈາກບັນຫາສິດຄອບຄອງນຳໃຊ້ ແລະກວມເອົາທຸກໆກິດຈະກຳທີ່ກ່ຽວຂ້ອງກັບຜະລິດຕະພັນອາຫານ ແລະ ບໍ່ແມ່ນອາຫານເປັນຕົ້ນ: ການຜະລິດ, ການປຸງແຕ່ງ, ການແຈກຢາຍ, ການຂາຍ ແລະ ການຊົມໃຊ້ (ເບິ່ງຫ້ອງ 5). ການລົງທຶນໃນຂະແໜງປ່າໄມ້ ສາມາດປະຕິບັດໃຫ້ສອດຄ່ອງກັບຫຼັກການ VGGT ແລະ CFS-RAI ໂດຍການ

## ຫ້ອງ 3. ຫຼັກການສຳຄັນຂອງ VGGT

### ຫຼັກການທົ່ວໄປ:

(1) ຮັບຮູ້ ແລະ ເຄົາລົບຕໍ່ຜູ້ຖືສິດຄອບຄອງນຳໃຊ້ທີ່ຖືກຕ້ອງຕາມກົດໝາຍທັງໝົດ ແລະ ສິດທິຂອງພວກເຂົາ;
(2) ປົກປ້ອງສິດຄອບຄອງນຳໃຊ້ທີ່ຖືກຕ້ອງຕາມກົດໝາຍ ຈາກການຂົ່ມຂູ່ ແລະ ການລະເມີດສິດຕ່າງໆ;
(3) ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃນການເປັນເຈົ້າຂອງສິດຄອບຄອງນຳໃຊ້ຂອງພວກເຂົາ;
(4) ສະໜອງໃນການເຂົ້າເຖິງຄວາມຍຸດຕິທຳ ເພື່ອແກ້ໄຂການລະເມີດສິດທາງກົດໝາຍຕ່າງໆ; ແລະ
(5) ປ້ອງກັນບໍ່ໃຫ້ເກີດຄວາມຂັດແຍ່ງດ້ານສິດຄອບຄອງນຳໃຊ້, ຄວາມຂັດແຍ່ງທີ່ຮຸນແຮງ ແລະ ການສໍ້ລາດບັງຫຼວງ.

### ການປະຕິບັດຫຼັກການ:

(1) ເຄົາລົບກຽດສັກສີໃນການເປັນມະນຸດ ເຊິ່ງຮັບຮູ້ກຽດສັກສີທີ່ມີຄ່າ ແລະ ສິດທິມະນຸດໂດຍແທ້ຈິງ ຂອງທຸກຄົນ;
(2) ບໍ່ມີການແບ່ງແຍກ;
(3) ມີຄວາມສະເໝີພາບ ແລະ ມີຄວາມຍຸດຕິທຳ;
(4) ຄວາມສະເໝີພາບຍິງ-ຊາຍ;
(5) ວິທີການທີ່ມີຄວາມເປັນເອກະພາບ ແລະ ຍືນຍົງ;
(6) ການໃຫ້ຄຳປຶກສາ ແລະ ການມີສ່ວນຮ່ວມ;
(7) ການປະຕິບັດລະບຽບກົດໝາຍ;
(8) ຄວາມໂປ່ງໃສ;
(9) ຄວາມຮັບຜິດຊອບ; ແລະ
(10) ການປັບປຸງແບບຕໍ່ເນື່ອງ.

### ຫຼັກການທົ່ວໄປສຳລັບໜ່ວຍງານທີ່ບໍ່ແມ່ນພາກລັດ ລວມທັງບັນດາວິສາຫະກິດທຸລະກິດ:

(1) ຫຼີກລ້ຽງການລະເມີດສິດທິມະນຸດ ແລະ ສິດຄອບຄອງນຳໃຊ້ທີ່ຖືກຕ້ອງການກົດໝາຍຂອງຄົນອື່ນ.
(2) ສະໜອງລະບົບການຄຸ້ມຄອງຄວາມສ່ຽງ ເພື່ອປ້ອງກັນ ແລະ ແກ້ໄຂຜົນກະທົບທີ່ກໍ່ຄວາມເສຍຫາຍ ຕໍ່ສິດທິມະນຸດ ແລະ ສິດໃນການຄອບຄອງນຳໃຊ້ທີ່ຖືກຕ້ອງຕາມກົດໝາຍ.
(3) ແກ້ໄຂ ແລະ ປັບປຸງ ສິ່ງທີ່ສ້າງຜົນກະທົບທີ່ກໍ່ຄວາມເສຍຫາຍ ຕໍ່ສິດທິຕ່າງໆ.
(4) ກຳນົດ ແລະ ປະເມີນ ຜົນກະທົບຕົວຈິງ ຫຼື ອາດເກີນຂຶ້ນ ຕໍ່ຕໍ່ສິດທິມະນຸດ ແລະ ສິດໃນການຄອບຄອງນຳໃຊ້ທີ່ຖືກຕ້ອງ ຕາມກົດໝາຍ ທີ່ພວກເຂົາອາດເຂົ້າໄປກ່ຽວຂ້ອງ.

**Source:** Source: FAO. 2012. Voluntary Guidelines on the Responsible Governance of Tenure of Land, Fisheries and Forests in the Context of National Food Security. Rome./ ບົດແນະນຳຕາມຄວາມສະໝັກໃຈການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ຢ່າງມີຄວາມຮັບຜິດຊອບ ໃນເລື່ອງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ໃຕ້ເງື່ອນໄຂຄວາມໝັ້ນຄົງດ້ານສະບຽງອາຫານຂອງຊາດ

## ຫ້ອງ 4. ຫຼັກການສຳຄັນຂອງ CFS-RAI

(1) ປະກອບສ່ວນເຂົ້າໃນການຄໍ້າປະກັນ ແລະ ໂພຊະນາການ ດ້ານສະບຽງອາຫານ.
(2) ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ທີ່ມີຄວາມສະເໝີພາບ ແລະ ຍືນຍົງ ແລະລຶບລ້າງຄວາມທຸກຍາກ.
(3) ສົ່ງເສີມຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ.
(4) ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວໜຸ່ມ ແລະ ເຮັດໃຫ້ພວກເຂົາມີສ່ວນຮ່ວມ.
(5) ເຄົາລົບສິດຄອບຄອງນຳໃຊ້ທີ່ດິນ, ການປະມົງ, ປ່າໄມ້ ແລະ ການເຂົ້າເຖິງແຫຼ່ງນໍ້າ.
(6) ອະນຸລັກຮັກສາ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ, ເພີ່ມຄວາມສາມາດໃນການຟື້ນຕົວຄືນ ແລະ ຫຼຸດຜ່ອນຄວາມສ່ຽງດ້ານໄພພິບັດ.
(7) ເຄົາລົບມໍລະດົກທາງວັດທະນະທຳ ແລະ ຄວາມຮູ້ທາງດ້ານວັດທະນະທຳ ແລະ ສະໜັບສະໜູນ ຄວາມຫຼາກຫຼາຍ ແລະ ນະວັດຕະກຳໃໝ່ໆ.
(8) ສົ່ງເສີມລະບົບກະສິກຳ ແລະ ສະບຽງອາຫານ ທີ່ປອດໄພ ແລະ ມີປະໂຫຍດຕໍ່ສຸຂະພາບ.
(9) ປະສົມປະສານ ໂຄງສ້າງການຄຸ້ມຄອງບໍລິຫານ, ຂະບວນການ ແລະ ກົນໄກການຮ້ອງທຸກ ທີ່ມີຄວາມປ່ອງໃສ ແລະມີຄວາມສະເໝີພາບ.
(10) ປະເມີນ ແລະ ແກ້ໄຂ ຜົນກະທົບ ແລະ ສົ່ງເສີມຄວາມຮັບຜິດຊອບ.

**ແຫຼ່ງທີ່ມາ: :** FAO.2014. Principles for Responsible Investment in Agriculture and Food Systems. Rome. www.fao.org/3/au866e/au866e.pdf/ ຫຼັກການໃນການລົງທຶນທີ່ມີຄວາມຮັບຜິດຊອບໃນ ຂະແໜງກະສິກຳ ແລະ ລະບົບອາຫານ. ໂຣມ www.fao.org/3/au866e/au866e.pdf;

ມຸ້ງສູ່ການຈັດຕັ້ງປະຕິບັດຫຼັກການເຫຼົ່ານີ້ໃນຂັ້ນຕອນຕ່າງໆຂອງການລົງທຶນດັ່ງທີ່ໄດ້ລະບຸໄວ້ໃນ ຫ້ອງ 6 ຂ້າງລຸ່ມນີ້. ຂັ້ນຕອນ ເຫຼົ່ານີ້ ສາມາດນຳໃຊ້ກັບຮູບແບບ ແລະ ການຈັດສັນ ທາງທຸລະກິດຕ່າງໆ, ບໍ່ວ່າມັນຈະກ່ຽວຂ້ອງກັບການໄດ້ສິດ ນຳໃຊ້ ແລະ ຄຸ້ມຄອງທີ່ດິນໂດຍກົງ ຫຼື ເຮັດວຽກກັບຜູ້ຜະລິດຂະໜາດນ້ອຍໂດຍຜ່ານຮູບແບບການຜະລິດທາງ ເລືອກ.

### ຫ້ອງທີ 5. ຄວາມສຳພັນກັນຂອງ ຫຼັກການ VGGT ແລະ CFS-RAI




VGGT

Governance of Tenure

- ແກ້ໄຂບັນຫາການຄອບຄອງນຳໃຊ້ ທີ່ກ່ຽວຂ້ອງກັບ ບັນຫາອື່ນໆນອກເໜືອ ຈາກບັນຫາການລົງທຶນ
- ຄູ່ມືແນະນຳ: ບົດແນະນຳໂດຍລະອຽດ

- ການລົງທຶນຢ່າງມີຄວາມຮັບຜິດຊອບ ໃນຂະແໜງກະສິກຳ




CFS RAI

- ແກ້ໄຂບັນຫາດ້ານອື່ນໆ ຂອງການລົງທຶນນອກເໜືອ ຈາກບັນຫາການຄອບຄອງນຳໃຊ້ທີ່ດິນ
- ຫຼັກການຕ່າງໆ: ກອບວຽກກວມລວມ ທີ່ສິ່ງຜົນ ເຊິ່ງກັນແລະກັນ



**ລະບົບອາຫານ**

- ການຜະລິດ
- ການປຸງແຕ່ງ
- ການແຈກຢາຍ/ ຈຳໜ່າຍ
- ການເຂົ້າເຖິງ/ ຂາຍຍ່ອຍ
- ການບໍລິໂພກ

**ແຫຼ່ງທີ່ມາ:** ຄັດມາຈາກບົດນຳສະເໜີຂອງ ຫຼັກການ **VGGT** ແລະ **CFS-RAI**

## ຫ້ອງ 6. ການປະສົມປະສານ ຫຼັກການ VGGT ແລະ CFS-RAI ເຂົ້າໃນຂະບວນການລົງທຶນທີ່ມີການນຳໃຊ້ທີ່ດິນ




ຂະບວນການລົງທຶນສ່ວນໃຫຍ່ ປະຕິບັດຕາມຂັ້ນຕອນທີ່ລະບຸໄວ້ໃນ FAO ແລະ ສະຖາບັນປ່າໄມ້ເອີຣົບ (EFI's) 2018 ເຮັດໃຫ້ການສຳປະທານປ່າໄມ້ໃນເຂດຮ້ອນ ປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍ ປີ 2030. ຫ້ອງນີ້ໄດ້ວາງຂັ້ນຕອນຂອງການລົງທຶນ ແລະ ກຳນົດວິທີການທີ່ພາກສ່ວນກ່ຽວຂ້ອງ ທາງພາກລັດ ແລະ ບໍ່ແມ່ນພາກລັດສາມາດເຮັດວຽກຮ່ວມກັນ ເພື່ອນຳໃຊ້ຫຼັກການ VGGT ແລະ CFS-RAI ໂດຍຜ່ານຂັ້ນຕອນເຫຼົ່ານີ້ເພື່ອສ້າງການລົງທຶນຢ່າງມີຄວາມຮັບຜິດຊອບ. ການນຳໃຊ້ຫຼັກການ ຍິນຍອມຢ່າງເປັນອິດສະຫຼະ,ໄດ້ຮັບການເຫັນດີເຫັນພ້ອມລ່ວງໜ້າ ແລະ ມີການແຈ້ງຂໍ້ມູນທີ່ຄົບຖ້ວນ (FPIC) ເລີ່ມຈາກການວາງແຜນການລົງທຶນ ຈົນເຖິງຂັ້ນຕອນ ຫຼັງຈາກການລົງທຶນ ແມ່ນມີຄວາມສຳຄັນເພື່ອຮັບປະກັນການຈັດຕັ້ງປະຕິບັດ ຫຼັກການ VGGT ແລະ CFS-RAI ທີ່ດີ ການຮັບປະກັນການມີສ່ວນຮ່ວມຂອງແມ່ຍິງ, ຊາວໜຸ່ມ ແລະ ກຸ່ມທີ່ດ້ອຍໂອກາດອື່ນໆ ຈະຊ່ວຍ ຮັບປະກັນເຮັດໃຫ້ການລົງທຶນມີລັກສະນະການມີສ່ວນຮ່ວມ. ການພົວພັນກັບພາກສ່ວນກ່ຽວຂ້ອງໃນທ້ອງຖິ່ນອາດຈະໄດ້ຮັບການປະຕິບັດໂດຍ ຫົວໜ່ວຍທຸລະກິດ ຫຼື ການລົງທຶນ ໂດຍກົງ. ອີກທາງເລືອກໜຶ່ງ, ພວກເຂົາອາດຈະໄດ້ຮັບການອຳນວຍຄວາມສະດວກຈາກພາກລັດຖະບານ (ໂດຍສະເພາະໃນລະດັບທ້ອງຖິ່ນ), ອົງການຈັດຕັ້ງທີ່ບໍ່ສັງກັດກັບລັດຖະບານ, ຫຼື ອົງການຈັດຕັ້ງສັງຄົມຕ່າງໆ (CSOs) ເພື່ອຊ່ວຍ ແກ້ໄຂບັນຫາຄວາມບໍ່ສົມດຸນທາງດ້ານອຳນາດ. ບັນດານັກລົງທຶນ ແລະ ຫົວໜ່ວຍທຸລະກິດ ຄວນຮັບປະກັນການ ຈັດຕັ້ງປະຕິບັດຫຼັກການລວມ 1-5 ຂອງ VGGT ສຳລັບໜ່ວຍງານທີ່ບໍ່ແມ່ນພາກລັດໂດຍສະເພາະ.

| ຂັ້ນຕອນຂອງການລົງທຶນ | ການປະສົມປະສານ ຫຼັກການ VGGT ແລະ CFS-RAI ເຂົ້າໃນຂະບວນການລົງທຶນທີ່ມີການນຳໃຊ້ທີ່ດິນ |
|---|---|
| **ຂັ້ນຕອນທີ 1: ການວາງແຜນການລົງທຶນ** | • ຂັ້ນຕອນນີ້ກ່ຽວຂ້ອງກັບການສຳຫຼວດ ແລະ ການປະເມີນ,ລວມທັງລາຍການສິ່ງຂອງດ້ານຊັບພະຍາກອນ, ຄວາມເປັນໄປໄດ້ທາງດ້ານເສດຖະກິດ ແລະ ການປະເມີນຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ.<br>• ເນື່ອງຈາກໄດ້ມີການກຳນົດທີ່ຕັ້ງຂອງການລົງທຶນ,ການລົງທຶນຢ່າງມີຄວາມຮັບຜິດຊອບຄວນຮັບປະກັນວ່າທຸກພາກສ່ວນທີ່ກ່ຽວຂ້ອງໃນຂັ້ນທ້ອງຖິ່ນ, ສິດຄອບຄອງນຳໃຊ້ຂອງພວກເຂົາ ແລະ ການນຳໃຊ້ຊັບພະຍາກອນ ຕ້ອງໄດ້ຮັບການສຶກສາຄົ້ນຄວ້າພິຈາລະນາໂດຍການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ ແລະ ໃຫ້ມີການເຂົ້າຮ່ວມ. ຄວນໄດ້ຮັບການເຫັນດີເຫັນພ້ອມ ກ່ຽວກັບແຜນການລົງທຶນ ແລະ ພື້ນທີ່ລົງທຶນ ໂດຍການນຳໃຊ້ຫຼັກການການຍິນຍອມຢ່າງເປັນອິດສະຫຼະ, ໄດ້ຮັບການເຫັນດີເຫັນພ້ອມລ່ວງໜ້າ ແລະ ມີການແຈ້ງຂໍ້ມູນທີ່ຄົບຖ້ວນ (FPIC) ເຊິ່ງຄວນໃຫ້ມີການປຶກສາຫາລືກັບແມ່ຍິງ, ຊາວໜຸ່ມ ແລະ ກຸ່ມທີ່ດ້ອຍໂອກາດ. |

| | |
|---|---|
| | • ບັນດາໂຄງການ ຄວນຮັບປະກັນການນຳໃຊ້ຫຼັກການລວມ ທີ 1 ຂອງ VGGT ແລະ ໂດຍສະເພາະການຈັດຕັ້ງປະຕິບັດຕາມຫຼັກການ 1-9. |
| **ຂັ້ນຕອນທີ 2: ການກະກຽມການຈັດສັນປ່າໄມ້** | • ຂັ້ນຕອນທີ 2 ແມ່ນກ່ຽວຂ້ອງກັບການປຶກສາຫາລື ກັບບັນດາອົງການທີ່ກ່ຽວຂ້ອງຂອງພາກລັດ, ການກວດສອບສະພາບເສດຖະກິດ - ສັງຄົມໃນພື້ນທີ່ການລົງທຶນ, ການປະເມີນມູນຄ່າການເກັບກ່ຽວທີ່ຄາດໄວ້ຂອງພື້ນທີ່, ການສ້າງແຜນທີ່ການນຳໃຊ້ ແລະ ການປະເມີນສິດທິ ແລະ ຄວາມຮັບຜິດຊອບ, ປຶກສາຫາລືກັບພາກສ່ວນກ່ຽວຂ້ອງໃນຂັ້ນທ້ອງຖິ່ນ ແລະ ພາກລັດຖະບານທ້ອງຖິ່ນ.<br>• ໂຄງການຄວນຮັບປະກັນໃຫ້ມີການປຶກສາຫາລື ແລະ ການຮ່ວມມືທີ່ມີຄວາມໝາຍ ກັບພາກສ່ວນກ່ຽວຂ້ອງ ແລະ ອົງການທີ່ບໍ່ສັງກັດກັບລັດຖະບານ NGO.ຫຼືໜ່ວຍທຸລະກິດຄວນຈະດັດປັບການອອກແບບໂຄງການ ໂດຍອີງໃສ່ປັດໄຈສິ່ງທີ່ມີແລ້ວໃນທ້ອງຖິ່ນ ເພື່ອຫຼຸດຜ່ອນຜົນກະທົບທາງລົບ ແລະ ສົ່ງເສີມການພັດທະນາເສດຖະກິດ,ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ຊີວິດການເປັນຢູ່ແບບຍືນຍົງ.<br>• ບັນດາໂຄງການ ຄວນຮັບປະກັນວ່າການອອກແບບ ແມ່ນໄດ້ລວມເອົາການພິຈາລະນາຫຼັກການ CFS-RAI 1-10 ໃນຂອບເຂດທີ່ສາມາດເປັນໄປໄດ້. |
| **ຂັ້ນຕອນທີ 3: ສ້າງສັນຍາ** | • ຂັ້ນຕອນທີ 3 ກ່ຽວຂ້ອງກັບການສ້າງສັນຍາ ໂດຍອີງໃສ່ຜົນຂອງການສຶກສາຄົ້ນຄວ້າ ແລະ ລາຍການຊັບພະຍາກອນຕ່າງໆ ເຊິ່ງໄດ້ປະຕິບັດໃນຂັ້ນຕອນ 1 ແລະ 2. ສັນຍາຄວນກຳນົດທຸກເງື່ອນໄຂ, ສິດ ແລະ ຄວາມຮັບຜິດຊອບ ເຊິ່ງໄດ້ຮັບຄວາມເຫັນດີຈາກໜ່ວຍງານທີ່ເຂົ້າຮ່ວມສັນຍາຕ່າງໆ (ນັກລົງທຶນ/ຫຼືໜ່ວຍທຸລະກິດ, ພາກລັດຖະບານ, ໜ່ວຍງານທີ່ມີສ່ວນກ່ຽວຂ້ອງ ໃນຂັ້ນທ້ອງຖິ່ນ).<br>• ຫ້ອງການລັດຖະບານທີ່ຮັບຜິດຊອບ ຄວນຮັບປະກັນໃຫ້ມີການຮ່າງສັນຍາສຳລັບການປຶກສາຫາລື ແລະ ຊ່ວຍໃນການເຈລະຈາ ແລະ ໄດ້ຮັບຄວາມເຫັນດີໃນເງື່ອນໄຂຂອງສັນຍາ ກັບພາກສ່ວນກ່ຽວຂ້ອງໃນຂັ້ນທ້ອງຖິ່ນ. ການບໍລິຫານປ່າໄມ້ ຄວນຮັບປະກັນຄວາມໂປ່ງໃສ ແລະ ການປະຕິບັດກົດໝາຍ ແລະ ກຳນົດຄວາມຄາດຫວັງ ແລະ ເງື່ອນໄຂຂໍ້ກຳນົດຂອງສັນຍາ.<br>• ໂຄງການຄວນຮັບປະກັນເຮັດໃຫ້ສັນຍາໄດ້ຮັບການພິຈາລະນາຢ່າງຄົບຖ້ວນ ກ່ຽວກັບຫຼັກການທົ່ວໄປຂອງ VGGT ແລະ ປະຕິບັດຫຼັກການ ກໍ່ຄືການຈັດຕັ້ງປະຕິບັດຫຼັກການ CFS-RAI 1-10 ໃນບ່ອນທີ່ມີຄວາມເໝາະສົມ. |
| **ຂັ້ນຕອນທີ 4: ການອະນຸມັດສັນຍາ** | • ໃນຂັ້ນຕອນທີ 4, ລັດຖະບານຕົກລົງອະນຸມັດສັນຍາໂຄງການໃຫ້ແກ່ຫຼືໜ່ວຍການລົງທຶນ/ທຸລະກິດ.<br>• ພາກສ່ວນກ່ຽວຂ້ອງທີ່ເປັນພາກລັດ ແລະ ບໍ່ແມ່ນພາກລັດ ຄວນເຮັດວຽກຮ່ວມກັນເພື່ອຮັບປະກັນວ່າ ການອະນຸມັດສັນຍາໂຄງການ ແມ່ນໄດ້ຮັບການປະຕິບັດ ໂດຍຜ່ານຂັ້ນຕອນທີ່ໂປ່ງໃສ, ມີການແຂ່ງຂັນ ແລະ ມີຄວາມສະເໝີພາບເພາະຈະຫຼຸດຜ່ອນຄວາມສ່ຽງຂອງການສໍ້ລາດບັງຫຼວງ ແລະ ຊຸກຍູ້ສົ່ງເສີມການນຳໃຊ້ ແລະ ການຄຸ້ມຄອງ ພື້ນທີ່ການລົງທຶນຢ່າງມີປະສິດທິພາບ.<br>• ໂຄງການຄວນຮັບປະກັນການຈັດຕັ້ງປະຕິບັດຫຼັກການໃນການປະຕິບັດ VGGT 2, 3 ແລະ 6-9 ໂດຍສະເພາະ. |

| | |
|---|---|
| **ຂັ້ນຕອນທີ 5: ການຈັດຕັ້ງປະຕິບັດ,ການຕິດຕາມກວດກາ ແລະ ການບັງຄັບໃຊ້ສັນຍາ** | • ການຈັດຕັ້ງປະຕິບັດສັນຍາ ເລີ່ມຕົ້ນດ້ວຍການເຊັນສັນຍາ, ເຊິ່ງອາດຈະຕິດຕາມດ້ວຍການສ້າງເອກະສານເພີ່ມເຕີມ (ເຊັ່ນ: ໝາຍເຂດແດນ, ການສ້າງແຜນທີ່ຂອງພື້ນທີ່ການລົງທຶນ, ການສ້າງ ຂໍ້ມູນດ້ານປ່າໄມ້, ແຜນການນໍາໃຊ້ ແລະ ຄຸ້ມຄອງປ່າໄມ້, ການພັດທະນາແຜນການດໍາເນີນງານ ປະຈໍາປີ, ການສ້າງແຜນ ພັດທະນາສັງຄົມ ແລະ ຊຸມຊົນ, ການວາງແຜນການສ້າງພື້ນຖານໂຄງລ່າງ ການຂົນສົ່ງ). ຂັ້ນຕອນນີ້ປະກອບມີການຕິດຕາມກວດກາຜົນການ ປະຕິບັດ ໂດຍອີງໃສ່ຄວາມ ຄາດຫວັງ ແລະ ການບັງຄັບໃຊ້ກົດໝາຍ ເພື່ອຮັບປະກັນການປະຕິບັດທີ່ສອດຄ່ອງກັບ ຂໍ້ກໍານົດ ແລະ ເງື່ອນໄຂຂອງສັນຍາ.<br>• ການຈັດຕັ້ງປະຕິບັດ ຄວນຮັບປະກັນການປົກປ້ອງສິດ ແລະ ການນໍາໃຊ້ປ່າໄມ້ ແລະ ຊັບພະຍາກອນທໍາມະຊາດ ຂອງພາກສ່ວນທີ່ກ່ຽວຂ້ອງໃນຂັ້ນທ້ອງຖິ່ນ,ພັດທະນາການຮ່ວມມືກັບພາກສ່ວນ ກ່ຽວຂ້ອງໃນທ້ອງຖິ່ນ, ສະໜອງກົນໄກການແກ້ໄຂຂໍ້ຂັດແຍ່ງການແກ້ໄຂຄໍາ ຮ້ອງ ທຸກຢ່າງມີ ປະສິດທິພາບ. ລັດຖະບານ ແລະ ອົງການຈັດຕັ້ງສັງຄົມຄວນຮັບປະກັນການຕິດຕາມກວດກາ, ການເກັບກໍາລາຍຮັບ, ຄວາມຮັບຜິດຊອບ,ການບັງຄັບໃຊ້ກົດໝາຍ ແລະ ການອອກມາດຕະການ ລົງໂທດຕໍ່ການປະຕິບັດທີ່ບໍ່ສອດຄ່ອງ.<br>• ບັນດາໂຄງການ ຄວນຮັບປະກັນ ການນໍາໃຊ້ຫຼັກການລວມ ຂອງ VGGT 2-5, ປະຕິບັດຫຼັກການ 1-10, ທຸກໆຫຼັກການລວມສໍາລັບໜ່ວຍງານທີ່ບໍ່ແມ່ນພາກລັດ ເພື່ອນໍາພາການປະຕິບັດກິດຈະກໍາຕ່າງໆ. ບັນດາໂຄງການ ຄວນນໍາໃຊ້ຫຼັກການ CFS-RAI 1-10 ເພີ່ມອີກ. |
| **ຂັ້ນຕອນທີ 6: ການຕິດຕາມກວດການພາຍຫຼັງສິ້ນສຸດສັນຍາ** | • ຂັ້ນຕອນນີ້ກ່ຽວຂ້ອງກັບການຄຸ້ມຄອງພື້ນທີ່ການລົງທຶນ ພາຍຫຼັງສັນຍາສິ້ນສຸດລົງ ຫຼື ໃກ້ຈະສິ້ນສຸດສັນຍາ. ມັນກ່ຽວຂ້ອງກັບການປະເມີນຜົນການຈັດຕັ້ງປະຕິບັດສັນຍາ ແລະ ຄວາມ ເປັນໄປໄດ້ຂອງການຕໍ່ ອາຍຸສັນຍາ, ພ້ອມທັງການຄຸ້ມຄອງການລົງທຶນທີ່ໝົດອາຍຸແລ້ວ.<br>• ບັນດາພາກສ່ວນກ່ຽວຂ້ອງຂອງພາກລັດຖະບານ ແລະ ບໍ່ແມ່ນລັດຖະບານ ຄວນເຮັດວຽກຮ່ວມກັນເພື່ອຮັບປະກັນການປະເມີນຜົນ ແລະ ການປະຕິບັດສັນຍາ ໃຫ້ສໍາເລັດຕາມກໍານົດເວລາ ແລະ ມີຄວາມໂປ່ງໃສ ແລະ ການໂອນສິດກ່ຽວກັບການນໍາໃຊ້ປ່າໄມ້.<br>• ບັນດາໂຄງການ ຄວນຮັບປະກັນການພິຈາລະນາທຸກຫຼັກການລວມ ແລະ ຈັດຕັ້ງປະຕິບັດຫຼັກການ VGGT, ຫຼັກການລວມ ສໍາລັບໜ່ວຍງານທີ່ບໍ່ແມ່ນພາກລັດ ແລະ ຫຼັກການ 9 ແລະ 10 ຂອງ CFS-RAI |

**ແຫຼ່ງທີ່ມາ:** FAO & EFI (European Forest Institute). 2018. ເຮັດໃຫ້ການສໍາປະທານປ່າໄມ້ໃນເຂດຮ້ອນປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍ, 2030: ບົດແນະນໍາຕາມຄວາມສະໝັກໃຈ ໂດຍ Y.T. Tegegne, J. Van Brusselen, M. Cramm, T. Linhares-Juvenal, P. Pacheco, C. Sabogal, and D. Tuomasjukka. FAO Forestry Paper No. 180, Rome. 128 pp. www.fao.org/3/I9487EN/i9487en.pdf; FAO. 2012. ບົດແນະນໍາຕາມຄວາມສະໝັກໃຈການຄຸ້ມຄອງບໍລິຫານການຄອບຄອງນໍາໃຊ້ຢ່າງມີຄວາມຮັບຜິດຊອບ ໃນເລື່ອງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ໃຫ້ເງື່ອນໄຂຄວາມໝັ້ນຄົງດ້ານສະບຽງອາຫານຂອງຊາດ; FAO. 2014b. ເຄົາລົບຕໍ່ສິດຂອງຊາວພື້ນເມືອງໃນຫຼັກການການຍິນ ຍອມຢ່າງເປັນອິດສະຫຼະ, ໄດ້ຮັບການ ເຫັນດີເຫັນພ້ອມລ່ວງໜ້າ ແລະ ມີການແຈ້ງຂໍ້ມູນທີ່ຄົບຖ້ວນ (FPIC): ບົດແນະນໍາໃນການປະຕິບັດຕົວຈິງ ສໍາ ລັບລັດຖະບານ, ບໍລິສັດ,ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs), ຊົນເຜົ່າພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນທີ່ກ່ຽວຂ້ອງກັບການໄດ້ມາຂອງທີ່ດິນ, ການຄຸ້ມຄອງຄູ່ມືແນະນໍາເຕັກນິກການຄອບຄອງນໍາໃຊ້ເລກທີ 3.

ຂັ້ນຕອນ ແລະ ຫຼັກການທີ່ໄດ້ກ່າວມາຂ້າງເທິງນີ້ ແມ່ນກ່ຽວຂ້ອງກັບທຸກພາກສ່ວນທີ່ໄດ້ຮັບຜົນກະທົບຈາກການລົງທຶນທີ່ຕິດພັນກັບການນໍາໃຊ້ທີ່ດິນ. ບັນດາພາກສ່ວນກ່ຽວຂ້ອງພາກລັດໃນລະດັບຊາດອາດຈະພິຈາລະນາຫຼັກການເຫຼົ່ານີ້ ເຂົ້າໃນການອໍານວຍຄວາມສະດວກ ໃຫ້ແກ່ການສໍາປະທານ ຫຼື ສ້າງກົດໝາຍ, ລະບຽບການ ແລະ ກອບການດໍາເນີນງານທີ່ພຽງພໍສໍາລັບການລົງທຶນຢ່າງມີ ຄວາມຮັບຜິດຊອບ. ລັດຖະບານຂັ້ນທ້ອງຖິ່ນອາດຈະພິຈາລະນານໍາໃຊ້ຫຼັກການເຫຼົ່ານີ້ເພື່ອໃຫ້ມີການພົວພັນກັບ ບໍລິສັດ ແລະ ຊຸມຊົນ ແລະ ຊ່ວຍໃນການຕິດຕາມກວດກາ ແລະ ການບັງຄັບໃຊ້ກົດໝາຍໃຫ້ມີການປະຕິບັດໃຫ້ສອດຄ່ອງ. ນັກລົງທຶນ ແລະ ບັນດາຫົວໜ່ວຍທຸລະກິດ ອາດຈະລວມເອົາຫຼັກການເຫຼົ່ານີ້ ເຂົ້າໃນແຜນການລົງທຶນ ແລະ ແຜນການດໍາເນີນງານຂອງພວກເຂົາ ໃນການຜະລິດ ແລະການຊອກຫາແຫຼ່ງຊັບພະຍາກອນ. ຊຸມຊົນ ແລະ ອົງການຈັດຕັ້ງສັງຄົມສາມາດນໍາໃຊ້ຂໍ້ມູນດັ່ງກ່າວເພື່ອສ້າງຄວາມເຂົ້າໃຈໃຫ້ດີຂຶ້ນ ກ່ຽວກັບສິ່ງທີ່ຈໍາເປັນໃນການ ປະຕິບັດເພື່ອໃຫ້ສອດຄ່ອງກັບຫຼັກການ VGGT ແລະ CFS-RAI ເພື່ອສົ່ງເສີມການປະກອບສ່ວນຂອງພວກເຂົາ ຕໍ່ສິດຄອບຄອງນໍາໃຊ້ ແລະ ຊີວິດການເປັນຢູ່ຂອງປະຊາ ຊົນທ້ອງຖິ່ນ.

# 3. ກໍລະນີສຶກສາການປະຕິບັດທີ່ດີກວ່າຂອງການລົງທຶນທີ່ມີຄວາມຮັບຜິດຊອບ

ພາກນີ້ແມ່ນຈະໄດ້ນຳສະເໜີກໍລະນີສຶກສາ ກ່ຽວກັບການປະຕິບັດທີ່ດີກວ່າ ຂອງການລົງທຶນຢ່າງມີຄວາມຮັບຜິດຊອບ ໃນຂະແໜງປ່າໄມ້ໃນປະເທດ ເຊຍຣາ ລີອອນ (Sierra Leone) ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ ແລະ ກໍລະນີສຶກສາຈາກທົ່ວໂລກ, ໂດຍການປະເມີນໃສ່ຫຼັກການ VGGT ແລະ CFS-RAI.

## 3.1 ກໍລະນີສຶກສາຈາກ ປະເທດ ເຊຍຣາ ລີອອນ (Sierra Leone)

ໃນເຂດຊົນນະບົດຂອງປະເທດ Sierra Leone, ທີ່ດິນແມ່ນເປັນເຈົ້າຂອງໂດຍຄອບຄົວກົກເຄົ້າໃຫຍ່ ຫຼື ກຸ່ມທີ່ສືບເຊື້ອສາຍຕາມມາ, ແຕ່ລະກຸ່ມມີບັນພະບຸລຸດດຽວກັນ. ສະມາຊິກທີ່ບໍ່ແມ່ນສະມາຊິກໃນຄອບຄົວ ອາດຈະໄດ້ຮັບການຄຸ້ມຄອງ, ຄວບຄຸມ ຫຼື ການໂອນສິດນຳໃຊ້ທີ່ດິນຈາກຫົວໜ້າຄອບຄົວ (GoSL, 2015). ເຊັ່ນດຽວກັນກັບບ່ອນອື່ນໆໃນອະນຸພາກພື້ນຊາຮາຣາໃນທະວີບ ອາຟຣິກາ, ປະເທດ Sierra Leone ໄດ້ປະສົບກັບການເພີ່ມ ຂຶ້ນຂອງໂຄງການລົງທຶນທີ່ມີການນຳໃຊ້ທີ່ດິນຂະໜາດໃຫຍ່ ນັບຕັ້ງແຕ່ປີ 2009 (Herrmann, 2017). ໃນຂະແໜງປ່າໄມ້ ແລະ ກະສິກຳດ້ານປ່າໄມ້, ການລົງທຶນສ່ວນໃຫຍ່ໃນປະເທດ Sierra Leone ແມ່ນບໍ່ດົນມານີ້,ໂດຍບໍ່ມີຂໍ້ມູນກ່ຽວກັບລະດັບຂອບເຂດ ທີ່ພວກເຂົາສົ່ງເສີມຮູບແບບການລົງທຶນຢ່າງມີຄວາມຮັບຜິດຊອບ.

ໃນປະເທດ Sierra Leone, ນະໂຍບາຍ ແລະ ແນວທາງທີ່ສົ່ງເສີມຮູບແບບການລົງທຶນຢ່າງມີຄວາມຮັບຜິດຊອບ, ເຊັ່ນວ່າ ຮູບແບບການຜະລິດກະສິກຳຕາມສັນຍາ (Out-grower scheme), ບໍ່ຄ່ອຍໄດ້ຮັບການຈັດຕັ້ງປະຕິບັດ ແລະ ການລົງທຶນທີ່ມີການນຳໃຊ້ທີ່ດິນສ່ວນໃຫຍ່ແມ່ນໄດ້ນຳໃຊ້ຮູບແບບທຸລະກິດ ການເຮັດສັນຍາຍ່ອຍລະຫວ່າງບໍລິສັດກັບຊາວກະສິກອນ (nucleus estate) ການປູກຕົ້ນໄມ້ອຸດສະຫະກຳໂດຍອີງໃສ່ການເຊົ່າທີ່ດິນຂະໜາດໃຫຍ່ (Herrmann, 2017). ເຈົ້າຂອງທີ່ດິນຊຸມຊົນແມ່ນບໍ່ໄດ້ເຂົ້າຮ່ວມໃນການເຈລະຈາສຳປະທານ ແລະ ໄດ້ມີການເຊັນກັນໃນບັນດາຫົວໜ້າເຂດ, ລັດຖະບານ, ແລະ ບໍລິສັດ. ສຳລັບໂຄງການນ້ຳມັນປາມ, ສັນຍາການເຊົ່າທີ່ດິນ ແມ່ນມັກຈະເປັນໄລຍະຍາວ, ເຊິ່ງຍາວນານເຖິງ









50 ປີໂດຍສາມາດຕໍ່ໄດ້ເພີ່ມເຕີ່ມອີກ 21 ປີ. ສັນຍາມີການຈ່າຍຄ່າຊົດເຊີຍຜົນລະປູກ ແລະ ການເຊົ່າທີ່ດິນໃນມູນຄ່າທີ່ຕໍ່າ ແລະ ບໍ່ພຽງພໍ. ການອະນຸມັດໂຄງການເຫຼົ່ານີ້ແມ່ນຂາດຄວາມໂປ່ງໃສ ແລະ ຂາດການມີສ່ວນຮ່ວມ ແລະ ຂາດເຄື່ອງມືສໍາລັບ ຊຸມຊົນ, ໜ່ວຍງານພັກລັດ ແລະ ໜ່ວຍງານທີ່ບໍ່ແມ່ນພາກລັດ ໃນການຕິດຕາມກວດກາ ແລະ ບັງຄັບໃຊ້ກົດໝາຍໃນການປະຕິບັດຂໍ້ຕົກລົງ ແມ່ນມີຈໍາກັດ (ibid). ໃນລະດັບຊຸມຊົນ, ຊາວກະສິກອນຂະໜາດນ້ອຍ ຂາດຄວາມຮູ້ກ່ຽວກັບການປະຕິບັດດ້ານກະສິກໍາທີ່ດີ, ບໍ່ມີຂັ້ນຕອນທີ່ເປັນທາງການສໍາລັບຊາວກະສິກອນ ໃນການຈົດທະບຽນສິດໃນການນໍາໃຊ້ທີ່ດິນຂອງພວກເຂົາ ແລະ ຊາວກະສິກອນກໍ່ມີການເຂົ້າເຖິງຕະຫຼາດທີ່ຈໍາກັດ, ເຊິ່ງສ່ວນໜຶ່ງແມ່ນເນື່ອງຈາກຜົນຜະລິດທີ່ມີຄຸນນະພາບຕໍ່າ ແລະ ການເຂົ້າເຖິງຖະໜົນຫົນທາງທີ່ຫຍຸ້ງຍາກລໍາບາກ.

ເຖິງຢ່າງໃດກໍ່ຕາມ, ຮູບແບບການປະຕິບັດທີ່ດີກ່ວາ ແມ່ນກໍາລັງເລີ່ມຈະມີການປະຕິບັດ ຕາມທີ່ໄດ້ອະທິບາຍໄວ້ໃນພາກນີ້ເຊິ່ງລວມມີການໄດ້ຮັບການຈັດຕັ້ງປະຕິບັດໂດຍ: ບໍລິສັດ Randlyn Holdings Limited, ເຊິ່ງເປັນບໍລິສັດ ຜະລິດໂກໂກ້ໂດຍການໃຊ້ການປະສົມປະສານຂອງຮູບ ແບບການຈັດສັນທີ່ດິນໃຫ້ແກ່ຜູ້ຜະລິດຂະໜາດນ້ອຍ (block farming model) ແລະ ຮູບແບບການຜະລິດ ກະສິກໍາຕາມສັນຍາ (Outgrower scheme); ບໍລິສັດ Goldtree Limited ຜະລິດນໍ້າມັນປາມໂດຍນໍາໃຊ້ຮູບແບບທຸລະກິດ ການເຮັດສັນຍາຍ່ອຍລະຫວ່າງບໍລິສັດກັບ ຊາວກະສິກອນ (nucleus estate out grower);[4] ບໍລິສັດ Lizard Earth,ວິສາຫະກິດ ເພື່ອສັງຄົມທີ່ຜະລິດ ໂກໂກ້ (cocoa)ໂດຍໃຊ້ຮູບແບບການຜະລິດ ແລະ ການຄຸ້ມຄອງຢ່າງມີຄວາມຮັບຜິດຊອບ; ແລະ ບໍລິສັດ ປ່າໄມ້ (Miro Forestry) ປະຕິຕາມຮູບແບບທຸລະກິດການເຮັດສັນຍາຍ່ອຍລະຫວ່າງ ບໍລິສັດກັບຊາວກະສິກອນ (nucleus estate outgrower) ເຊິ່ງຜະລິດຕະພັນໄມ້. ຮູບແບບເຫຼົ່ານີ້ ຊອກຫາວິທີການທີ່ກວ້າງຂວາງ ໃນການເຂົ້າເຖິງທີ່ດິນ, ທຶນ, ທັກສະທາງດ້ານກະສິກໍາ ແລະ ຜົນປະໂຫຍດທາງການເງິນ ໃຫ້ແກ່ພາກສ່ວນກ່ຽວຂ້ອງໃນຂັ້ນທ້ອງຖິ່ນ. ການສຶກສາກໍລະນີເຫຼົ່ານີ້ໄດ້ແມ່ນອີງໃສ່ຂໍ້ມູນການສຶກສາຄົ້ນຄວ້າຂອງນັກຄົ້ນຄວ້າ, ຄຽງຄູ່ກັບການ ສົນທະນາ ແລະ ການສໍາພາດຜູ້ຕາງໜ້າຂອງບໍລິສັດ.

**ບໍລິສັດ ແຣນດຣິນ ໂຮນດິງ RANDLYN HOLDINGS LIMITED (RHL)** ແມ່ນບໍລິສັດ ຜະລິດໂກໂກ້ ທີ່ດໍາເນີນການຜະລິດຢູ່ເມືອງ ໄກລາຮັນ (Kailahun) ແລະ ເຄເນມາ (Kenema) ໃນພາກຕາເວັນອອກຂອງປະເທດ ເຊຍຣາ ລີອອນ (Sierra Leone) ນັບຕັ້ງແຕ່ປີ 2018. ບໍລິສັດ RHL ໄດ້ດໍາເນີນການຜະລິດຢູ່ຫຼາຍກວ່າ 1,000 ເຮັກຕາ, ເຊິ່ງກວມເອົາ 30 ຊຸມຊົນ,ໂດຍນໍາໃຊ້ຮູບແບບການຈັດສັນທີ່ດິນໃຫ້ແກ່ຜູ້ຜະລິດຂະໜາດນ້ອຍ (block farming model) ແລະ ຮູບແບບການຜະລິດກະສິກໍາຕາມສັນຍາ (Outgrower scheme). ຮູບແບບທຸລະກິດ ຂອງບໍລິສັດ RHL ປະກອບມີສັນຍາການເຊົ່າທີ່ດິນ 15 ປີ ລະຫວ່າງບໍລິສັດ ແລະ ເຈົ້າຂອງທີ່ດິນຂອງສວນປູກເກົ່າ ແລະ ບໍ່ເປັນຜົນຜະລິດ, ໄດ້ຮັບການອອກແບບມາເພື່ອຟື້ນຟູ ແລະ ປັບປຸງສະມັດຕະພາບການຜະລິດຂອງທີ່ດິນ. ໃນຮູບແບບນີ້, ບໍລິສັດໄດ້ເຊົ່າ ແລະ ຄຸ້ມຄອງຕອນດິນຫຼາຍຕອນ ເປັນໄລຍະເວລາທີ່ມີການກໍານົດໃດໜຶ່ງ (ເຊິ່ງມັກມີການຕໍ່ເວລາຕື່ມໄດ້) ພາຍໃຕ້ຂໍ້ຕົກລົງ ທີ່ມີການແບ່ງປັນຜົນປະໂຫຍດກັບກຸ່ມຊຸມຊົນທີ່ແຕກຕ່າງກັນ, ລວມທັງເຈົ້າຂອງທີ່ດິນ, ຜູ້ນໍາໃຊ້ທີ່ດິນ, ກຸ່ມຊາວໜຸ່ມ, ຫຼື ຜູ້ຕາງໜ້າຊຸມຊົນອື່ນໆ (Herrmann, 2017). ການລົງທຶນຕາມປົກກະຕິ ແມ່ນປະກອບດ້ວຍຫຼາຍຕອນດິນ ເຊິ່ງບໍລິຫານໂດຍຫົວໜ້າກຸ່ມຊຸມຊົນ ທີ່ໄດ້ຮັບການຝຶກອົບຮົມ ແລະ ການຊ່ວຍເຫຼືອດ້ານວິຊາການຈາກບໍລິສັດ. ກ່ອນຈະມີຂໍ້ຕົກລົງກັນ ກ່ຽວກັບການແບ່ງປັນລາຍໄດ້ທີ່ ມີຜົນບັງຄັບໃຊ້ພາຍຫຼັງການເກັບກ່ຽວຄັ້ງທໍາອິດ, ກຸ່ມຊາວໜຸ່ມໄດ້ຮັບການຈ້າງງານແບບປົກກະຕິ ແລະ ການຊົດເຊີຍ ຄ່າແຮງງານ ຫຼື ການຊົດເຊີຍທີ່ເປັນຜົນປະໂຫຍດທາງອື່ນ (ibid.).

ໃນຂະນະທີ່ມັນອາດຈະໄວເກີນໄປທີ່ຈະກໍານົດຜົນໄດ້ຮັບທາງດ້ານເສດຖະກິດ-ສັງຄົມ ຈາກການນໍາໃຊ້ຮູບແບບການຈັດສັນທີ່ດິນ ໃຫ້ແກ່ຜູ້ຜະລິດຂະໜາດນ້ອຍ (block farming model) ໃນປະເທດ ເຊຍຣາ ລີອອນ (Sierra Leone), ຊຸມຊົນອາດຈະໄດ້ຮັບຜົນປະໂຫຍດຈາກການເຊົ່າທີ່ດິນແບບໄລຍະທີ່ສັ້ນກວ່າ, ເຊິ່ງສາມາດຫຼຸດຜ່ອນການເອື່ອຍອີງຂອງຊຸມຊົນຕໍ່ບໍລິສັດ, ຫຼຸດຜ່ອນຄວາມສ່ຽງ

---

[4] ຮູບແບບສັນຍາການຜະລິດໂດຍບໍລິສັດເປັນເຈົ້າຂອງແລະບໍລິຫານພື້ນທີ່ເອງ (Nucleus estate outgrower) ແມ່ນກ່ຽວຂ້ອງກັບສວນປູກຂະໜາດໃຫຍ່ເຊິ່ງຮັບປະກັນການສະໜອງວັດຖຸດິບຂັ້ນຕໍ່າໃຫ້ແກ່ບໍລິສັດ. ບໍລິສັດຈັດຊື້ວັດຖຸດິບທີ່ເຫຼືອຈາກບັນດາຜູ້ຜະລິດຂະໜາດ ໜ້ອຍຜູ້ທີ່ເຊື່ອມໂຍງຜ່ານການເຮັດສັນຍາການຜະລິດໂດຍຜ່ານແກນກາງ.

ໃນການຄອບຄອງທີ່ດິນ, ແລະ ເຮັດໃຫ້ຊຸມຊົນມີອຳນາດສູງຂຶ້ນຕໍ່ການລົງທຶນ, ລວມທັງເຈົ້າຂອງທີ່ດິນ ສາມາດຕັດສິນໃຈວ່າພວກເຂົາຕ້ອງການເຮັດວຽກ ໃຫ້ບໍລິສັດ ຫຼື ເລືອກເຮັດວຽກກັບພາກສ່ວນອື່ນ. ພາຍຫຼັງ 15 ປີ, ບໍລິສັດ RHL ຈະມອບທີ່ດິນຄືນໃຫ້ແກ່ເຈົ້າຂອງທີ່ດິນ, ຜູ້ທີ່ຈະສືບຕໍ່ຂາຍຜົນຜະລິດໃຫ້ແກ່ ບໍລິສັດ RHL ພາຍໃຕ້ຂໍ້ຜູກພັນສັນຍາການຜະລິດກະສິກຳ (Contract Farming). ການຈັດສັນການແບ່ງປັນຜົນປະໂຫຍດລະຫວ່າງ ບໍລິສັດ ແລະ ເຈົ້າຂອງທີ່ດິນແມ່ນເຈົ້າຂອງທີ່ດິນໄດ້ຮັບ 60 ເປີເຊັນຂອງໂກໂກ້ທີ່ເກັບກ່ຽວໃນຂະນະທີ່ບໍລິສັດໄດ້ຮັບ 30 ເປີເຊັນ ແລະ ອຳນາດການປົກຄອງທ້ອງຖິ່ນໄດ້ຮັບ 10 ເປີເຊັນ (ibid). ຮູບແບບການຜະລິດກະສິກຳໂດຍການ ຈັດສັນທີ່ດິນໃຫ້ແກ່ຜູ້ຜະລິດຂະໜາດນ້ອຍ (block farming model) ຂອງບໍລິສັດ RHL ໄດ້ສ້າງວຽກເຮັດງານທຳທົ່ວໄປ ແລະ ແບບບໍ່ເຕັມເວລາ ໃຫ້ແກ່ຜູ້ນຳໃຊ້ທີ່ດິນໃນທ້ອງຖິ່ນດ້ວຍການປະສົມປະສານຂອງການ ໄດ້ຮັບຄ່າແຮງງານ ແລະ ການຊົດເຊີຍຄ່າແຮງງານເປັນ ສະບຽງອາຫານ. ກົນໄກການແບ່ງປັນຜົນປະໂຫຍດຂອງ ບໍລິສັດ RHL ສະແດງໃຫ້ເຫັນການປະຕິບັດທີ່ດີ ໃນການຮັບປະກັນການມີສ່ວນຮ່ວມຂອງຊຸມຊົນ ແລະ ຜົນປະໂຫຍດທາງສັງຄົມ ສຳລັບທຸກຄົນ (ລວມທັງຜູ້ທີ່ນຳໃຊ້ທີ່ດິນ) ແລະ ຊ່ວຍໃຫ້ບໍລິສັດສາມາດພັດທະນາ, ຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາກົນໄກການແບ່ງປັນຜົນປະໂຫຍດ ທີ່ມີຄວາມໂປ່ງໃສ, ຄວາມສະເໝີພາບ ແລະ ຄວາມເທົ່າທຽມລະຫວ່າງ ຍິງ-ຊາຍ ເຊິ່ງພິຈາລະນາຜົນປະໂຫຍດຂອງທຸກພາກສ່ວນທີ່ກ່ຽວຂ້ອງ.

ບໍລິສັດ RHL ສະໜັບສະໜູນ ການເສີມຂະຫຍາຍ ແລະ ການຝຶກອົບຮົມ ໃຫ້ແກ່ຊາວກະສິກອນ 5,000 ຄົນ, ຜູ້ທີ່ເປັນແຫຼ່ງສະໜອງ ໂກໂກ້ ແລະ ເມັດກາເຟ ໃຫ້ແກ່ ບໍລິສັດ RHL, ເຊິ່ງປະກອບສ່ວນເຂົ້າໃນຫຼັກການ 7 ຂອງ CFS-RAI. ໃນຈຳນວນຊາວກະສິກອນທັງໝົດ, ຊາວກະສິກອນຈຳນວນ 1,750 ແມ່ນໄວໜຸ່ມ ທີ່ເປັນເພດຍິງ ແລະ ຊາຍ, ເຊິ່ງເຮັດໜ້າທີ່ເປັນຜູ້ອອກແຮງງານໃນສວນ. ຊາວໜຸ່ມຫຼາຍຄົນແມ່ນໄດ້ຮັບຜົນປະໂຫຍດຈາກການຈ້າງງານ ແລະ ຊາວໜຸ່ມຈຳນວນ 350 ຄົນມີດິນກະສິກຳຂອງຕົນເອງ, ເຊິ່ງປະກອບສ່ວນເຂົ້າໃນຫຼັກການ ທີ່ 4 ຂອງ CFS-RAI. ຮູບແບບທຸລະກິດທີ່ເອົາການມີສ່ວນຮ່ວມຂອງຊາວກະສິກອນເປັນພື້ນຖານ (farmer-centred inclusive business model) ຂອງບໍລິສັດ RHL ໄດ້ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນ ແລະ ຜົນປະໂຫຍດທາງສັງຄົມ ໂດຍຜ່ານສູນໃຫ້ການຊ່ວຍເຫຼືອຊາວກະສິກອນ[5] - ເຊິ່ງເປັນສູນກາງໃນການໃຫ້ບໍລິການຊ່ວຍເຫຼືອຢ່າງຄົບຖ້ວນສົມບູນໃຫ້ແກ່ຊາວກະສິກອນ ເພື່ອປັບປຸງ ແລະ ເພີ່ມທະວີລະບົບການການຜະລິດກະສິກຳ ຂອງພວກເຂົາ. ອົງການ Solidaridad, ເຊິ່ງເປັນອົງການຈັດຕັ້ງສາກົນ ທີ່ບໍ່ຂຶ້ນກັບລັດຖະບານ (International NGO) ໂດຍມີທຶນສະໜັບສະໜູນຈາກລັດຖະບານໂຮນລັງ, ສະໜັບສະໜູນ 4 ບໍລິສັດພາກເອກະຊົນ (ລວມທັງ ບໍລິສັດ RHL) ໂດຍຜ່ານທຶນສະໜັບສະໜູນ ເພື່ອສ້າງຕັ້ງ ແລະ ດຳເນີນການສູນສົ່ງເສີມ. ສູນສົ່ງເສີມດັ່ງກ່າວແມ່ນດຳເນີນການແບບວິສາຫະກິດຈຸນລະພາກໃນຂັ້ນທ້ອງຖິ່ນ ເຊິ່ງສະໜອງຄວາມຮູ້, ທັກສະ, ວັດຖຸດິບ, ການບໍລິການການສົ່ງເສີມ, ແຮງງານ ແລະ ການເຂົ້າເຖິງການບໍລິການທາງການເງິນ ແລະ ຕະຫຼາດ ໃຫ້ແກ່ຊາວກະສິກອນ ພ້ອມທັງການບໍລິການຊື້ ແລະ ການເກັບຊື້. ຕັ້ງແຕ່ປີ 2018, ບໍລິສັດ RHL ໄດ້ສ້າງຕັ້ງ ແລະ ບໍລິຫານສູນສົ່ງເສີມ 6 ແຫ່ງ ໃນພາກຕາເວັນອອກຂອງປະເທດ ເຊຍຣາ ລີອອນ (Sierra Leone) ທີ່ໃຫ້ບໍລິການແກ່ຊາວກະສິກອນຈຳນວນ 5,000 ຄົນ ຜູ້ທີ່ປູກ ໂກໂກ້, ກາເຟ, ຕົ້ນນ້ຳມັນປາມ ແລະ ພືດລົ້ມລຸກອື່ນໆ, ນຳໄປສູ່ການ ເພີ່ມສະມັດຕະພາບການຜະລິດ, ລາຍຮັບທີ່ເພີ່ມຂຶ້ນ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນ.

**ບໍລິສັດ ໂກລທຣີ (GOLDTREE COMPANY LIMITED)** ແມ່ນຜູ້ຜະລິດນ້ຳມັນປາມ ຂະໜາດໃຫຍ່ ທີ່ຕັ້ງຢູ່ເມືອງ ໄກລາຮັນ (Kailahun), ທາງພາກຕາເວັນອອກຂອງປະເທດ ເຊຍຣາ ລີອອນ (Sierra Leone). ໃນປີ 2007, ບໍລິສັດໄດ້ເປີດຕົວ ຮູບແບບການຜະລິດກະສິກຳຕາມສັນຍາ (Outgrower scheme) ເຊິ່ງມີເປົ້າໝາຍໃສ່ຊາວກະສິກອນ ທີ່ເປັນຜູ້ຜະລິດຂະໜາດນ້ອຍທີ່ເປັນເອກະລາດ ຜູ້ທີ່ບໍ່ໄດ້ລວມຢູ່ໃນການຜະລິດນ້ຳມັນປາມຂະໜາດໃຫຍ່. ບໍລິສັດ Goldtree ໄດ້ໃຫ້ການຝຶກອົບຮົມພິເສດແກ່ຊາວກະສິກອນ ກ່ຽວກັບການປະຕິບັດກະສິກຳທີ່ດີ ໂດຍສຸມໃສ່ຂະບວນການຍັ້ງຢືນກະ

[5] ຮູບແບບນີ້ ໄດ້ຮັບການພັດທະນາໂດຍ Solidaridad ແລະ ໄດ້ຮັບການຈັດຕັ້ງປະຕິບັດ ແລະ ປັບໃຊ້ໃນຫຼາຍປະເທດໃນອາຟຣິກາຕາເວັນຕົກ.

ສິກຳອິນຊີ ແລະ ສະມາຄົມການຜະລິດນ້ຳມັນປາມແບບຍືນຍົງ (RSPO). ໂຄງການໄດ້ສະໜັບສະໜູນໂຄງການຂະຫຍາຍຮູບແບບການຜະລິດກະສິກຳ ຕາມສັນຍາ (Outgrower scheme) ແລະ ສົ່ງເສີມການເຂົ້າເຖິງຕະຫຼາດ. ໂຄງການໄດ້ປະຕິບັດໂດຍຜ່ານການ ປູກຈິດສຳນຶກ ແລະ ການໂຄສະນາສຶກສາອົບຮົມທີ່ມີ ຄວາມຍືນຍົງ ໂດຍຍົກໃຫ້ເຫັນເຖິງຜົນປະໂຫຍດຂອງກຸ່ມຊາວກະສິກອນທີ່ໄດ້ຮັບການຈັດຕັ້ງ, ລວມທັງອຳນາດໃນການຕໍ່ລອງລາຄາທີ່ດີກວ່າ ແລະ ການເຈລະຈາໃນການຊື້ວັດຖຸດິບ ແລະ ການບໍລິການ ໃຫ້ໄດ້ລາຄາທີ່ຫຼຸດລົງ. ຊາວກະສິກອນຜູ້ທີ່ມີຄວາມສົນໃຈ ແມ່ນໄດ້ຮັບການສະໜັບສະໜູນ ໂດຍຜ່ານການປະຊຸມສົ່ງເສີມ ແລະ ການຊ່ວຍເຫຼືອໃນການສ້າງຕັ້ງກຸ່ມ. ພວກເຂົາໄດ້ຮັບການຝຶກອົບຮົມ ແລະ ສະໜັບສະໜູນ ໃຫ້ເລືອກເອົາຜູ້ບໍລິຫານຜູ້ທີ່ຈະໄດ້ຮັບການຝຶກອົບຮົມເພີ່ມເຕີມ ກ່ຽວກັບວິທີການບໍລິຫານກຸ່ມຂອງພວກເຂົາ. ຜ່ານໂຄງການ ການບໍລິການການສົ່ງເສີມ, ບໍລິສັດ ໄດ້ຈັດການສຶກສາໃນພາກສະໜາມໃຫ້ແກ່ຊາວກະສິກອນ ເຊິ່ງສະໜອງການຝຶກອົບຮົມກ່ຽວກັບການປະຕິບັດເຕັກນິກກະສິກຳທີ່ດີທີ່ສຸດ,ການຜະລິດກະສິກຳເປັນທຸລະກິດ ແລະ ການບໍລິຫານການເງິນດ້ານກະສິກຳ. ການສະໜັບສະໜູນ ການສົ່ງເສີມປະກອບມີການລົງຢ້ຽມຢາມສະຖານທີ່ຜະລິດກະສິກຳ, ການສາທິດການປະຕິບັດການນຳໃຊ້ເຕັກໂນໂລຢີໃໝ່ ແລະ ແນວຄວາມຄິດກ່ຽວກັບການເຮັດກະສິກຳ, ການນຳສະເໜີຜະລິດຕະພັນຂອງພືດໃໝ່ ແລະ ການນຳໃຊ້ຝຸ່ນຊີວະພາບເພື່ອເພີ່ມຜົນຜະລິດ ແລະ ການເຊື່ອມໂຍງຊາວນາກັບຜູ້ສະໜອງເຄື່ອງມືແລະວັດຖຸດິບ ແລະ ການຕະຫຼາດໃໝ່. ບໍລິສດ Goldtree ປະຕິບັດ ກົນໄກການແກ້ໄຂຄຳຮ້ອງທຸກ ໂດຍການຈັດກອງປະຊຸມແຕ່ລະໄຕມາດ ກັບບັນດາຫົວໜ້າເຂດທີ່ສຳຄັນ, ເຈົ້າຂອງທີ່ດິນ ແລະ ອຳນາດການປົກຄອງທ້ອງຖິ່ນ ເພື່ອປຶກສາຫາລື ກ່ຽວກັບການລົງທຶນ ແລະ ການມີສ່ວນຮ່ວມຂອງຊຸມຊົນ ໃນຂະນະທີ່ແກ້ໄຂບັນດາຄຳຮ້ອງທຸກ ແລະ ຂໍ້ຂັດແຍ່ງທີ່ກ່ຽວຂ້ອງກັບການຈ່າຍຄ່າເຊົ່າພາຍໃນ ຄອບຄົວ (ຫຼັກການທີ່ 10 ຂອງ CFS-RAI). ການຮ້ອງທຸກທົ່ວໄປ ແມ່ນປະກອບມີການສະໜອງອຸປະກອນສິ່ງຂອງ ແລະ ການບໍລິການທີ່ຊັກຊ້າ, ການຊັກຊ້າໃນການຊຳລະເງິນສຳລັບ ກຸ່ມໝາກໄມ້ສົດ, ທີ່ມີການປະຕິບັດທີ່ບໍ່ຖືກຕ້ອງ ໂດຍພະນັກງານຈັດຊື້ຂອງບໍລິສັດ (ລວມທັງການປັບຂະໜາດ, ການແຈ້ງ ແລະ ການບັນທຶກລາຍງານ ນ້ຳໜັກຂອງປະເພດໝາກໄມ້ສົດທີ່ຕ່ຳກ່ວາຄວາມເປັນຈິງ), ຄວາມຊັກຊ້າໃນການຂົນສົ່ງໝາກໄມ້ທີ່ໄດ້ເກັບກ່ຽວແລ້ວ ເຊິ່ງນຳໄປສູ່ການສູນເສຍນ້ຳໜັກ ແລະ ໃນກໍລະນີຮ້າຍແຮງ ແມ່ນການເໜົ່າເປື່ອຍຂອງໝາກໄມ້.

ຮູບແບບການຜະລິດກະສິກຳຕາມສັນຍາ (Outgrower scheme) ຂອງບໍລິສັດ ແມ່ນຕົວຢ່າງທີ່ດີ ຂອງການລົງທຶນ ທີ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດແບບຍືນຍົງ ແລະ ເປັນເອກະພາບ ແລະ ນຳໄປສູ່ການລົບລ້າງຄວາມທຸກຍາກ ( ຫຼັກການ ທີ 2 ຂອງ CFS-RAI) ໃນຂະນະທີ່ຍັງເຄົາລົບຕໍ່ສິດຄອບຄອງ ການນຳໃຊ້ທີ່ດິນ ແລະ ປ່າໄມ້ (ຫຼັກການ ທີ 5 ຂອງ CFS-RAI). ບໍລິສັດ ໄດ້ສະໜັບສະໜູນການກຳນົດແຜນທີ່ ແລະ ການຈົດທະບຽນ ສວນກະສິກຳ 5,400 ແຫ່ງ ໃນປີ 2017 ເພື່ອແກ້ໄຂ ແລະ ຫຼຸດຜ່ອນຄວາມຂັດແຍ້ງເຂດແດນ ພາຍໃນຄອບຄົວ ແລະ ພາຍໃນຊຸມຊົນ ຂອງຊາວກະສິກອນທີ່ເປັນຜົນມາຈາກທີ່ດິນຕາມປະເພນີທີ່ບໍ່ທັນມີການກຳນົດເຂດແດນ.

ຜົນກະທົບໃນທາງບວກຂອງ ບໍລິສັດ Goldtree ປະກອບມີ ການຢັ້ງຢືນກະສິກຳປອດສານພິດ ແລະ ການຢັ້ງຢືນຂອງສະມາຄົມການຜະລິດນ້ຳມັນປາມແບບຍືນຍົງ (RSPO) ຂອງຊາວກະສິກອນຜູ້ຜະລິດຂະໜາດນ້ອຍ ຈຳນວນ 12,000 ຄົນ ແລະ ການເຂົ້າເຖິງຕະຫຼາດສຳລັບຊາວກະສິກອນຂະໜາດນ້ອຍ ຈຳນວນ 15,000 ຄົນ. ຊາວ ກະສິກອນຍັງໄດ້ຮັບຜົນປະໂຫຍດຈາກການປັບປຸງຄວາມໝັ້ນຄົງທາງດ້ານສະບຽງອາຫານ ໂດຍຜ່ານການສະໜອງພືດທີ່ເປັນອາຫານໃຫ້ແກ່ຊາວກະສິກອນໃນການປູກພືດ ແຊມໃນສວນປູກໄມ້ອຸດສະຫະກຳ.  ນອກຈາກນັ້ນ, ບໍລິສັດ ຍັງສະໜັບສະໜູນການປົກປ້ອງ ເນື້ອທີ່ດິນ ຈຳນວນ 200 ເຮັກຕາ ໃຫ້ເປັນພື້ນທີ່ທີ່ມີມູນຄ່າໃນການອະນຸລັກສູງ (HCVA) ເຊັ່ນ: ເຂດພື້ນທີ່ປ່າໄມ້ສັກສິດ, ເຂດຕົ້ນນ້ຳ ແລະ ສະຖານທີ່ນິເວດວິທະຍາ ທີ່ມີຄວາມອ່ອນໄຫວ (ຫຼັກການທີ່ 7 ຂອງ CFS-RAI), ເຊິ່ງມີຄວາມສຳຄັນເປັນພິເສດເນື່ອງຈາກການລົງທຶນແມ່ນໃກ້ກັບປ່າ ໂກລາ (Gola) (Herrmann, 2017). ສຳລັບຊາວກະສິກອນ ຜູ້ທີ່ຈະສະໜອງຜົນຜະລິດຕາມສັນຍາທີ່ຈະໄດ້ຮັບໃບຢັ້ງຢືນ RSPO, ບໍລິສັດGoldtree ຈະດຳເນີນການ ປະເມີນຜົນ HCVA ເພື່ອຮັບປະກັນໃຫ້ຊາວກະສິກອນບໍ່ໄດ້ຜະລິດຢູ່ຕາມເປີ້ນພູ ຫຼື ເນີນພູ. ສຳລັບພື້ນທີ່ທີ່ມີ ເນື້ອທີ່ຕ່ຳກວ່າ 500 ເຮັກຕາ, ບໍລິສັດ Goldtree ຈະດຳເນີນການປະເມີນຜົນ HCVA ຕາມຮູບແບບທີ່ມີ ການຢັ້ງຢືນ ຂອງ RSPO ໂດຍການ







ຈັດຕັ້ງຊາວກະສິກອນເປັນກຸ່ມເຂດການຜະລິດ ແລະ ລົງຢັ້ງຢາມພວກເຂົາ ເພື່ອກໍານົດຄວາມເໝາະສົມຂອງດິນຂອງພວກເຂົາສໍາລັບການຍັ້ງຢືນ.

ໂດຍລວມແລ້ວ, ການລົງທຶນຂອງ ບໍລິສັດ Goldtree ແມ່ນຊ່ວຍໃນການຫຼຸດຜ່ອນຄວາມທຸກຍາກດ້ວຍຫຼາຍວິທີ: (i) ໂດຍການສະໜອງວຽກເຮັດງານທໍາແບບຍືນຍົງແກ່ປະຊາຊົນທີ່ອາໄສຢູ່ເຂດຊົນນະບົດທີ່ໃກ້ຄຽງທີ່ມີໂອກາດການຈ້າງງານໜ້ອຍ. ໂຄງການໄດ້ສ້າງລາຍຮັບທີ່ເປັນປົກກະຕິ ປະກອບສ່ວນເຂົ້າໃນເສດຖະກິດທ້ອງຖິ່ນໃນຂະນະທີ່ການເກັບກ່ຽວ ແລະ ການຊໍາລະຄ່າໝາກໄມ້ສົດແມ່ນມີການປະຕິບັດທຸກໆສອງຫາສີ່ອາທິດ ຕະຫຼອດປີ; (ii) ໂດຍການສະໜັບສະໜູນ ການປູກພືດທົດແທນພື້ນທີ່ເກົ່າໂດຍຜ່ານຮູບແບບການຜະລິດກະສິກໍາ ຕາມສັນຍາ (Outgrower scheme); (iii) ໂດຍການຊ່ວຍເຫຼືອຊາວກະສິກອນໃຫ້ມີລາຍໄດ້ ແລະ ມີອາຫານຈາກການປູກພືດແຊມໃນສວນປູກຕົ້ນໄມ້ອຸດສະຫະກໍາໃນຂະນະທີ່ລໍຖ້າຜົນຜະລິດຈາກການປູກພືດອຸດສະຫະກໍາ; ແລະ (iv) ໂດຍການສະໜອງຍຸດທະສາດໄລຍະຍາວ ເພື່ອສະໜັບສະໜູນການພັດທະນາຊຸມຊົນ ແລະ ການຝຶກອົບຮົມເພື່ອການຈ້າງງານ.

**ບໍລິສັດ ລີຊາດ ເອີທ (LIZARD EARTH LIMITED)** ແມ່ນບໍລິສັດ ປູກ ແລະ ເກັບຊື້ ໂກໂກ້ ທີ່ມີຄວາມຮັບຜິດຊອບ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2018 ແລະ ມີການດໍາເນີນການ ຢູ່ເມືອງ ໄກລາຮັນ (Kailahun) ໃນພາກຕາເວັນອອກຂອງປະເທດ ເຊຍຣາ ລີອອນ (Sierra Leone). ບໍລິສັດ Lizard Earth ມີການສົ່ງເສີມ ການມີສ່ວນຮ່ວມ ຂອງຊຸມຊົນທ້ອງຖິ່ນ ແລະ ຊາວກະສິກອນທີ່ເປັນນິຕິບຸກຄົນໃນການຜະລິດ ໝາກໂກໂກ້ ໂດຍການໃຫ້ບໍລິການແກ່ຊາວກະສິກອນທີ່ເຂົ້າຮ່ວມ, ການສ້າງຂີດຄວາມສາມາດຂອງສະຖາບັນ ແລະ ການພັດທະນາ ການຄ້າໃນສາມເຂດຄຸ້ມຄອງ.

ດ້ວຍການສຸມໃສ່ການປູກໂກໂກ້ອິນຊີ, ບໍລິສັດ Lizard Earth ກໍາລັງລອງນໍາໃຊ້ ຮູບແບບການຄຸ້ມຄອງບໍລິຫານ ແລະ ຜະລິດ ຢ່າງມີຄວາມຮັບຜິດຊອບ (ເບິ່ງຫ້ອງ 7). ບໍ່ຄືກັບ ຮູບແບບການຈັດສັນທີ່ດິນໃຫ້ແກ່ຜູ້ຜະລິດ ຂະໜາດນ້ອຍ (block farming model) ໃນເບື້ອງຕົ້ນ ເຊິ່ງ ບໍລິສັດເຮັດສັນຍາຕົກລົງພຽງແຕ່ກັບບັນດາ ຄອບຄົວທີ່ເປັນເຈົ້າຂອງທີ່ດິນເທົ່ານັ້ນ, ຮູບແບບການຜະລິດ ແລະ ການຄຸ້ມຄອງບໍລິຫານຢ່າງມີຄວາມຮັບຜິດຊອບ ແມ່ນເນັ້ນໜັກໃສ່ການມີສ່ວນຮ່ວມ ທີ່ມີຄວາມສະເໝີພາບ ແລະ ນໍາໃຊ້ຫຼັກການການຍິນຍອມຢ່າງເປັນອິດສະຫຼະ, ໄດ້ຮັບການເຫັນດີເຫັນພ້ອມລ່ວງໜ້າ ແລະ ມີການແຈ້ງຂໍ້ມູນທີ່ຄົບຖ້ວນ (FPIC) ຂອງຊຸມຊົນທັງໝົດ (ລວມທັງຜູ້ນໍາໃຊ້ທີ່ດິນ ແລະ ຄົວເຮືອນທີ່ບໍ່ມີທີ່ດິນ) (Herrmann, 2017). ຂະບວນການມີສ່ວນຮ່ວມຂອງຊຸມຊົນ ແລະ ການຄອບຄອງທີ່ດິນ ຂອງບໍລິສັດ ແມ່ນໄດ້ມີການດໍາເນີນມາເປັນເວລາ 3 ປີ ສໍາລັບການ

ກໍານົດ ແລະ ການສ້າງແຜນ ທີ່ຂອງສິດຄອບຄອງນໍາໃຊ້ຂອງຜູ້ນໍາໃຊ້ທີ່ດິນ ແລະ ການເຈລະຈາຢ່າງລະອຽດກ່ຽວກັບການຈັດຕັ້ງປະຕິບັດ ຮູບແບບການຄຸ້ມຄອງບໍລິຫານ ແລະ ການຜະລິດຂອງບໍລິສັດ Lizard Earth. ຊຸມຊົນ ແລະ ກຸ່ມອົງການຈັດຕັ້ງສັງຄົມຕ່າງໆ ສົ່ງເສີມການຈັດຕັ້ງເພື່ອປົກປ້ອງຜົນປະໂຫຍດຂອງຄອບຄົວຜູ້ທີ່ເປັນເຈົ້າຂອງທີ່ດິນ ແລະ ການເວນຄືນ ແລະ ຕິດຕາມການປະຕິບັດທີ່ດີທີ່ສຸດ. ດັ່ງນັ້ນ, ການຍຶດໝັ້ນ ຫຼັກການທົ່ວໄປ ທີ 1 ແລະ 2 ຂອງ VGGT ແລະ ຫຼັກການທີ 5 ຂອງ CFS-RAI ແມ່ນຖື ເປັນພື້ນຖານໃນຂະບວນການນີ້.

ການລົງທຶນດັ່ງກ່າວ ແມ່ນມີຈຸດປະສົງເພື່ອສ້າງ ແລະ ຄ່ອຍໆໂອນຊັບສິນກະສິກໍາ ໃຫ້ແກ່ເຈົ້າຂອງທີ່ດິນ, ຊຸມຊົນເຈົ້າພາບ ແລະ ຜູ້ນໍາໃຊ້ທີ່ດິນ. ສິ່ງນີ້ໄດ້ຮັບການສົ່ງເສີມ ດ້ວຍການເສີມສ້າງຄວາມສາມາດຂອງຊາວກະສິກອນ ຢ່າງເປັນລະບົບ, ໂດຍສະເພາະແມ່ນໄວໜຸ່ມ, ເຊິ່ງໄດ້ເປີດ ໂອກາດໃນການເຕີບໂຕ ຈາກຜູ້ໃຊ້ແຮງງານດ້ານກະສິກໍາທໍາມະດາຈົນກາຍເປັນຜູ້ປະກອບການ ດ້ານກະສິກໍາ ແລະ ເປັນຜູ້ປູກທີ່ມີຄວາມຊ່ຽວຊານ ເຊິ່ງໄດ້ມີການຄຸ້ມຄອງ ບໍລິຫານ ການຜະລິດກະສິກໍາຂອງຕົນ ໃຫ້ກາຍເປັນສິນຄ້າ. ເພື່ອໃຫ້ສອດຄ່ອງກັບຫຼັກການ 2 ຂອງ CFS-RAI, ວິທີການນີ້ແມ່ນມີຈຸດປະສົງເພື່ອ ສະໜັບສະໜູນ ໃຫ້ເກີດມີຊາວກະສິກອນ ທີ່ຫັນສູ່ການຜະລິດເປັນການຄ້າ ຜູ້ທີ່ ສາມາດຈ້າງງານຄົນອື່ນ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດແບບຍືນຍົງ.

ຮູບແບບດັ່ງກ່າວ ອະນຸຍາດໃຫ້ຜູ້ນໍາໃຊ້ທີ່ດິນສາມາດປູກພືດແຊມຕາມຫວ່າງພືດອຸດສະຫະກໍາຫຼັກ, ເຈົ້າຂອງທີ່ດິນສາມາດສ້າງລາຍໄດ້ຈາກການເກັບຄ່າເຊົ່າ ແລະ ຄົວເຮືອນທີ່ບໍ່ມີທີ່ດິນ ໄດ້ຮັບຜົນປະໂຫຍດຈາກໂຄງການພັດທະນາຊຸມຊົນ, ລວມທັງໂຄງການຄວາມຮັບຜິດຊອບທາງສັງຄົມຂອງບໍລິສັດ. ຮູບແບບນີ້ເປັນຕົວຢ່າງໃຫ້ແກ່ການປະຕິບັດທີ່ດີ ໃນການປະສົມປະສານໂຄງສ້າງ, ຂະບວນການ ແລະ ກົນໄກ ການແກ້ໄຂຄວາມບໍ່ຍຸດຕິທໍາ ທີ່ມີຄວາມສະເໝີພາບ ແລະ ໂປ່ງໃສ, ໂດຍສອດຄ່ອງກັບ ຫຼັກການ 9 ຂອງ CFS-RAI.

**ບໍລິສັດ ປູກໄມ້ ມີໂຣ (MIRO FORESTRY)** ແມ່ນບໍລິສັດປູກໄມ້ເພື່ອການຄ້າ ໃນປະເທດ ເຊຍຣາ ລີອອນ (Sierra Leone) ແລະ ປະເທດ ການາ (Ghana) ດໍາເນີນທຸລະກິດ ທີ່ມີການປູກໄມ້ທົດແທນໃນທີ່ດິນທີ່ເສື່ອມໂຊມ ແລະ ສ້າງໂອກາດໃນການສ້າງລາຍໄດ້ໃຫ້ແກ່ຊຸມຊົນທີ່ອາໄສຢູ່ໃນພື້ນທີ່ພູມສັນຖານເຫຼົ່ານີ້, ດັ່ງນັ້ນຈຶ່ງປະກອບສ່ວນເຂົ້າໃນ ຫຼັກການ 6 ຂອງ CFS-RAI. ບໍລິສັດ ໄດ້ພັດທະນານະໂຍບາຍໃນການເຂົ້າເຖິງທີ່ດິນເຊິ່ງປະຕິບັດຕາມຫຼັກການປະຕິບັດທີ່ດີທີ່ສຸດຂອງສາກົນ, ສອດຄ່ອງກັບກົດໝາຍພາຍໃນ ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງການທາງສັງຄົມ ແລະ ວັດທະນະທໍາຂອງຊຸມຊົນ (ໂຄງການລິເລີ່ມ ການຄ້າແບບຍືນຍົງ, 2021). ໃນປະເທດ ເຊຍຣາ ລີອອນ (Sierra Leone), ບໍລິສັດ Miro Forestry ໄດ້ເຊົ່າທີ່ດິນໂດຍກົງຈາກເຈົ້າຂອງທີ່ດິນ, ເຊິ່ງໄດ້ຮັບການຮັບຮອງຈາກສະພາເຂດຄຸ້ມຄອງ ທີ່ເປັນຕົວແທນໃຫ້ແກ່ປະຊາຊົນ ແລະ ຄອບຄົວທີ່ຄອບຄອງທີ່ດິນ. ໃນຂະນະທີ່ການຈັດສັນການເຊົ່າທີ່ດິນລະຫວ່າງ ບໍລິສັດ Miro Forestry ແລະ ຄອບຄົວທີ່ຄອບຄອງທີ່ດິນ ໂດຍບໍ່ກ່ຽວຂ້ອງກັບຜູ້ນໍາໃຊ້ທີ່ດິນ, ເຈົ້າຂອງທີ່ດິນ ຫຼື ຄອບຄົວທີ່ເປັນເຈົ້າຂອງທີ່ດິນ ອາດຈະກ່ຽວຂ້ອງກັບຜູ້ນໍາໃຊ້ທີ່ດິນໃນທີ່ດິນຂອງຕົນ ໂດຍມີການ






ໂອລົມສົນທະນາກ່ອນ ກ່ອນທີ່ຈະເຊັນສັນຍາເຊົ່າກັບບໍລິສັດ. ຜ່ານການປະຕິບັດ ການກຳນົດຂອບເຂດແຜນທີ່ຂອງບ້ານ, ບໍລິສັດ Miro ຢືນຢັນວ່າພື້ນທີ່ທີ່ເຊົ່າ ຈະບໍ່ມີຜົນກະທົບຕໍ່ການເຂົ້າເຖິງທີ່ດິນ ສຳລັບຜູ້ນຳໃຊ້ທີ່ດິນທີ່ມີສິດຄອບຄອງການນຳໃຊ້ທີ່ດິນ. ໃນຂະນະດຽວກັນ, ໂຄງການການຜະລິດກະສິກຳຕາມສັນຍາ (Outgrower) ຂອງບໍລິສັດ ໄດ້ຊຸກຍູ້ໃຫ້ສະມາຊິກຊຸມຊົນລວມທັງຜູ້ນຳໃຊ້ທີ່ດິນ ສ້າງຕັ້ງເຂດກະສິກຳປ່າໄມ້ໂດຍມີການສະໜັບສະໜູນຈາກບໍລິສັດ.

### ຫ້ອງ 7. ອົງປະກອບຮູບແບບການຄຸ້ມຄອງບໍລິຫານ ແລະ ການຜະລິດຢ່າງມີຄວາມຮັບຜິດຊອບ ຂອງບໍລິສັດ ລິຊາດ ເອີທ (Lizard Earth)

**ໄລຍະທີ 1:**

ບໍລິສັດ Lizard Earth ໄດ້ເຊົ່າເນື້ອທີ່ດິນ ຈຳນວນ 735 ເຮັກຕາ ໃນຮູບແບບທີ່ມີຄວາມໂປ່ງໃສ ປະຕິບັດຕາມຂັ້ນຕອນການອະນຸມັດແຫ່ງຊາດ ໃນການສ້າງຕັ້ງ ທຸລະກິດກະສິກຳການປູກຕົ້ນໂກໂກ້ເປັນເວລາ 30 ປີ. ບໍລິສັດ Lizard Earth ໄດ້ສ້າງຕັ້ງສວນໂກໂກ້ກະສິກຳປ່າໄມ້ ແລະ ຈະຄຸ້ມຄອງການປູກໂກໂກ້ຮ່ວມກັບຊາວກະສິກອນທີ່ໄດ້ຮັບການຄັດເລືອກໃນຊຸມຊົນ, ສະໜອງວັດຖຸດິບອຸປະກອນເຄື່ອງມື, ຈ້າງງານ ແລະ ຊີ້ນຳ ກຳມະກອນທີ່ເຮັດວຽກໃນສວນ, ການເກັບກ່ຽວ, ຂະບວນການ ແລະ ການຜະລິດເພື່ອເປັນສິນຄ້າ. ວຽກງານໄລຍະສັ້ນໄດ້ຮັບມອບໝາຍໃຫ້ກຸ່ມແຮງງານ, ໃນຂະນະທີ່ວຽກການບຳລຸງຮັກສາໄລຍະຍາວ ແມ່ນມອບໝາຍໃຫ້ກຳມະກອນເປັນລາຍບຸກຄົນ). ບໍລິສັດ Lizard Earth ກຳນົດລະບົບການຄວບຄຸມພາຍໃນ ແລະ ຢັ້ງຢືນການດຳເນີນງານຂອງຕົນພາຍໃຕ້ມາດຕະຖານທາງສັງຄົມ ແລະ ເປັນກະສິກຳອິນຊີ.

**ໄລຍະທີ 2:**

ບໍລິສັດ Lizard Earth ຈະຖອຍອອກຈາກການຄຸ້ມຄອງບໍລິຫານການຜະລິດກະສິກຳ ພາຍຫຼັງ 15 ປີ,ຈະມີການຈັດສັນທີ່ດິນກະສິກຳໃຫ້ເປັນສວນຜະລິດກະສິກຳທາງການຄ້າຂະໜາດນ້ອຍ ແລະ ມອບໃຫ້ແກ່ຜູ້ປະກອບການດ້ານກະສິກຳທີ່ໄດ້ຮັບການເຝິກອົບຮົມແລ້ວ ເຊິ່ງເອີ້ນວ່າ ຜູ້ປູກທີ່ມີຄວາມຊຳນານ (Master Growers) ໃຫ້ປະຕິບັດໜ້າທີ່ການຄຸ້ມຄອງພາຍໃຕ້ການຕິດຕາມກວດກາຂອງຄະນະກຳມະການຄຸ້ມຄອງບໍລິຫານ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຮ່ວມກັບຜູ້ຕາງໜ້າ ຊຸມຊົນ. ໃນໄລຍະ 15 ປີຂ້າງໜ້າ, ຜູ້ປະກອບການດ້ານທຸລະກິດກະສິກຳ ຈະໄດ້ຮັບການມອບໝາຍໃຫ້ເປັນຜູ້ປູກທີ່ມີ ຄວາມຊ່ຽວຊານ (Master Growers) ທີ່ໄດ້ຮັບ ຄວາມໄວ້ວາງໃຈ ເຊິ່ງປະກອບດ້ວຍ 4 ຫາ 10 ເອເຄີ (acres). ຜູ້ປູກທີ່ມີຄວາມຊ່ຽວຊານທັງໝົດ 35 ຄົນ ຈະເຂົ້າຮັບໜ້າທີ່ຕໍ່ພາຍຫຼັງ 15 ປີທຳອິດ. ບໍລິສັດ ຍັງຈະຮັບຜິດຊອບໃນການຈ່າຍຄ່າເຊົ່າທີ່ດິນເປັນເວລາ 15 ປີ. ເຈົ້າຂອງສວນປູກໃໝ່ຈະຂາຍຜະລິດຕະພັນຂອງພວກເຂົາໃຫ້ແກ່ບໍລິສັດ Lizard Earth ພາຍໃຕ້ການຈັດສັນການສະໜອງແຫຼ່ງວັດຖຸດິບສະເພາະ ກັບລາຄາທີ່ໄດ້ມາດຕະຖານທຽບໃສ່ລາຄາຕະຫຼາດທີ່ມີຢູ່ ເພື່ອຮັບປະກັນຄວາມຍຸດຕິທຳ ແລະ ຫຼີກລ້ຽງການຂາຍນອກສັນຍາ.

**ໄລຍະທີ 3:**

ບັນດາພາກສ່ວນກ່ຽວຂ້ອງ ແບ່ງປັນຜົນກຳໄລທັນທີ ທີ່ບໍລິສັດ Lizard Earth ເລີ່ມລົງທະບຽນພວກເຂົາ. ການແບ່ງປັນຜົນກຳໄລຈະໄດ້ຮັບການຈັດຕັ້ງໂດຍຜ່ານຄະນະກຳມະການຊີ້ນຳການຄຸ້ມຄອງບໍລິຫານ ທີ່ໄດ້ຮັບການສ້າງຕັ້ງຂຶ້ນໃນຕອນ ຕົ້ນຂອງໄລຍະ 2 ໂດຍມີຈຸດປະສົງໃນການເບິ່ງແຍງຄຸ້ມຄອງ ກິດຈະກຳ ຂອງຜູ້ປູກທີ່ມີຄວາມຊ່ຽວຊານ (Master Growers) ທີ່ໄດ້ຮັບການແຕ່ງຕັ້ງໃໝ່ ແລະ ສອດຄ່ອງກັບຫຼັກຈັນຍາບັນລວມ ຂອງໂຄງການລິເລີ່ມ. ທຸກໆກິດຈະກຳໃນໄລຍະ 3 ຈະສືບຕໍ່ໄດ້ຮັບການປະຕິບັດໃນດິນຕອນດຽວກັນທີ່ປູກໂກໂກ້.

**ແຫຼ່ງທີ່ມາ:** ລາຍລະອຽດຂອງຜູ້ຂຽນ

ໃນປີ 2011, ບໍລິສັດ Miro Forestry Limited ໄດ້ເຊັນສັນຍາເຊົ່າ 50 ປີ ໃນເນື້ອທີ່ດິນ 20,980 ເຮັກຕາໂດຍມີຜູ້ຕາງໜ້າຂອງ ເຂດຄຸ້ມຄອງ ໂຍນີ (Yoni) ໃນເມືອງ ໂຕນໂກລີລີ (Tonkolili) (ບໍລິສັດ Miro Forestry [ SL ] Ltd ແລະ ເຂດຄຸ້ມຄອງ Yoni, 2011). ໃນບັນດາສິ່ງອື່ນໆ, ການເຮັດສັນຍາເຊົ່າແມ່ນເພື່ອຊອກຫາ ແລະ ສ້າງຄູ່ຮ່ວມມື ແລະ ແບ່ງປັນປັດບາດ ແລະ ຄວາມຮັບຜິດຊອບ, ດ້ວຍການແບ່ງປັນຜົນກຳໄລ, ໂອກາດໃນການຈ້າງງານ ແລະ ການສະໜັບສະໜູນການພັດທະນາ ທາງສັງຄົມ. ເນື່ອງຈາກວ່າທີ່ດິນຖືກເຊົ່າໂດຍກົງຈາກເຈົ້າຂອງທີ່ດິນໂດຍຜ່ານຫົວໜ້າເຂດຄຸ້ມຄອງ, ບໍລິສັດ Miro Forestry ຮັບປະກັນວ່າຊຸມຊົນສາມາດເຂົ້າເຖິງ ອົງການຈັດຕັ້ງສັງຄົມ (CSOs) ພາກສ່ວນທີສາມ ເພື່ອສະໜັບສະໜູນ ຫຼັກການ ການຍິນຍອມຢ່າງເປັນອິດສະຫຼະ,ໄດ້ຮັບການເຫັນດີເຫັນພ້ອມລ່ວງໜ້າ ແລະ ມີການ ແຈ້ງຂໍ້ມູນທີ່ຄົບຖ້ວນ (FPIC) ພ້ອມກັບການສ້າງແຜນທີ່ບ້ານໂດຍມີການປະກອບສ່ວນຂອງຊຸມຊົນຢ່າງລະອຽດ ແລະ ການວາງແຜນພັດທະນາສັງຄົມ. ວິທີການຮຽນຮູ້ ຜ່ານການປະຕິບັດຕົວຈິງ ຂອງ ບໍລິສັດ Miro Forestry ແມ່ນລວມເອົາການມີສ່ວນຮ່ວມຂອງຜູ້ທີ່ກ່ຽວຂ້ອງ, ການສ້າງແຜນທີ່ຊັບພະຍາກອນ ແລະ ກອບແຜນການໃນການເຊົ່າທີ່ດິນ ທີ່ສົ່ງເສີມການຮ່ວມມືທີ່ມີປະສິດຕິພາບກັບ ພາກລັດ ແລະ ຊຸມຊົນທ້ອງຖິ່ນ ແລະ ສິ່ງຜົນທີ່ດີໃຫ້ແກ່ ພື້ນທີ່ປ່າໄມ້ອະນຸລັກ; ການປົກປັກຮັກສາສັດປ່າ; ການຄຸ້ມຄອງຊັບພະຍາກອນປ່າໄມ້ແບບຍືນຍົງ; ແລະ ການປັບປຸງການເຮັດໄຮ່ ໂດຍການແນະນຳຊາວກະສິກອນສູ່ການເຮັດກະສິກຳແບບອະນຸລັກ, ການເຮັດກະສິກຳອິນຊີ ແລະ ການປະຕິບັດຫຼັກການການປູກຝັງແບບທຳມະຊາດໂດຍບໍ່ທຳລາຍໜ້າດິນ ໃນບັນດາວິທີການອື່ນໆ (ຂໍ້ລິເລີ່ມການຄ້າແບບຍືນຍົງ, 2021).

ແຜນການຂະຫຍາຍຂອງ ບໍລິສັດ Miro Forestry ປະກອບມີ ຮູບແບບການຜະລິດກະສິກຳຕາມສັນຍາ (Outgrower scheme) ກັບຜູ້ຜະລິດຂະໜາດນ້ອຍທີ່ສຸມໃສ່ການມີສ່ວນຮ່ວມຂອງຊຸມຊົນ ແລະ ການສ້າງຂີດຄວາມສາມາດຂອງຜູ້ຜະລິດຂະໜາດນ້ອຍ ໂດຍຜ່ານການຝຶກອົບຮົມ ແລະ ການຊີ້ນຳ ໂດຍລະອຽດກ່ຽວກັບວົງຈອນການປູກຕົ້ນໄມ້, ວົງຈອນການປູກພືດແຊມ ແລະ ສວນປູກພືດອຸດສະຫະກຳ. ຮູບແບບການຜະລິດກະສິກຳຕາມສັນຍາ (Outgrower scheme) ຄາດວ່າຈະມີຜົນປະໂຫຍດແກ່ບຸກຄົນ, ສະຫະກອນ, ຊຸມຊົນ ແລະ ຄອບຄົວທີ່ຄອບຄອງທີ່ດິນ ໂດຍສະເພາະໃນປີ 2027, ເມື່ອຕົ້ນໂກໂກ້ໄດ້ຮັບການເກັບກ່ຽວ. ກ່ອນນີ້, ຜູ້ເຂົ້າຮ່ວມໂຄງການໄດ້ເຫັນຜົນປະໂຫຍດ ທີ່ສຳຄັນແລ້ວໃນການສະໜັບສະໜູນວັດຖຸເຄື່ອງມື, ການນຳໃຊ້ທີ່ດິນເພື່ອຜົນປະໂຫຍດທາງດ້ານເສດຖະກິດ, ການອະນຸຍາດໃຫ້ມີການປູກພືດແຊມເຊິ່ງນຳໄປສູ່ການເພີ່ມລາຍຮັບ ແລະ ສະບຽງອາຫານ ແລະ ໂອກາດການຈ້າງງານດ້ານການບໍລິການທີ່ເພີ່ມຂຶ້ນໃຫ້ແກ່ຊາວໜຸ່ມທີ່ເຂົ້າຮ່ວມ.






## 3.2 ກໍລະນີສຶກສາຈາກ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນຢູ່ພາຍໃຕ້ຄວາມກົດດັນຢ່າງຫຼວງຫຼາຍຈາກການຫັນປ່ຽນທີ່ດິນຂະໜາດໃຫຍ່ (Gironde *et al.*, 2016; Kenney-Lazar, 2018). ຂໍ້ມູນເອກະສານການລົງທຶນທີ່ມີ ການນຳໃຊ້ທີ່ດິນທົ່ວປະເທດສະແດງໃຫ້ເຫັນວ່າມີການ ໂອນທີ່ດິນຫຼາຍກວ່າ 1,700 ແຫ່ງ ເຊິ່ງໄດ້ຮັບການ ອະນຸມັດພາຍໃນປະເທດ, ເຊິ່ງກວມເອົາ 11,7 ລ້ານ ເຮັກຕາ ຫຼື ປະມານ 50 ເປີເຊັນ ພື້ນທີ່ດິນຂອງປະເທດລາວ (Hett *et al.*, 2020). Messerli *et al.* (2016) ຍັງໄດ້ສະແດງໃຫ້ເຫັນຕື່ມອີກວ່າໃນເນື້ອທີ່ 1,1 ລ້ານເຮັກຕາຂອງການລົງທຶນທີ່ມີການນຳໃຊ້ທີ່ດິນທັງໝົດ ທີ່ພວກເຂົາວິເຄາະ ໃນປະເທດລາວ, 81 ເປີເຊັນໄດ້ຮັບອະ ນຸຍາດໃນພື້ນທີ່ພູມສັນຖານທີ່ເປັນປ່າໄມ້ຫຼື ໃນພື້ນທີ່ທີ່ປະກອບດ້ວຍຫຼາຍເຂດປ່າໄມ້ລວມກັນ, ປ່າດົງດິບ ແລະ ທົ່ງຫຍ້າ. ທາງປະຫວັດສາດ, ພື້ນທີ່ສິ່ງເຫຼົ່ານີ້ ແມ່ນສະຖານທີ່ຂອງການປູກຝັງຂະໜາດນ້ອຍ, ສ່ວນໃຫຍ່ແມ່ນການເຮັດໄຮ່ເລື່ອນລອຍ. ການຫັນປ່ຽນທີ່ດິນຂະໜາດໃຫຍ່ ເປັນພື້ນທີ່ ການປູກຕົ້ນຢາງພາລາ, ຕົ້ນໄມ້ອຸດສະຫະກຳ ແລະ ພືດລົ້ມລຸກ,ແມ່ນສິ່ງຜົນກະທົບຕໍ່ການກະສິກຳ ຂະໜາດນ້ອຍ, ບໍ່ພຽງແຕ່ສິ່ງຜົນກະທົບທີ່ບໍ່ດີຕໍ່ສະຫວັດດີການ ດ້ານທີ່ດິນ ແລະຊີວິດການເປັນຢູ່, ຄວາມບໍ່ໝັ້ນຄົງ ດ້ານສະບຽງອາຫານ, ແຕ່ຍັງເຮັດໃຫ້ບັນດາຜູ້ຜະລິດຂະ ໜາດນ້ອຍ ປະເຊີນກັບຕະຫຼາດໂລກ (Debonne *et al.*, 2018; Nohthavong *et al.*, 2021). ພາກຕໍ່ໄປນີ້ ໄດ້ອະທິບາຍລະອຽດ ສາມຕົວຢ່າງຂອງການລົງທຶນຈາກ ປະເທດລາວ ທີ່ສະໜອງຮູບແບບ ແລະ ການປະຕິບັດ ທາງເລືອກທີ່ແຕກຕ່າງກັນທີ່ປະກອບສ່ວນ ເຂົ້າໃນຈຸດປະສົງ ຂອງຫຼັກການ VGGT ແລະ CFS-RAI. ຂໍ້ມູນສ່ວນໃຫຍ່ແມ່ນຈາກການຄົ້ນຄວ້າທາງເອກະສານ, ສາມກໍລະນີທີ່ນຳສະເໜີແມ່ນ: ບໍລິສັດ ບົວລະພາກະສິກຳປ່າໄມ້ (Burapha Agroforestry) ເຊິ່ງເປັນບໍລິສັດຜະລິດຕະພັນໄມ້ ແລະ ໄມ້ວິກ; ບໍລິສັດ ປູກໄມ້ແມ່ຂອງຈຳກັດ (Mekong Timber Plantation Company Limited); ແລະ ຂະແໜງຄຸ້ມຄອງໄມ້ປ່ອງແບບຍືນຍົງເຊິ່ງມີການຄຸ້ມຄອງໃນຂັ້ນທ້ອງຖິ່ນ ໂດຍກຸ່ມບ້ານຫ້ວຍຫາງ (Huay Hang) ແລະ ນາໂພ (Napor). ການຄົ້ນຄວ້າກ່ຽວກັບກໍລະນີສຶກສາ ຂອງ ບໍລິສັດບົວລະພາ Burapha Agroforestry ໄດ້ຮັບການສຶກສາຄົ້ນຄວ້າເພີ່ມເຕີມໂດຍການລົງຢ້ຽມຢາມພາກສະໜາມ ແລະ ການສົນທະນາກັບຊຸມຊົນ ແລະ ຜູ້ຕາງໜ້າບໍລິສັດໃນສອງບ້ານທີ່ບໍລິສັດກຳລັງດຳເນີນງານຢູ່.

**ບໍລິສັດ ກະສິກຳປ່າໄມ້ ບົວລະພາ (BURAPHA AGRO-FORESTRY COMPANY LIMITED (BAFCL).** ໃນ ປະເທດລາວ, ບໍລິສັດ BAFCL, ເຊິ່ງເປັນບໍລິສັດຮ່ວມທຸລະກິດສະວີເດັນ-ລາວ (ເຊິ່ງສະວີເດັນຖືຮຸ້ນ 95 ເປີເຊັນ ແລະ ລາວຖືຮຸ້ນ 5 ເປີເຊັນ), ສະໜັບສະໜູນ ການປູກຕົ້ນກະຖິນນະລົງ (Acacia) ແລະ ຕົ້ນວິກ (Eucalyptus) ພ້ອມທັງ ຜະລິດໄມ້ອັດ ແລະ ເຟີນີເຈີໃນ 4 ແຂວງເຊິ່ງມີທັງໝົດ 60,000 ເຮັກຕາ ຂອງການ ສຳປະທານທີ່ດິນ. ໃນປີ 2022, ບໍລິສັດ ບົວລະພາ (Burapha) ໄດ້ປູກໄມ້ໃນເນື້ອທີ່ 5,807 ເຮັກຕາ ໃນ 55 ບ້ານ ແລະ ວາງແຜນທີ່ຈະຂະຫຍາຍໃນເຂດປ່າຜະລິດ (PFAs) ຢູ່ໃນເຂດຄອບຄອງຂອງລັດ. ເຂດປ່າຜະລິດ (PFAs) ແມ່ນພື້ນທີ່ທີ່ໄດ້ຮັບການກຳນົດສຳລັບການປູກໄມ້ເພື່ອການຄ້າ ແລະ ຍັງເປັນແຫຼ່ງທີ່ສຳຄັນຂອງການດຳລົງຊີວິດຂອງຊຸມຊົນທ້ອງຖິ່ນ. ບໍລິສັດໄດ້ໃຫ້ຄຳໝັ້ນສັນຍາທີ່ຈະດຳເນີນທຸລະກິດແບບຍືນຍົງ ໂດຍການປະຕິບັດພັນທະຄວາມຮັບຜິດຊອບຂອງຕົນຕໍ່ ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ. ບໍລິສັດໄດ້ມີການດຳເນີນງານ ໂດຍການສະໜອງການ ຈ້າງງານໃຫ້ແກ່ຊຸມຊົນທ້ອງຖິ່ນ ໂດຍສະເພາະຊາວໜຸ່ມ ແລະ ແມ່ຍິງ, ເພີ່ມລາຍໄດ້ໃນຂົງເຂດພື້ນທີ່ໂຄງການ, ສະໜອງການຝຶກອົບຮົມ ແລະ ການສ້າງຂີດຄວາມສາມາດ,ສະໜັບສະໜູນການພັດທະນາຊຸມຊົນ ແລະ ໂຄງການ ດ້ານກະສິກຳ, ປົກປັກຮັກສາ ຊັບພະຍາກອນທຳມະຊາດ, ສ້າງລາຍຮັບຈາກການສົ່ງອອກ ໃຫ້ແກ່ປະເທດລາວ (BAFCL, n.d.), ແລະ ມຸ້ງໝັ້ນປະຕິບັດຕໍ່ເປົ້າໝາຍ ການພັດທະນາແບບຍືນຍົງຫຼາຍໆເປົ້າໝາຍ (SDGs).[6]

ໂດຍປະຕິບັດຕາມຫຼັກການທົ່ວໄປຂອງ VGGT ແລະ ຫຼັກການ 5 ຂອງ CFS-RAI, ບໍລິສັດ ໄດ້ນຳໃຊ້ວິທີການລຸ່ມຂຶ້ນເທິງ (bottom-up) ເພື່ອຄອບຄອງທີ່ດິນ

[6] BAFCL ມີຄວາມມຸ້ງໝັ້ນໃນການປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) 10 ເປົ້າໝາຍ, ລວມທັງ SDG 1 ໂດຍການເພີ່ມລາຍໄດ້ຂອງຊາວກະສິກອນ ໃຫ້ເພີ່ມຂຶ້ນ 3 ເທົ່າ, SDG 2 ຜ່ານຮູບແບບກະສິກຳປ່າໄມ້ຂອງບໍລິສັດ ແລະ ລາຍໄດ້ຈາກຄ່າແຮງງານ, SDG 5 ໂດຍການສ້າງແຜນງານ ແລະ ເປົ້າໝາຍ ເພື່ອຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ໃນບ່ອນເຮັດວຽກ, ແລະ SDG 15 ໂດຍການຫຼຸດຜ່ອນການຕັດໄມ້ທຳລາຍປ່າ ແລະ ການປົກປັກຮັກສາສິ່ງແວດລ້ອມ.







ແລະ ໄດ້ສ້າງຮູບແບບການຮ່ວມມືທີ່ສ້າງສັນ ກັບຊຸມຊົນທ້ອງຖິ່ນ. ບໍລິສັດ ເຂົ້າຫາຊຸມຊົນ ຫຼື ເຈົ້າຂອງທີ່ດິນສ່ວນບຸກຄົນ ດ້ວຍຂໍ້ສະເໜີທີ່ຈະເຊົ່າທີ່ດິນສໍາລັບການດໍາເນີນກິດຈະກໍາກະສິກໍາປ່າໄມ້ ແລະ ໃຫ້ການຕອບແທນໂດຍການໃຫ້ໂອກາດການເຮັດວຽກງານທໍາ ຕາມລະດູການ, ໃຫ້ຄ່າເຊົ່າ, ການກະກຽມທີ່ດິນສໍາລັບການປູກເຂົ້າ ແລະ ພືດ ອື່ນໆສັບຫວ່າງຕົ້ນໄມ້, ໃຫ້ການຊ່ວຍເຫຼືອ ເພື່ອພັດທະນາພື້ນຖານໂຄງລ່າງຂອງບ້ານ ແລະ ການເຝິກອົບຮົມການແປຮູບອາຫານ ແລະ ການເຂົ້າເຖິງການຕະຫຼາດຂອງພືດຕ່າງໆເຊັ່ນ: ມັນຕົ້ນ (FininnFund, 2022a; ທະນາຄານໂລກ, 2020).ໂດຍປະຕິບັດຕາມ ຫຼັກການ 9 ຂອງ CFS-RAI, ບໍລິສັດໄດ້ສ້າງໃຫ້ມີການສຶກສາຫາລືທົ່ວໄປ ແລະ ໃນການປຶກສາຫາລື ແລະ ເຜີຍແຜ່ຄູ່ມືແນະນໍາໂດຍອີງໃສ່ມາດຕະຖານການປະຕິບັດຂອງອົງການ ການເງິນສາກົນ (IFC) ເພື່ອປັບປຸງຂະບວນການກໍານົດ ນະໂຍບາຍ, ຮັບປະກັນຄວາມເປັນໄປໄດ້ໃນໄລຍະຍາວ ແລະ ເສີມຂະຫຍາຍຜົນປະໂຫຍດຂອງໂຄງການທີ່ມີທ່າແຮງ.

ໂດຍສອດຄ່ອງກັບຫຼັກການ 2, 3 ແລະ 4 ຂອງ CFS-RAI, ບໍລິສັດ ບົວລະພາໄດ້ຕັ້ງຖານປະຕິບັດຫຼັກການຂອງຕົນໃນເຂດຫ່າງໄກສອກຫຼີກ ຂອງປະເທດລາວ (BAFCL, 2019; BAFCL, 2020), ເຊິ່ງ 60 ເປີເຊັນຂອງພື້ນທີ່ ແມ່ນຢູ່ໃນບ້ານ ຊົນເຜົ່າຂະມຸ ແລະ ຊົນເຜົ່າມົ້ງ. ບໍລິສັດ ໃຫ້ຄວາມສໍາຄັນຕໍ່ສະມາຊິກຊຸມຊົນທ້ອງຖິ່ນເພື່ອສ້າງວຽກເຮັດງານທໍາໃນການປູກໄມ້ໃໝ່ ເມື່ອການປູກຕົ້ນໄມ້ໄດ້ຮັບການຂະຫຍາຍອອກ.ຊາວບ້ານໄດ້ຮັບ ການຝຶກອົບຮົມຈາກບໍລິສັດໃນໄລຍະການປູກແລະບໍາລຸງຮັກສາສວນປູກ (FininnFund, 2022b). ນອກຈາກ ທີມງານ ບໍລິຫານຂັ້ນສູງ, ພະນັກງານທັງໝົດຈໍານວນ 430 ຄົນ ແມ່ນຈາກທ້ອງຖິ່ນ, ເຊິ່ງ 41 ເປີເຊັນແມ່ນ ແມ່ຍິງ. ມີການວ່າຈ້າງແຮງງານຕາມລະດູການຈໍານວນ 1,528, ໃນນັ້ນ 44 ເປີເຊັນແມ່ນແມ່ຍິງ. ໂຮງງານໄມ້ອັດແມ່ນໄດ້ຮັບການບໍລິຫານໂດຍພະນັກງານຕໍາແໜ່ງສູງ16 ຄົນ, ເຊິ່ງ 50 ເປີເຊັນ ແມ່ນແມ່ຍິງ. ບໍລິສັດ ໄດ້ປະຕິບັດເກີນເປົ້າໝາຍໃນການວ່າຈ້າງພະນັກງານເຕັມເວລາໃຫ້ໄດ້ 35 ເປີເຊັນທີ່ເປັນແມ່ຍິງໃນປີ 2022. ເພື່ອສະໜັບສະໜູນເປົ້າໝາຍນີ້, ບໍລິສັດ ບົວລະພາ ໄດ້ສະໜອງ ການບໍລິການດ້ານການສຶກສາ ແລະ ການຈັດສັນເບິ່ງແຍງ ດູແລເດັກນ້ອຍໂດຍມີຄວາມເໝາະທາງດ້ານວັດທະນະທໍາ, ລວມທັງການລາພັກຂອງພໍ່ແມ່ທີ່ເປັນຄົນງານເພື່ອເບິ່ງແຍງລູກ. ພະນັກງານ ແລະ ແຮງງານທ້ອງຖິ່ນສ່ວນໃຫຍ່ ຂອງບໍລິສັດແມ່ນຊາວໜຸ່ມ (Insouvanh, 2022, ການສື່ສານສ່ວນບຸກຄົນ). ພະນັກງານທ້ອງຖິ່ນຈາກບ້ານຊົນເຜົ່າກໍ່ໄດ້ຮັບການຈ້າງງານໃນຕໍາແໜ່ງຜູ້ຄຸມງານ ແລະ ພະນັກງານພາກສະໜາມ ເພື່ອເຮັດວຽກໂດຍກົງກັບພະນັກງານ ໃນຕໍາແໜງອື່ນໆຂອງບໍລິສັດ.

ໄດ້ມີຫຼັກຖານສະແດງໃຫ້ເຫັນ ວ່າກິດຈະກໍາຂອງບໍລິສັດໄດ້ປັບປຸງລາຍໄດ້ ແລະ ເພີ່ມຊັບສິນຂອງຄົວເຮືອນ. ການສໍາຫຼວດ ໄດ້ສະແດງໃຫ້ເຫັນວ່າໃນບັນດາບ້ານທີ່ເປັນຄູ່ຮ່ວມງານຂອງບໍລິສັດບົວລະພາ ລາຍໄດ້ຕໍ່ຄົວເຮືອນປະຈໍາປີຂອງຜູ້ຕອບຂໍ້ສອບຖາມ 47 ເປີເຊັນ ແມ່ນເພີ່ມຂຶ້ນ ແລະ ລາຍໄດ້ຂອງຜູ້ຕອບຂໍ້ສອບຖາມ 11 ເປີເຊັນ

ຫຼຸດລົງ. ໃນຂະນະທີ່ຢູ່ໃນບັນດາບ້ານຄວບຄຸມ, 30 ເປີເຊັນ ຂອງຜູ້ຕອບຂໍ້ສອບຖາມ ລາຍງານວ່າເພີ່ມຂຶ້ນ ແລະ 21 ເປີເຊັນລາຍງານວ່າຫຼຸດລົງ (BAFCL, 2020). ໂດຍລວມແລ້ວ,ລາຍໄດ້ຂອງບ້ານທີ່ເປັນຄູ່ຮ່ວມງານຂອງບໍລິສັດມີລາຍໄດ້ເພີ່ມຂຶ້ນ 3 ຫາ 4 ເທົ່າ (FMO, 2020). ໃນຂະນະດຽວກັນ, ກອງທຶນພັດທະນາບ້ານທີ່ໄດ້ຮັບການສ້າງຕັ້ງຂຶ້ນໃນແຕ່ລະບ້ານຄູ່ຮ່ວມງານໄດ້ເຮັດໃຫ້ມີການສະໜອງໄຟຟ້າ, ຖະໜົນຫົນທາງ, ໂຮງຮຽນ, ຂົວ, ນ້ຳສະອາດ ແລະ ຊົນລະປະທານ. ສິ່ງນີ້ຊ່ວຍຮັບປະກັນວ່າທຸກຄົນໄດ້ຮັບຮູ້ເຖິງຜົນປະໂຫຍດບາງຢ່າງໃນບ້ານທີ່ເປັນຄູ່ຮ່ວມງານ.

ກ່ຽວກັບການອະນຸລັກຊັບພະຍາກອນທຳມະຊາດ, ໂດຍສະເພາະປ່າໄມ້, ບໍລິສັດບົວລະພາ ແມ່ນນຳໃຊ້ພຽງແຕ່ທີ່ດິນປ່າໄມ້ທີ່ຊຸດໂຊມ ແລະ ຫ້າມການບຸກເບີກພື້ນທີ່ປ່າໄມ້ ແລະ ຕົ້ນໄມ້ສ່ວນບຸກຄົນ ຂະໜາດໃຫຍ່ (FinnFund, 2022a). ແມ່ນ້ຳທີ່ມີນ້ຳຕາມລະດູການແລະມີນ້ຳຕະຫຼອດປີແມ່ນໄດ້ຮັບການປົກປ້ອງ ຕາມທຳມະຊາດໂດຍຕົ້ນໄມ້ພືດພັນພື້ນເມືອງ ເພື່ອສະໜອງແລວທາງສັດປ່າ, ປົກປັກຮັກສາຄຸນນະພາບຂອງແຫຼ່ງນ້ຳ ແລະ ຊີວະນາໆພັນຂອງສິ່ງທີ່ມີຊີວິດທາງນ້ຳ. ບໍລິສັດສົ່ງເສີມການນຳໃຊ້ຮູບແບບການປະຕິບັດກະສິກຳແບບບໍ່ທຳລາຍໜ້າດິນ ເພື່ອສົ່ງເສີມການອະນຸລັກດິນໃນບັນດາບ້ານທີ່ເປັນຄູ່ຮ່ວມງານ.

ໂດຍການປະຕິບັດໃຫ້ສອດຄ່ອງກັບ ຫຼັກການ 10 ຂອງ CFS-RAI, ບໍລິສັດ ບົວລະພາ ສົ່ງເສີມຄວາມຮັບຜິດຊອບແລະ ມີການປະເມີນຜົນກະທົບທາງທຸລະກິດຂອງຕົນ. ບໍລິສັດດຳເນີນງານຕາມກົດໝາຍແຫ່ງຊາດຂອງປະເທດລາວ ແລະ ກອບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ESIA), ເຊິ່ງຖືວ່າເປັນໜຶ່ງໃນກອບຂອງ ESIA ທີ່ເຂັ້ມແຂງໃນພາກພື້ນແມ່ນ້ຳຂອງ. ມັນຮຽກຮ້ອງໃຫ້ມີການປະຕິບັດ ESIA ກ່ອນການລົງທຶນ (MHP, 2019; GOLPDR, 2012). ການຄອບຄອງທີ່ດິນ ທັງໝົດຂອງບໍລິສັດ ແມ່ນໄດ້ຮັບການຢັ້ງຢືນຈາກສະພາ ຄຸ້ມຄອງປ່າໄມ້ (FSC) ແລະ ມັນເປັນບໍລິສັດພຽງ ແຫ່ງດຽວ ທີ່ໄດ້ຮັບການຢັ້ງຢືນຈາກ FSC ສຳລັບອຸດສາຫະກຳປຸງແຕ່ງໄມ້ (ໂຮງງານຜະລິດໄມ້ອັດແປຮູບ ແລະ ໂຮງເລື່ອຍ) ພາຍໃນປະເທດ. ບໍລິສັດມີລະບົບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມທີ່ຊ່ວຍຊີ້ນຳກິດຈະກຳ ຂອງບໍລິສັດ ແລະ ສົ່ງເສີມການ ປະຕິບັດໃຫ້ສອດຄ່ອງກັບມາດຕະຖານການປະຕິບັດຂອງ FSC ແລະ IFC (BAFCL, 2019; FinnFund, 2022a; IFC, n.d.).ບໍລິສັດ ບົວລະພາ (Burapha) ໄດ້ພັດທະນາແຜນການ ຕິດຕາມກວດກາ ແລະ ຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ແຍກຕ່າງຫາກ ໃນກິດຈະກຳສວນປູກໄມ້ຂອງຕົນ ເພື່ອປະເມີນເງື່ອນໄຂທີ່ແຕກຕ່າງກັນ (MHP, 2019) ແລະ ບໍລິສັດໄດ້ປະຕິບັດ ESIA






ສໍາລັບໂຮງງານປຸງແຕ່ງ ໄມ້ອັດ. ບໍລິສັດ ບົວລະພາຍັງເປັນໜຶ່ງໃນ ຈໍານວນສອງ ສາມ ບໍລິສັດທີ່ໄດ້ສໍາເລັດການປະຕິບັດ ESIA ປັນພາສາລາວອີງຕາມລະບຽບກົດໝາຍ.

**ບໍລິສັດປູກໄມ້ອຸດສະຫະກໍາ ແມ່ຂອງຈໍາກັດ (MEKONG TIMBER PLANTATIONS COMPANY LIMITED (MTP))** ບໍລິສັດ MTP ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີໃບອະນຸຍາດ ສໍາປະທານ 50 ປີເພື່ອພັດທະນາປ່າໄມ້ປູກ 50,000 ເຮັກຕາ. ເພື່ອໃຫ້ສອດຄ່ອງກັບຫຼັກການ 4 ຂອງ CFS-RAI, ໄດ້ພັດທະນາໂຄງການຮວມຂອງໄວໜຸ່ມ ແລະ ເຮັດວຽກຮ່ວມກັບ ສູນເພື່ອສິດທິເດັກ ແລະ ຄວາມຮັບຜິດຊອບທາງສັງຄົມຂອງບໍລິສັດ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຊາວໜຸ່ມ ໂດຍຜ່ານໂອກາດການສ້າງທັກສະ ແລະ ການພັດທະນາອາຊີບ. ບໍລິສັດໄດ້ພັດທະນາຄວາມສາມາດ ໃນການຄຸ້ມຄອງການປູກໄມ້ ເພື່ອສ້າງໂອກາດໃນການເຮັດວຽກຂອງຊາວໜຸ່ມຢ່າງມີຄວາມເໝາະສົມ, ສ້າງກົນໄກການປ້ອງກັນ ແລະ ແກ້ໄຂການນໍາໃຊ້ແຮງງານເດັກ, ເພີ່ມຄວາມເຂັ້ມແຂງໃຫ້ແກ່ຄວາມສາມາດຂອງບໍລິສັດໃນການຫຼຸດຜ່ອນຄວາມສ່ຽງໃນການນໍາໃຊ້ແຮງງານເດັກ ແລະ ເພີ່ມຄວາມເຂັ້ມແຂງດ້ານຄວາມສໍາພັນກັບຊຸມຊົນເພື່ອສ້າງໂອກາດໃນການເຮັດວຽກ ແລະ ການຝຶກອົບຮົມໃຫ້ແກ່ຊາວໜຸ່ມທີ່ດ້ອຍໂອກາດ. ໃນປີ 2020, ໃບໜ້າໃໝ່ ຂອງໂຄງການການມີສ່ວນຮ່ວມຂອງຊາວໜຸ່ມ ໄດ້ເລີ່ມຕົ້ນ. ພວກເຂົາໄດ້ຈັດຕັ້ງການຝຶກອົບຮົມເປັນເວລາສີ່ວັນເພື່ອສຶກສາອົບຮົມຊາວໜຸ່ມກ່ຽວກັບສິດທິແຮງງານຂອງພວກເຂົາ ແລະ ແຈ້ງໃຫ້ພວກເຂົາຮູ້ກ່ຽວກັບເກນອາຍຸທີ່ ເໝາະສົມ ທີ່ພວກເຂົາສາມດປະກອບສ່ວນວຽກງານໄດ້. ພວກເຂົາຍັງໄດ້ດໍາເນີນການເຜີຍແຜ່ໃຫ້ເຂົ້າເຖິງຊຸມຊົນ ເພື່ອຊຸກຍູ້ໃຫ້ຊາວໜຸ່ມເຂົ້າຮ່ວມໂຄງການຝຶກອົບຮົມ (New Forests, 2021; Centre for Child Rights and Business, n.d.).

**ຫົວໜ່ວຍທຸລະກິດປ່າໄມ້ທີ່ມີການຄຸ້ມຄອງໃນຂັ້ນທ້ອງຖິ່ນ ຂອງບ້ານ ຫ້ວຍຫາງ ແລະ ນາປໍ (HUAY HANG AND NAPOR VILLAGES LOCALLY CONTROLLED FORESTRY BUSINESS).** ໃນຂະໜາດທີ່ນ້ອຍກວ່າ,ບ້ານ ຫ້ວຍຫາງ ແລະ ບ້ານນາປໍ ໃນເມືອງສັງທອງ ແມ່ນບ້ານຂອງຊຸມຊົນທີ່ປະກອບດ້ວຍຜູ້ຜະລິດຂະໜາດນ້ອຍທີ່ໄດ້ສ້າງຕັ້ງ ທຸລະກິດປ່າໄມ້ທີ່ມີການຄຸ້ມຄອງໃນຂັ້ນທ້ອງຖິ່ນ ເຊິ່ງມີສ່ວນຮ່ວມໃນການຄຸ້ມຄອງປ່າໄມ້ປ່ອງແບບຍືນຍົງ. ອໍານາດການປົກຄອງເມືອງ, ອົງການຈັດຕັ້ງສັງຄົມຕ່າງໆ (CSOs) ແລະ ຊຸມຊົນໄດ້ຮ່ວມມືກັນ ເພື່ອປ້ອງກັນການຫັນປ່ຽນປ່າໄມ້ປ່ອງເປັນດິນກະສິກໍາ,ໃນຂະນະທີ່ສະໜັບສະໜູນກິດຈະກໍາສ້າງລາຍໄດ້ໃໝ່ ໃຫ້ແກ່ຊາວກະສິກອນທີ່ອີງໃສ່ຄວາມຮູ້ທ້ອງຖິ່ນດັ່ງເດີມ ແລະ ການປະຕິບັດການຄຸ້ມຄອງປ່າໄມ້ປ່ອງ. ພວກເຂົາຍັງໄດ້ເຂົ້າຮ່ວມໃນຂະບວນການ ເຊິ່ງສົ່ງຜົນໃຫ້ມີການອອກໃບຕາດິນຊຸມຊົນໃນເມືອງສັງທອງ, ເຊິ່ງໄດ້ສົ່ງເສີມຫຼັກການທີ່ 5 ຂອງ CFS-RAI. ຄວາມພະຍາຍາມດັ່ງກ່າວ ແມ່ນເພື່ອສົ່ງເສີມ ປັບປຸງລາຍໄດ້ ແລະ ກາຍເປັນຜູ້ປະກອບການ ໂດຍການນໍາໃຊ້ສະມາຄົມຂອງພວກເຂົາເພື່ອຂາຍເຄື່ອງຫັດຖະກໍາ ແລະ ເຟີນິເຈີໃຫ້ແກ່ຕະຫຼາດພາຍນອກ (ຫຼັກການ 2 ຂອງ CFS-RAI), ໄດ້ປົກປັກຮັກສາ ແລະ ຄຸ້ມຄອງປ່າໄມ້ປ່ອງ ແລະ ຄວາມຮູ້ທ້ອງຖິ່ນດັ່ງເດີມແບບຍືນຍົງ (ຂໍ້ແນະນໍາທີ 6 ຂອງ CFS-RAI) (IFAD, Procasur and AIPP, 2013).

## 3.3 ກໍລະນີສຶກສາຈາກສາກົນ

ສີ່ກໍລະນີສຶກສາຈາກສາກົນ ທີ່ຈະນໍາສະເໜີຂ້າງລຸ່ມນີ້ ສະແດງໃຫ້ເຫັນຕົວຢ່າງຂອງການປະຕິບັດທີ່ດີ ເຊິ່ງມີຫຼາຍອົງປະກອບທີ່ສໍາຄັນ ແລະ ຈໍາເປັນ ສໍາລັບການລົງທຶນຢ່າງມີຄວາມຮັບຜິດຊອບໂດຍສອດຄ່ອງກັບ ຫຼັກການ VGGT ແລະ CFS-RAI. ສິ່ງເຫລົ່ານີ້ປະກອບມີດັ່ງຕໍ່ໄປນີ້: ບໍລິສັດເນຕິບອາລາສກາ ແຫ່ງສະຫະລັດອາເມລິກາ (United States of America Alaska Native Corporations), ບໍລິສັດຂອງອາຟຣິກາໃຕ້ໂດຍມີການພົວພັນກັບຊຸມຊົນໃນຮູບແບບການຂາຍ ແລະ ການເຊົ່າທີ່ດິນ, ສະຫະກອນປະສົມຂອງປະເທດບຣາຊິລ ກ່ຽວກັບ ປ່າໄມ້ແຫ່ງຊາດ ຕາປາຈອດ (Tapajós), ແລະ ກໍລະນີຂອງການຕິດຕາມກວດກາ ແລະ ການຍົກຍ້າຍຈັດສັນຢ່າງມີຄວາມຮັບຜິດຊອບ ຂອງປະເທດການາ (ເບິ່ງຫ້ອງ 8 ສໍາລັບພາບລວມ). ກໍລະນີເຫຼົ່ານີ້ໄດ້ຮັບການຄັດເລືອກ ໂດຍອີງໃສ່ການນໍາໃຊ້ກັບບັນຫາທີ່ຖືກກໍານົດວ່າເປັນສິ່ງສໍາຄັນສໍາລັບ ປະເທດ ເຊຍຣາ ລີອອນ (Sierra Leone) ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ແລະ ໃຫ້ຕົວຢ່າງຂອງການຈັດຕັ້ງປະຕິບັດທີ່ດີກວ່າ ດ້ວຍການຈັດສັນການຄອບຄອງນໍາໃຊ້ທີ່ແຕກຕ່າງກັນ ແລະ ການປະຕິບັດຕ່າງໆ ທີ່ໄດ້ຮັບການນໍາໃຊ້ໃນໄລຍະຕ່າງໆຂອງການລົງທຶນ ດັ່ງທີ່ໄດ້ລະບຸໄວ້ລະອຽດໃນຫ້ອງ 6. ກໍລະນີສຶກສາດັ່ງກ່າວຍັງໄດ້ຮັບການຄັດເລືອກ ໂດຍອີງໃສ່ຂໍ້ມູນທີ່ພຽງພໍເຊິ່ງສະທ້ອນໃຫ້ເຫັນເຖິງບົດ ແນະນໍາ ແລະ ຫຼັກການຂອງ VGGT ແລະ

CFS-RAI. ທຸກໆກໍລະນີສຶກສາທີ່ໄດ້ຮັບທຸກໆກໍລະນີຊີ້ໃຫ້ເຫັນເຖິງ ບົດບາດຂອງລັດຖະບານ, ຊຸມຊົນ, ທຸລະກິດ ແລະ NGOs ໃນຂັ້ນຕອນຕ່າງໆຂອງການລົງທຶນ. ການວິເຄາະກໍລະນີສຶກສາທີ່ມີການປະຕິບັດທີ່ດີກວ່າໃນທີ່ນີ້ມີຂໍ້ຈໍາກັດຫຼາຍຢ່າງເຊັ່ນ: (i) ການວິເຄາະແມ່ນອີງໃສ່ການ ຄົ້ນຄວ້າທາງເອກະສານ ລວມທັງບົດລາຍງານ ແລະ ຂໍ້ມູນການລາຍງານຕົນເອງ ທີ່ສະໜອງໂດຍບໍລິສັດເອງ, ໂດຍຂາດແຫຼ່ງຂໍ້ມູນທີ່ເປັນຂໍ້ມູນທີ່ລົງ

## ຫ້ອງ 8: ລັກສະນະທີ່ສໍາຄັນຂອງກໍລະນີສຶກສາສາກົນ

**1. ບໍລິສັດເນຕີ ອາລັສກາແຫ່ງສະຫະລັດອາເມລິກາ (United States of America Alaska Native Corporations)** – ກໍລະນີສຶກສານີ້ ແມ່ນກ່ຽວຂ້ອງກັບການທີ່ລັດຖະບານຮັບຮູ້ສິດທິຕາມປະເພນີກ່ຽວກັບທີ່ດິນ ແລະ ປ່າໄມ້ ກ່ອນການລົງທຶນ. ມັນສະແດງໃຫ້ເຫັນເຖິງບົດບາດຂອງລັດຖະບານ ໃນການນໍາໜ້າ ແລະ ຊຸກຍູ້ການລົງທຶນຢ່າງມີຄວາມ ຮັບຜິດຊອບ ໂດຍການຮັບຮອງເອົາກອບກົດໝາຍທີ່ມີຄວາມເໝາະສົມໂດຍເຄົາລົບຕໍ່ສິດໃນ ການຄອບຄອງ ແລະ ປ່າໄມ້ຂອງຊຸມຊົນ, ອໍານວຍຄວາມສະດວກໃຫ້ແກ່ການສ້າງລາຍໄດ້ຈາກປ່າໄມ້ ສໍາລັບຊຸມຊົນ, ສົ່ງເສີມແມ່ຍິງດ້ານພາລະບົດບາດຕັດສິນໃຈສິ່ງທີ່ສໍາຄັນ ແລະ ຮັບປະກັນໃຫ້ຊຸມຊົນໄດ້ຮັບຜົນປະໂຫຍດຈາກວິສາຫະກິດປ່າໄມ້.

**2. ກໍລະນີສຶກສາ ບໍລິສັດ ມອນດີ (Mondi)** ຂອງອາຟຣິກາໃຕ້ ທີ່ມີການຮ່ວມມືກັບຊຸມຊົນ ກໍລະນີສຶກສານີ້ຍັງສະ ທ້ອນໃຫ້ເຫັນເຖິງບົດບາດຄວາມສໍາຄັນຂອງລັດຖະບານ ໃນການຮັບຮອງເອົາກອບກົດ ໝາຍຢ່າງມີຄວາມເໝາະສົມໃນການເຄົາລົບສິດທິດ້ານປ່າໄມ້ຂອງຊຸມຊົນ ໃນຮູບແບບການຂາຍ ແລະ ການໃຫ້ເຊົ່າ. ໃນໄລຍະເລີ່ມຕົ້ນຂອງການລົງທຶນ, ບໍລິສັດໄດ້ຊອກຫາການກໍານົດຄໍາຮ້ອງທຸກທີ່ກ່ຽວກັບທີ່ດິນຕາມປະເພນີທັງໝົດ, ປັບປຸງການອອກແບບໃນການລົງທຶນໂດຍອີງໃສ່ການປຶກສາຫາລືພາຍໃນທ້ອງຖິ່ນ, ຮັບປະກັນຂໍ້ຕົກລົງການເຊົ່າທີ່ດິນໃຫ້ມີຄວາມເພິ່ງພໍໃຈຂອງຊຸມຊົນທ້ອງຖິ່ນ, ສະໜັບສະໜູນຄະນະກໍາມະການບໍລິຫານໃນການຈັດຕັ້ງປະຕິບັດສັນຍາ ເຊົ່າກັບຜູ້ຕາງໜ້າທ້ອງຖິ່ນ ທີ່ໄດ້ຮັບການເລືອກຕັ້ງແບບປະຊາທິປະໄຕ, ແລະ ສະໜອງຮູບແບບການສະໜັບສະໜູນ ທີ່ຫຼາກຫຼາຍໃຫ້ແກ່ຊຸມຊົນ.

**3. ສະຫະກອນປະສົມຂອງປະເທດບຣາຊິລ ກ່ຽວກັບ ປ່າໄມ້ແຫ່ງຊາດ Tapajós (Brazil's Mixed Cooperative of the Tapajós National Forest)** – ກໍລະນີສຶກສານີ້ກ່ຽວຂ້ອງກັບສະຫະກອນປ່າໄມ້ໃນຊຸມຊົນ ທີ່ຄຸ້ມ ຄອງບໍລິຫານການສໍາປະທານປ່າໄມ້ພາຍໃນເຂດສະຫງວນປ່າໄມ້ແຫ່ງຊາດ. ກໍລະນີສຶກສາດັ່ງກ່າວ ໄດ້ຍົກໃຫ້ເຫັນ ທ່າແຮງຂອງການສໍາປະທານຂອງຊຸມຊົນ ເຊິ່ງເປັນແບບຢ່າງທາງເລືອກຂອງການລົງທຶນຢ່າງມີຄວາມຮັບຜິດຊອບໃນການຜະລິດໄມ້ແບບຍືນຍົງ ສໍາລັບຕະຫຼາດພາຍໃນ ແລະ ຕ່າງປະເທດ ແລະ ການນໍາໃຊ້ຜົນກໍາໄລດ້ວຍວິທີທາງທີ່ມີນະວັດ ຕະກໍາ ທີ່ໃຫ້ຜົນປະໂຫຍດຢ່າງຫຼວງຫຼາຍແກ່ຊຸມຊົນທ້ອງຖິ່ນ, ລວມທັງການຜະລິດ ແລະ ການສ້າງລາຍໄດ້ທີ່ຫຼາກຫຼາຍ ແລະ ປັບປຸງຄວາມສາມາດປັບໂຕຂອງຊຸມຊົນ.

**4. ກໍລະນີສຶກສາຂອງປະເທດການາ (Ghana)** ໃນການຟື້ນຟູ, ການຕິດຕາມກວດກາ. ແລະ ການຍົກຍ້າຍຈັດສັນຢ່າງມີຄວາມຮັບຜິດຊອບ – ກໍລະນີສຶກສານີ້ກ່ຽວຂ້ອງກັບຄວາມສໍາຄັນຂອງລະບົບການຄອບຄອງ ແລະ ການຄຸ້ມຄອງທີ່ດິນຕາມປະເພນີ ເຊິ່ງຄຸ້ມຄອງໂດຍຄອບຄົວ ແລະ ຜູ້ນໍາຕາມປະເພນີ ເຊິ່ງເປັນກໍລະນີທີ່ເກີດຂຶ້ນຫຼາຍ ໃນເຂດຊົນນະບົດຂອງປະເທດ ເຊຍຣາ ລີອອນ (Sierra Leone) ແລະ ບາງພາກຂອງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ. ມັນສະແດງ ໃຫ້ເຫັນເຖິງກໍລະນີການເຊົ່າເຂດປ່າສະຫງວນຈາກລັດຖະບານ, ການພັດທະນາແຜນການ ຕິດຕາມກວດກາຜົນກະທົບຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ, ການກະກຽມແຜນການຍົກຍ້າຍຈັດສັນປະຊາຊົນ ໂດຍນໍາໃຊ້ວິທີການທີ່ມີສ່ວນຮ່ວມກັບຊາວກະສິກອນທີ່ໄດ້ຮັບຜົນກະທົບ ແລະ ຊຸມຊົນຫຼັກ ກ່ຽວກັບທີ່ດິນປະເພນີ, ການຍົກຍ້າຍຈັດສັນຊາວກະສິກອນທ້ອງຖິ່ນຢ່າງມີຄວາມຮັບຜິດຊອບ, ລວມທັງການສະໜອງທີ່ດິນ ແລະ ປັບປຸງຊີວິດ ການເປັນຢູ່ ແລະ ການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນກັບການຈັດການແບ່ງປັນຜົນປະໂຫຍດລະຫວ່າງທຸກ ພາກສ່ວນທີ່ກ່ຽວຂ້ອງ.

**ແຫຼ່ງທີ່ມາ:** ລາຍລະອຽດຂອງຜູ້ຂຽນ







ເກັບກຳຕົວຈິງ; (ii) ບັນດາກໍລະນີສຶກສາທີ່ໄດ້ນຳສະເໜີໃນທີ່ນີ້ ໄດ້ນຳໃຊ້ ບາງການປະຕິບັດທີ່ດີກວ່າ ແລະ ອາດຈະບໍ່ໄດ້ແກ້ໄຂທຸກໆຄວາມທ້າທາຍໃນລະດັບທ້ອງຖິ່ນ. ຂໍ້ມູນທີ່ສົມບູນກວ່າ ກ່ຽວກັບຄວາມທ້າທາຍທີ່ຕໍ່ເນື່ອງບໍ່ສາມາດເກັບກຳໄດ້ ເນື່ອງຈາກມີຂໍ້ຈຳກັດທີ່ເກີດຈາກການຄົ້ນຄວ້າທາງເອ ກະສານ; (iii) ເນື່ອງຈາກຂໍ້ຈຳກັດດ້ານພື້ນທີ່, ເອກະສານສະບັບນີ້ແມ່ນບໍ່ໄດ້ລວມເອົາການວິເຄາະກໍລະນີສຶກສາ ຈຳນວນຫຼາຍທີ່ກ່ຽວຂ້ອງອື່ນໆຈາກທົ່ວໂລກ ຂອງບໍລິສັດ ແລະ ຜູ້ສ້າງນະໂຍບາຍຈາກປະເທດທີ່ຮັບຮອງເອົານະໂຍບາຍ ແລະ ການປະຕິບັດດ້ານການລົງທຶນຢ່າງມີຄວາມ ຮັບຜິດຊອບ; (iv) ກໍລະນີສຶກສາທີ່ໄດ້ນຳສະເໜີໃນທີ່ນີ້ອາດຈະບໍ່ສາມາດນຳໃຊ້ໄດ້ທັງໝົດ ກັບປະເທດ ເຊຍຣາ ລີອອນ (Sierra Leona) ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ແຕ່ຫຼາຍດ້ານຂອງກໍລະນີ ສຶກສາເຫຼົ່ານີ້ ສາມາດມີຄວາມກ່ຽວຂ້ອງ ຕໍ່ສະພາບນິຕິ ກຳໃນປະຈຸບັນ ຂອງປະເທດ ເຊຍຣາ ລີອອນ (Sierra Leone) ແລະ ສປປ ລາວ, ໃນຂະນະທີ່ບາງດ້ານ ສາມາດມີຄວາມກ່ຽວຂ້ອງຖ້າການປະຕິຮູບດ້ານກົດໝາຍໃນອະນາຄົດໄດ້ຮັບການຮັບຮອງເອົາໂດຍສອດຄ່ອງກັບຫຼັກການ VGGT ແລະ CFS-RAI.

## ບໍລິສັດ ເນຕິບອາລາສກາ ຂອງ ສະຫະລັດອາເມລິກາ (UNITED STATES OF AMERICA'S ALASKA NATIVE CORPORATIONS)

ໃນທົ່ວໂລກ, ຫຼາຍກວ່າ 50 ເປີເຊັນ ແລະ ສູງເຖິງ 65 ເປີເຊັນ ຂອງເນື້ອທີ່ດິນຂອງໂລກ ແມ່ນໄດ້ຮັບການຖືຄອງຕາມປະເພນີ ໂດຍຊຸມຊົນ, ໂດຍທີ່ລັດຖະບານໄດ້ມີການຮັບຮູ້ຢ່າງເປັນທາງການ ເຖິງສິດທິຂອງພວກເຂົາພຽງແຕ່ສ່ວນນ້ອຍເທົ່ານັ້ນ. ສະພາບການນີ້ ເຮັດໃຫ້ເກີດບັນຫາແກ່ການລົງທຶນ, ເປັນອັນຕະລາຍດ້ານສິ່ງແວດລ້ອມ ແລະ ວັດທະນະທຳ ແລະ ສ້າງຄວາມຂັດແຍ່ງ (RRI, 2015), ເຊິ່ງເກີດຂຶ້ນເປັນປົກກະຕິ ໃນຮູບແບບຂອງຄວາມຮຸນແຮງ ແລະ ການຟ້ອງຮ້ອງໃນບາງຂົງເຂດ. ການຍົກຍ້າຍຖິ່ນຖານ ຂອງປະຊາຊົນທ້ອງຖິ່ນ ມັກຈະກໍ່ໃຫ້ເກີດການຂັດແຍ້ງ, ເຊິ່ງສະແດງໃຫ້ເຫັນວ່າ ບໍລິສັດ ແລະ ລັດຖະບານຈຳນວນຫຼາຍບໍ່ໄດ້ຮັບຮູ້ສິດຄອບຄອງການນຳໃຊ້ທີ່ດິນ ແລະການຮຽກຮ້ອງສິດຄອບຄອງນຳໃຊ້ທີ່ມີຢູ່ກ່ອນ (ເຊັ່ນ. Munden Project Ltd, 2017). ວິທີການພື້ນຖານ ສຳລັບການຫຼຸດຜ່ອນຂໍ້ຂັດແຍ່ງທີ່ແຜ່ຂະຫຍາຍຢ່າງກວ້າງຂວາງ ແລະ ເຂັ້ມຂຸ້ນ ໃນຂະນະທີ່ວາງພື້ນຖານເພື່ອການພັດທະນາເສດຖະກິດ ແລະ ສັງຄົມທີ່ມີຄວາມສະເໝີພາບ ແລະ ຍືນຍົງ ແມ່ນຄວນມີການປະຕິບັດ ໂດຍການກຳນົດຜູ້ຖືຄອງ ແລະ ພາກສ່ວນກ່ຽວຂ້ອງ ທີ່ມີສິດຄອບຄອງນຳໃຊ້ທີ່ດິນທັງໝົດ ເພື່ອສ້າງຮູບແບບທຸລະກິດທີ່ມີສ່ວນຮ່ວມ. ພາຍໃຕ້ຫຼັກການ VGGT ແລະ CFS-RAI (ຫຼັກການ 5), ຕ້ອງເອົາໃຈໃສ່ເປັນພິເສດ ໃນການກຳນົດຜູ້ທີ່ມີສິດຄອບຄອງນຳໃຊ້ທີ່ດິນຕາມປະເພນີ, ຜູ້ນຳໃຊ້ຕໍ່ມື, ນຳໃຊ້ຕາມລະດູການ, ການນຳໃຊ້ ແລະ ສິດການຄອບຄອງທີ່ຊ້ຳຊ້ອນກັນ ແລະ ເພື່ອຮັບປະກັນການມີສ່ວນຮ່ວມຂອງກຸ່ມທີ່ດ້ອຍໂອກາດຕາມປະເພນີ, ລວມທັງ ແມ່ຍິງ, ຊາວໜຸ່ມ ແລະ ຊາວພື້ນເມືອງ.[7] ກອບກົດໝາຍທີ່ເຂັ້ມແຂງທີ່ໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງດີ ມີທ່າແຮງໃນການຮັບປະກັນຄວາມໝັ້ນຄົງໃນການຄອບຄອງທີ່ດິນ ສຳລັບຜູ້ມີສິດຄອບຄອງ

---

[7] ການກຳນົດສິດຄອບຄອງນຳໃຊ້ ແລະ ພາກສ່ວນກ່ຽວຂ້ອງທັງໝົດ ສຳລັບຮູບແບບທຸລະກິດແບບມີສ່ວນຮ່ວມ ອາດຈະຮຽກຮ້ອງໃຫ້ມີການທົບທວນຄືນບົດບັນທຶກກ່ຽວກັບທີ່ດິນ ແລະ ມີການປຶກສາຫາລືກັບຜູ້ຊ່ຽວຊານດ້ານກົດໝາຍແຫ່ງຊາດ ແລະ ປະເພນີການປະຕິບັດ, ພະນັກງານພາກລັດ ແລະ ຊຸມຊົນ (ລວມທັງຜ່ານການ ສ້າງແຜນທີ່ຮ່ວມກັນ). ມັນອາດຈະປະກອບມີການກຳນົດຂໍ້ຂັດແຍ່ງທີ່ກ່ຽວຂ້ອງກັບທີ່ດິນ.

ນຳໃຊ້ທີ່ດິນທີ່ບໍ່ເປັນທາງການ ແລະ ຕາມປະເພນີ ຢ່າງຖືກຕ້ອງຕາມກົດໝາຍ ແລະ ສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບ ແລະ ມີຄວາມເປັນເອກະພາບ.

ໃນສະຫະລັດອາເມລິກາ, ກົດໝາຍວ່າດ້ວຍການແກ້ໄຂຂໍ້ຮຽກຮ້ອງຂອງຊາວພື້ນເມືອງອາລາສກາ (1971) ແມ່ນໄດ້ຮັບການຮັບຮອງ ເພື່ອແກ້ໄຂຂໍ້ຮຽກຮ້ອງຂອງຊົນເຜົ່າພື້ນເມືອງເປັນເວລາຍາວນານ ແລະ ສະໜັບສະໜູນ ການພັດທະນາເສດຖະກິດໃນ ອາລາສກາ (Alaska). ກົດໝາຍໄດ້ເຮັດໃຫ້ຊາວອາລາສກາທັງຊາຍ ແລະ ຜູ້ຍິງທຸກຄົນ ທີ່ຍັງມີຊີວິດຢູ່ໃນວັນທີທີ່ໄດ້ຜ່ານກົດໝາຍ ຜູ້ຊາຍ, ແມ່ຍິງ, ຊາວໜຸ່ມ ແລະ ເດັກນ້ອຍ ທີ່ເປັນຊາວພື້ນເມືອງ ກາຍເປັນຜູ້ຖືຫຸ້ນໃນບໍລິສັດ Native Alaska (ANCs), ເຊິ່ງແມ່ນບັນດາຫົວໜ່ວຍທຸລະກິດທີ່ມີຜົນກຳໄລ ຂອງຊາວພື້ນເມືອງທັງໝົດ (ຫ້ອງການທີ່ມີໜ້າທີ່ຮັບຜິດຊອບຂອງລັດຖະບານອາເມລິກາ, 2012).ບໍລິສັດ ANC ແມ່ນພາຫະນະສຳລັບການແກ້ໄຂຂໍ້ຮຽກຮ້ອງລວມທັງສິດທິດ້ານທີ່ດິນ, ປ່າໄມ້ ແລະ ຊັບພະຍາກອນທຳມະຊາດ ທີ່ອຸດົມສົມບູນ ໃນລະດັບເຂດ ແລະ ຊຸມຊົນ. ANCs ກາຍເປັນເຈົ້າຂອງທີ່ດິນເອກະຊົນຈຳນວນເນື້ອທີ່ 44 ລ້ານ ເອການ (acres), ເຮັດໃຫ້ພວກເຂົາເປັນເຈົ້າຂອງທີ່ດິນເອກະຊົນ ທີ່ໃຫຍ່ທີ່ສຸດໃນລັດ. ປະຈຸບັນມີຜູ້ຖືຄອງ ANC ຈຳນວນ 130,000 ຄົນ ແລະ ພວກເຂົາເປັນ ເຈົ້າຂອງບາງວິສາຫະກິດທີ່ໃຫຍ່ທີ່ສຸດ ແລະ ແມ່ນໜຶ່ງໃນບັນດານາຍຈ້າງທີ່ໃຫຍ່ທີ່ສຸດໃນ Alaska (ສະພາພັດ ທະນາຊັບພະຍາກອນ n.d.).

ຕົວຢ່າງ, ບໍລິສັດ ANC Sealaska Corp ທີ່ຕັ້ງຢູ່ໃນເຂດ Juneau, ປະກອບມີຜູ້ຖືຫຸ້ນພື້ນເມືອງຫຼາຍກວ່າ 23,000 ຄົນທີ່ເປັນເຈົ້າຂອງເນື້ອທີ່ດິນປະມານ 360,000 ເອການ (acres), ລວມທັງທີ່ດິນທີ່ໄດ້ຮັບການສືບທອດຈາກບັນພະບຸລຸດ ແລະ ທີ່ດິນປ່າໄມ້. ສຳລັບປະຫວັດສາດສ່ວນໃຫຍ່, ມັນໄດ້ສຸມໃສ່ການຂຸດຄົ້ນໄມ້. ໃນປັດຈຸບັນ, ມັນສຸມໃສ່ການນຳໃຊ້ທີ່ດິນແບບຍືນຍົງ, ລວມທັງພື້ນທີ່ປ່າໄມ້ທີ່ຖືກກຳນົດໄວ້ເປັນແຫຼ່ງໃນການຫຼຸດຜ່ອນທາດກາກບອນ (Lasley, 2021; Sealaska n.d.; ການຄົ້ນຄວ້າ DHM, 2021). ປະຈຸບັນ, ຄະນະກຳມະການຜູ້ບໍລິຫານຂອງ Sealaska ແມ່ນມີແມ່ຍິງຊົນເຜົ່າພື້ນເມືອງຫຼາຍກ່ວາຜູ້ຊາຍພື້ນເມືອງທີ່ເປັນຕົວແທນຢູ່ໃນຄະນະ (Sealaska, 2020). Sealaska ໄດ້ບັນທຶກລາຍໄດ້ສຸດທິຈຳນວນ 65 ລ້ານໂດລາສະຫະລັດໃນປີ 2018, ເກືອບ 78 ລ້ານໂດລາສະຫະລັດໃນປີ 2019, ແລະ 56 ລ້ານໂດລາສະຫະລັດໃນປີ 2020 (Mysealaska, 2020). ບໍລິສັດ ໄດ້ມີການສະໜັບສະໜູນຊຸມຊົນຢ່າງກວ້າງຂວາງ, ລວມທັງຜ່ານໂຄງການປົກປັກຮັກສາພາສາພື້ນເມືອງ ແລະ ການບັນເທົາທຸກໃນສະພາບການສຸກເສີນ COVID-19 ເພື່ອສະໜັບສະໜູນຊາວພື້ນເມືອງ Alaskaໃນພື້ນທີ່ປະຕິບັດການຂອງບໍລິສັດ (ibid). ສິ່ງທ້າທາຍສຳຄັນທີ່ກຳລັງດຳເນີນຢ່າງຕໍ່ເນື່ອງ ຕໍ່ການຄຸ້ມຄອງ ບໍລິຫານຂອງ ANC ແມ່ນການປະຕິບັດ ໃຫ້ຖືກຕ້ອງຕາມກົດໝາຍຂອງ ANCs, ແລະ ຄວາມຕ້ອງການຂອງຊົນເຜົ່າ ອາເມລິກາພື້ນເມືອງ ທີ່ໃຫ້ຄວາມສຳຄັນຕໍ່ລັດຖະບານຊົນ ເຜົ່າທີ່ມີການພົວພັນລະຫວ່າງ ລັດຖະບານຕໍ່ລັດຖະບານກັບສະຫະລັດອາເມລິກາ. ການອອກແບບສະຖາບັນໃດໜຶ່ງໃນໄລຍະການອອກແບບການລົງທຶນ ແລະ ການກຳນົດຮູບແບບສິດນຳໃຊ້ທີ່ດິນ ແລະ ປ່າ ຄວນພິຈາລະນາເຖິງບັນຫາດ້ານນິຕິກຳກ່ອນສ້າງຕັ້ງສະຖາບັນໃໝ່ ແລະ ຄວນແກ້ໄຂຂໍ້ຂັດແຍ່ງໂດຍຜ່ານຂະບວນການທີ່ເປີດກວ້າງ ແລະ ມີສ່ວນຮ່ວມ ເພື່ອຮັບປະກັນໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຕາມປະເພນີ ມີສ່ວນຮ່ວມເຂົ້າໃນການວາງແຜນວິສາຫະກິດທ້ອງຖິ່ນ.

## ບໍລິສັດ ມອນດີ ຂອງອາຟຣິກາໃຕ້ (SOUTH AFRICA'S MONDI COMPANY) ຮ່ວມມືກັບເຈົ້າຂອງທີ່ດິນຕາມປະເພນີ

ໃນການກຳນົດສິດຄອບຄອງທີ່ດິນ ຕາມປະເພນີທົ່ວທະວີບອາຟຣິກາ, ບັນດາບໍລິສັດມັກຈະພົວພັນພຽງແຕ່ກັບຝ່າຍລັດຖະບານ ແລະ ອຳນາດການປົກຄອງ ຕາມປະເພນີ,ໃນຂະນະທີ່ລະເລີຍຄວາມຕ້ອງການໃນການມີສ່ວນຮ່ວມຂອງຊຸມຊົນແບບກວ້າງຂວາງ ໃນການຄອບຄອງທີ່ດິນຂະໜາດໃຫຍ່ ແລະ ການກະກຽມສັນຍາເຊົ່າ. ການຂາດການມີສ່ວນຮ່ວມຂອງຊຸມຊົນທີ່ເຂັ້ມແຂງ ແລະ ທົ່ວເຖິງ ສາມາດກາຍເປັນສິ່ງທີ່ສ້າງຂໍ້ຂັດແຍ່ງລະຫວ່າງບໍລິສັດ ແລະ ເຈົ້າຂອງທີ່ດິນຊຸມຊົນ (Herrmann, 2017). ການມີສ່ວນຮ່ວມ ແລະ ການປຶກສາຫາລື ຂອງຜູ້ມີສ່ວນຮ່ວມຢ່າງມີປະສິດຕິຜົນ (ຫຼັກການ CFS-RAI 9) ແມ່ນສ່ວນປະກອບທີ່ສຳຄັນຂອງການລົງທຶນທີ່ມີການນຳໃຊ້ທີ່ດິນຢ່າງມີຄວາມຮັບຜິດຊອບ, ໂດຍສະເພາະໃນບັນດາປະເທດທີ່ບັນດາກຸ່ມບໍລິສັດມີບົດບາດ ແລະ ມີການດຳເນີນການທີ່ກ່ຽວຂ້ອງກັບຊຸມຊົນ.

ອຸດສາຫະກຳປ່າໄມ້ໃນອາຟຣິກາໃຕ້ ສ່ວນໃຫຍ່ແມ່ນເປັນຂອງບໍລິສັດເອກະຊົນ, ເຊິ່ງບໍລິສັດເອກະຊົນ ເປັນເຈົ້າຂອງ ແລະ ດຳເນີນການປະມານ 56 ເປີເຊັນຂອງອຸດສະກຳ







### ຫ້ອງ 9. ຮູບແບບການຮ່ວມມືລະຫວ່າງ ຊຸມຊົນ ແລະ ບໍລິສັດ ມອນດີ (Mondi)

ໃນໄລຍະເລີ່ມຕົ້ນຂອງໂຄງການ, ຄະນະກຳມະການແກ້ໄຂການຮ້ອງທຸກ ດ້ານທີ່ດິນໃນພາກພື້ນຂອງອາຟຣິກາໃຕ້ (RLCC) ໄດ້ເຕົ້າໂຮມສອງຊຸມຊົນທີ່ເປັນຜູ້ຮ້ອງທຸກ ແລະ ບໍລິສັດ Mondi ເພື່ອຄົ້ນຫາຮູບແບບທຸລະກິດທີ່ມີທ່າແຮງ. ຮູບແບບໜຶ່ງທີ່ມີການສະເໜີໃນເບື້ອງຕົ້ນ ແມ່ນສາມາດເຮັດໃຫ້ ບໍລິສັດ Mondi ສາມາດໂອນ, ໂດຍຜ່ານ RLCC, ທັງທີ່ດິນ ແລະ ຕົ້ນໄມ້ ໃຫ້ແກ່ຊຸມຊົນໂດຍມີຂໍ້ຕົກລົງໃນການສະໜອງ ແລະ ຮ່ວມທຸລະກິດກ່ຽວກັບການປູກໄມ້. ບັນດາຜູ້ຕາງໜ້າຊຸມຊົນ ໄດ້ປະຕິເສດຂໍ້ສະເໜີ ດັ່ງກ່າວເນື່ອງຈາກວ່າພວກເຂົາຮູ້ສຶກວ່າ ຂາດການສະໜອງການພັດທະນາ ແລະ ການຈັດຕັ້ງທີ່ຊຸມຊົນເປັນເຈົ້າການຢ່າງ ເປັນເອກະລາດ. ຫຼັງຈາກນັ້ນ ບໍລິສັດ Mondi ໄດ້ສະເໜີຮູບແບບ ທຸລະກິດທາງເລືອກໃໝ່ ຮູບແບບ ຂາຍ ແລະ ເຊົ່າຄືນ ເຊິ່ງຕໍ່ມາຊຸມຊົນ ແລະ ລັດຖະບານ ໄດ້ຍອມຮັບ ພາຍໃຕ້ຮູບແບບດັ່ງກ່າວ, ບໍລິສັດ Mondi ໄດ້ລົງນາມໃນຂໍ້ ຕົກລົງການຂາຍ ກັບລັດຖະບານອາຟຣິກາໃຕ້ໂດຍຜ່ານ RLCC. ພາຍໃຕ້ຂໍ້ຕົກລົງການຂາຍດັ່ງກ່າວ, RLCC ໄດ້ມີການຊຳລະໃຫ້ແກ່ ບໍລິສັດ Mondi ໃນລາຄາ ຕະຫຼາດ ມູນຄ່າ (USD 1.2 ລ້ານ) ເພື່ອຊື້ທີ່ດິນ. ຫຼັງຈາກການຂາຍ, ບໍລິສັດ Mondi ໄດ້ເຊັນສັນຍາເຊົ່າ ກັບຊຸມຊົນ (ມີການຈັດຕັ້ງເປັນກອງທຶນລວມ) ເພື່ອເຊົ່າທີ່ດິນຄືນເປັນເວລາ 20 ປີ. ໃນເບື້ອງຕົ້ນ, ບໍລິສັດ Mondi ໄດ້ສະເໜີໃນການເຮັດວຽກກັບບໍລິສັດຊຸມຊົນພຽງແຕ່ບໍລິສັດດຽວ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍໃນການບໍລິຫານ,ແຕ່ຊຸມຊົນໄດ້ປະຕິເສດຂໍ້ສະເໜີດັ່ງກ່າວ ແລະ ຮັບເອົາ 2 ທຸລະກິດ ແລະ ກອງທຶນຊຸມຊົນທີ່ແຍກກັນ ດ້ວຍເຫດນັ້ນ, ບໍລິສັດ Mondi ໄດ້ດັດແກ້ສັນຍາ ແລະ ໄດ້ສ້າງຂໍ້ກຳນົດສຳລັບການສ້າງສອງກອງທຶນຊຸມຊົນເຊິ່ງແຕ່ລະແຫ່ງໄດ້ສ້າງຕັ້ງບໍລິສັດຊຸມຊົນ ຂອງຕົນເອງ.

**ແຫຼ່ງທີ່ມາ: Chamberlain, W**. 2017. *ທີ່ດິນທີ່ຊຸມຊົນເປັນເຈົ້າຂອງທີ່ເປັນສວນປູກໄມ້ເພື່ອການຄ້າ* - Mondi in Kranskop. In W. Chamberlain and W. Anseeuw, eds. *ທຸລະກິດທີ່ມີສ່ວນຮ່ວມ ໃນດ້ານກະສິກຳ: ແມ່ນຫຍັງ, ດ້ວຍວິທີການໃດ ແລະ ເພື່ອໃຜ? ຄວາມເຂົ້າໃຈທີ່ສຳຄັນໂດຍອີງໃສ່ກໍລະນີສຶກສາ ຂອງອາຟຣິກາໃຕ້* (ໜ້າ 137-150). https://agritrop.cirad.fr/584519/1/9781928355090.pdf

ປູກໄມ້, ທຽບໃສ່ 23 ເປີເຊັນທີ່ເປັນເຈົ້າຂອງ ແລະ ດຳເນີນການໂດຍ ຊາວກະສິກອນທີ່ດຳເນີນການຄ້າສ່ວນບຸກຄົນ ແລະ 14 ເປີເຊັນພາຍໄຕ້ການຄຸ້ມຄອງຂອງລັດຖະບານ (Makhathini, 2010). ໃນສະພາບການດັ່ງກ່າວ, ກຸ່ມຜະລິດເຈ້ຍ ແລະ ສິ່ງຫຸ້ມຫໍ່ສາກົນ ແລະ ນັກລົງທຶນ ຂອງບໍລິສັດ Mondi ຂະໜາດໃຫຍ່ມີສວນປູກໄມ້ ໃນຂະແໜງປ່າໄມ້ໃນອາຟຣິກາໃຕ້ ເຊິ່ງເປັນໄມ້ວິກ (77 ເປີເຊັນ), ໄມ້ແປກ (12 ເປີເຊັນ), ແລະ ຕົ້ນວາເທີ (ຕະກຸນໄມ້ອາກາເຊຍ) (11 ເປີເຊັນ). ໃນເບື້ອງຕົ້ນຂອງ ຂະບວນການລົງທຶນ,ບໍລິສັດ Mondi ໄດ້ຮູ້ວ່າ ມີ 60 ກຸ່ມໄດ້ມີການຮຽກຮ້ອງຈາກການສູນເສຍທີດິນທີ່ເຄີຍ ທຳມາຫາກິນທີ່ຜ່ານມາຂອງພວກເຂົາ ໃນຈຳນວນ 54 ເປີເຊັນຂອງເນື້ອທີ່ດິນທີ່ Mondi ເປັນເຈົ້າຂອງ. ໃນປີ 2008,ບໍລິສັດໄດ້ສ້າງຕັ້ງພະແນກທີ່ດິນ

ເພື່ອຄຸ້ມຄອງ ແລະ ກວດສອບການຮຽກຮ້ອງຄ່າຊົດເຊີຍທີ່ດິນ ແລະ ສິດທິອື່ນໆຂອງຊຸມຊົນທີ່ອາໄສຢູ່ໃນທີ່ດິນເຂດດັ່ງກ່າວ ແລະ ຕອບສະໜອງຕໍ່ຄວາມຕ້ອງການຂອງຊຸມຊົນໃກ້ຄຽງ,ໂດຍສອດຄ່ອງກັບລະບຽບກົດໝາຍວ່າດ້ວຍ ການເວນ ຄືນທີ່ດິນ (1994) (Makhathini, 2010; Chamberlain, 2017).ໃນ Kranskop, ຊຸມຊົນຜູ້ຮຽກຮ້ອງກ່ຽວກັບບັນຫາທີ່ດິນທີ່ອາໄສຢູ່ໃນທີ່ດິນເຂດຊົນເຜົ່າ ທີ່ມີໂອກາດທາງເສດຖະກິດ-ສັງຄົມທີ່ຈຳກັດ, ລະດັບຄວາມທຸກຍາກສູງ,ລະດັບການສຶກສາຕໍ່າ, ຂາດທັກສະ ແລະ ບໍ່ມີວຽກເຮັດງານທຳ ແລະ ມີພື້ນຖານໂຄງລ່າງດ້ານຮູບປະທຳທີ່ຈຳກັດ. ພະແນກທີ່ດິນຂອງບໍລິສັດ Mondi ໄດ້ພັດທະນາຮູບແບບຂາຍ ແລະ ເຊົ່າຄືນ” ເພື່ອແກ້ໄຂການຮຽກຮ້ອງດ້ານທີ່ດິນຂອງຊຸມຊົນ ແລະ ສ້າງການຮ່ວມມືລະຫວ່າງຊຸມຊົນ ແລະ ບໍລິສັດ (ເບິ່ງຫ້ອງ 9 ສຳລັບຂໍ້ມູນເພີ່ມເຕີມ). ໄດ້ມີການຈັດຕັ້ງປະຕິບັດທີ່ສຳເລັດຜົນໃນການແກ້ໄຂຂໍ້ຮຽກຮ້ອງຂອງ Kranskop.

ຮູບແບບທຸລະກິດຂອງ ບໍລິສັດ Mondi ເປັນຕົວຢ່າງໃຫ້ແກ່ການລົງທຶນທີ່ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນທີ່ເຂັ້ມແຂງ ໃນຫຼາຍດ້ານ. ດ້ານທຳອິດແມ່ນ ບໍລິສັດ Mondi ໄດ້ຈັດກອງປະຊຸມຫຼາຍໆຄັ້ງກັບຊຸມຊົນກ່ອນທີ່ຈະສ້າງຂໍ້ຕົກລົງສັນຍາການເຊົ່າ, ເຮັດໃຫ້ຊຸມຊົນຜູ້ຮ້ອງທຸກເຂົ້າ ໃຈເຖິງຜົນປະໂຫຍດທີ່ອາດຈະເກີດຂຶ້ນ ຈາກການດຳເນີນທຸລະກິດປູກໄມ້ທີ່ເປັນການຄ້າ. ຜ່ານການເຈລະຈາ, ຊຸມຊົນໄດ້ຕົກລົງທີ່ຈະຮັກສາການດຳເນີນງານກ່ຽວກັບກິດຈະກຳປ່າໄມ້ ໃນທີ່ດິນທີ່ຊຸມຊົນເປັນເຈົ້າຂອງໃນປະຈຸບັນ ແລະ ຈະໄດ້ເຊື່ອມໂຍງເຂົ້າກັບລະບົບມູນຄ່າທາງການຄ້າຂອງ Mondi. ດ້ານທີສອງແມ່ນ ບໍລິສັດ Mondi ຍັງຮັກ ສາຄວາມເປັນເຈົ້າຂອງຕົ້ນໄມ້ໃນທີ່ດິນຂອງຊຸມຊົນ. ບໍລິສັດ Mondi ມີສັນຍາເຊົ່າລະຫຼອດ 20 ປີໃນຕອນດິນຂອງຊຸມຊົນ ແລະ ຊຸມຊົນສາມາດນຳໃຊ້ທີ່ດິນທີ່ບໍ່ມີການປູກ ຫຼື ບໍ່ເໝາະສົມພາຍໃນສວນປູກໄມ້ສຳລັບກິດຈະກຳຕ່າງໆ, ເຊັ່ນ: ການລ້ຽງສັດ,ຖ້າກິດຈະກຳດັ່ງກ່າວປະຕິບັດຕາມມາດຕະຖານປ່າໄມ້.ຜ່ານສັນຍາເຊົ່າ, ບໍລິສັດ Mondi ເຮັດໃຫ້ຊຸມຊົນມີສ່ວນຮ່ວມ ໂດຍຜ່ານກິດຈະກຳການສ້າງຄວາມເຂັ້ມແຂງຫຼາຍຢ່າງ ລວມທັງການຊ່ວຍເຫຼືອໃນການສ້າງຕັ້ງບໍລິສັດຕາມສັນຍາ ແລະ ເຮັດສັນຍາກັບທຸລະກິດທີ່ຊຸມຊົນເປັນເຈົ້າຂອງ, ບໍລິການໃຫ້ຄຳປຶກສາດ້ານການເງິນແກ່ກອງທຶນຊຸມຊົນ, ສ້າງງົບປະມານ ການລົງທຶນເພື່ອຊ່ວຍເຫຼືອສັງຄົມຂອງ ບໍລິສັດ Mondi (CSI) ສຳລັບໂຄງການຊຸມຊົນ, ການພັດທະນາທີ່ຢູ່ອາໄສ ແລະ ພື້ນຖານໂຄງລ່າງຂອງຊຸມຊົນ ແລະ ໂຄງການໃຫ້ທຶນການສຶກສາ ເພື່ອສະໜັບສະໜູນ ການສຶກສາຊັ້ນສູງ ແລະ ການເຝິກງານ ສຳລັບນັກຮຽນທີ່ໄດ້ຮັບການຄັດເລືອກ ຈາກຊຸມຊົນ. ດ້ານທີສາມ, ຄະນະກຳມະການບໍລິຫານ, ທີ່ໄດ້ຮັບການກຳນົດໄວ້ໃນຂໍ້ຕົກລົງການແກ້ໄຂການຮ້ອງທຸກ ລວມມີບໍລິສັດ Mondi, ສະມາຊິກກອງທຶນຊຸມຊົນທີ່ໄດ້ຮັບການເລືອກຕັ້ງ ແບບປະຊາທິປະໄຕ ແລະ ຜູ້ຕາງໜ້າລັດຖະບານ,ເຊິ່ງເປັນຜູ້ທີ່ຮ່ວມກັນຮັບຜິດຊອບ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງການແກ້ໄຂຄຳຮ້ອງທຸກ ແລະການກຳນົດນະໂຍບາຍໃນໄລຍະກາງ ແລະ ໄລຍະຍາວ. ກອງທຶນຊຸມຊົນ ແມ່ນບັນດາຫົວໜ່ວຍ ທີ່ເປັນເຈົ້າ ຂອງທີ່ດິນໃນນາມຂອງຊຸມຊົນຂອງພວກເຂົາ ແລະ ກຳນົດນະໂຍບາຍກ່ຽວກັບບັນຫາການພັດທະນາທີ່ດິນ ແລະ ຊຸມຊົນ ແລະ ສອດຄ່ອງກັບສັນຍາເຊົ່າກັບບໍລິສັດ Mondi. ລັດຖະບານ ຕິດຕາມກວດກາ ແລະ ບັງຄັບໃຊ້ສັນຍາເຊົ່າ. ສຸດທ້າຍ, ການເລືອກຕັ້ງຕົວແທນຜູ້ທີ່ຮັບຜິດຊອບຜົນປະໂຫຍດຂອງຊຸມຊົນຢ່າງມີປະຊາທິປະໄຕ ໃຫ້ສະມາຊິກຊຸມຊົນອອກສຽງເລືອກຜູ້ທີ່ຈະເປັນຕົວແທນຮັບຜິດຊອບ ເບິ່ງແຍງຜົນປະໂຫຍດຂອງພວກເຂົາໂດຍບໍ່ຈຳເປັນຕ້ອງອີງໃສ່ອຳນາດການປົກຄອງຕາມປະເພນີ ຜູ້ເຊິ່ງຜົນປະໂຫຍດຂອງພວກເຂົາອາດຈະບໍ່ສອດຄ່ອງກັບຄວາມຕ້ອງການຂອງສະມາຊິກຊຸມຊົນ (Makhathini, 2010; Chamberlain, 2017).

ພາຍໃຕ້ການຮ່ວມມືຂອງ ບໍລິສັດ ແລະ ຊຸມຊົນ, ຊຸມຊົນໄດ້ຮັບຜົນປະໂຫຍດຈາກຄ່າເຊົ່າ ແລະ ຄ່າຕົ້ນໄມ້ ທີ່ບໍລິສັດ Mondi ເປັນຜູ້ຊຳລະໃຫ້. ຊຸມຊົນໄດ້ສ້າງຕັ້ງສອງຫົວໜ່ວຍທຸລະກິດ ທີ່ເປັນເຈົ້າຂອງໂດຍ ກອງທຶນລວມ ແລະ ເຮັດສັນຍາກັບບໍລິສັດ ເພື່ອດຳເນີນກິດຈະກຳບົວລະບັດດູແລສວນປູກໄມ້[8] (Makhathini, 2010; Chamberlain, 2017), ເຊິ່ງປະກອບສ່ວນເຂົ້າໃນຫຼັກການ 2 ຂອງ CFS-RAI. ການນຳໃຊ້ກໍລະນີສຶກສາຂອງບໍລິສັດ Mondi ຂອງອາຟຣິກາໃຕ້ ແມ່ນກ່ຽວກັບໂອກາດຂອງການເຊົ່າທີ່ດິນ ແລະ ປ່າໄມ້ ຈາກເຈົ້າຂອງທີ່ດິນຕາມປະເພນີ ແລະ ການສ້າງການຮ່ວມມືກັບຜູ້ທີ່ມີສິດຄອບຄອງທີ່ດິນຕາມປະເພນີທີ່ໄດ້ຮັບການຮັບຮູ້ຢ່າງເປັນທາງການ.

[8] ກິດຈະກຳການປູກແລະບຳລຸງຮັກສາສວນປູກ ເຫຼົ່ານີ້ລວມມີການກະກຽມທີ່ດິນ, ການເສຍຫຍ້າໃນພື້ນທີ່ສວນປູກ, ການປົກປັກຮັກສາພື້ນທີ່ອະນຸລັກທີ່ບໍ່ໄດ້ມີການປູກ, ການສ້າງສວນປູກໄມ້ອີກ, ການປ້ອງກັນໄຟປ່າ ແລະ ການດັບໄຟປ່າ.

ຍິ່ງໄປກວ່ານັ້ນ, ກໍລະນີສຶກສາໄດ້ສະແດງໃຫ້ເຫັນເຖິງການປະຕິບັດທີ່ດີກວ່າຫຼາຍຢ່າງ ເຊັ່ນ:ໃນການກຳນົດຄຳຮ້ອງທຸກກ່ຽວຂ້ອງກັບທີ່ດິນຕາມປະເພນີທັງໝົດ, ການປັບຮູບແບບແບບການລົງທຶນ ໂດຍອີງໃສ່ການປຶກສາຫາລືໃນຂັ້ນທ້ອງຖິ່ນ, ຂໍ້ຕົກລົງໃນການເຊົ່າທີ່ດິນທີ່ມີຄວາມໝາຍກັບຊຸມຊົນທ້ອງຖິ່ນ, ຄະນະກຳມະການບໍລິຫານທີ່ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດສັນຍາເຊົ່າກັບຜູ້ຕາງໜ້າທ້ອງຖິ່ນ ທີ່ໄດ້ຮັບການເລືອກຕັ້ງແບບປະຊາທິປະໄຕ ແລະ ການສະໜອງການສະໜັບສະໜູນຮູບແບບຕ່າງໆໃຫ້ແກ່ຊຸມຊົນ.

### ສະຫະກອນປະສົມກ່ຽວກັບປ່າໄມ້ແຫ່ງຊາດຂອງ TAPAJÓS ແຫ່ງປະເທດບຣາຊິລ (BRAZIL'S MIXED COOPERATIVE OF THE TAPAJÓS NATIONAL FOREST (COOMFLONA)

ໃນເຂດປ່າ ອາເມຊອນ (Amazon), ການລັກລອບຕັດໄມ້ທີ່ຜິດກົດໝາຍ ແມ່ນສາຍເຫດສຳຄັນຂອງການເຊື່ອມໂຊມຂອງປ່າ. ບາງອັດຕາການຕັດໄມ້ທຳລາຍປ່າທີ່ສູງທີ່ສຸດ ແມ່ນຢູ່ໃນລັດ ປາຣາ (Pará) ຂອງປະເທດບຣາຊິລ. ເຂດປ່າໄມ້ແຫ່ງຊາດ Tapajós (TNF) ເມື່ອສ້າງຂຶ້ນໃນປີ 1974 ແມ່ນມີຈຸດປະສົງຕົ້ນຕໍໃນການຜະລິດໄມ້. ມັນໄດ້ຖືກສ້າງຂຶ້ນໂດຍບໍ່ໄດ້ຮັບຄວາມເຫັນດີເຫັນພ້ອມຈາກຊຸມຊົນທ້ອງຖິ່ນທີ່ອາໄສຢູ່ໃນພື້ນທີ່ດັ່ງກ່າວ (Espada ແລະ Sobrinho, 2019). ໃນປີ 2000, ປະເທດບຣາຊິລ ໄດ້ຮັບຮອງເອົາກົດໝາຍວ່າດ້ວຍລະບົບແຫ່ງຊາດຂອງ ໜ່ວຍງານອະນຸລັກ (ກົດໝາຍເລກທີ: 9.985/2000) ທີ່ໃຫ້ສິດແກ່ຊຸມຊົນທີ່ຈະອາໄສຢູ່ໃນປ່າສາທາລະນະ (Humphries *et al.*, 2015). ໃນປີ 2004, ລັດຖະບານບຣາຊິລ ໄດ້ຮັບຮູ້ສິດທິຂອງທ້ອງຖິ່ນກ່ຽວກັບທີ່ດິນ ແລະ ປ່າໄມ້ໃນ TNF ໂດຍຜ່ານສັນຍາການສຳປະທານ ການນຳໃຊ້ທີ່ດິນ ເຊິ່ງອະນຸຍາດໃຫ້ 3 ສະມາຄົມ ໃນຊຸມຊົນຈັດຕັ້ງປະຕິບັດການຄຸ້ມຄອງປ່າໄມ້ຊຸມຊົນ ເພື່ອຈຸດ ປະສົງການລ້ຽງຊີບ ແລະ ເພື່ອການຄ້າ. ຊຸມຊົນເຫຼົ່ານີ້ໄດ້ ຈັດຕັ້ງຕົນເອງຂຶ້ນເປັນສະຫະກອນປະສົມຂອງປ່າໄມ້ ແຫ່ງຊາດ Tapajós Cooperativa Mista Verde da Flona do Tapajós (COOMFLONA) ສະຫະກອນຄຸ້ມຄອງປ່າໄມ້ຂອງຊຸມຊົນ ໄດ້ມີການຄຸ້ມ ຄອງບໍລິຫານ ໃຫ້ມີຜົນກຳໄລ ແລະ ເປັນທຸລະກິດໄມ້ເກົ່າແກ່ ທີ່ມີຄວາມຍືນຍົງ (Espada ແລະ Sobrinho, 2019).

ໃນປະຈຸບັນ, COOMFLONA ໄດ້ເຕີບໂຕເປັນຮູບແບບການຄຸ້ມຄອງປ່າໄມ້ຊຸມຊົນໃນຂົງເຂດອາເມຊອນ ແລະ ເປັນແບບຢ່າງທີ່ສຳຄັນຂອງສາກົນ"(Espada ແລະ Sobrinho, 2019). ມັນແມ່ນສະຫະກອນໜຶ່ງດຽວ ທີ່ມີການຈັດຕັ້ງປະຕິບັດການສຳປະທານໃນປ່າແຫ່ງຊາດຂອງປະເທດບຣາຊິລ, ໃນຂະນະທີ່ບັນດາບໍລິສັດອຸດສາຫະກຳສືບຕໍ່ຄຸ້ມຄອງປ່າໄມ້ແຫ່ງຊາດອື່ນໆ. ສະຫະກອນໄດ້ນຳໃຊ້ເຕັກນິກການຕັດໄມ້ທີ່ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ (Humphries, Andrade ແລະ McGrath, 2015) ແລະ ໃນປີ 2013 ມັນໄດ້ຮັບການຢັ້ງຢືນ ຈາກສະພາຄຸ້ມຄອງປ່າໄມ້ (FSC) ໃນການສະໜອງແຫຼ່ງໄມ້ທ່ອນທີ່ຖືກຕ້ອງຕາມກົດໝາຍ ແລະ ຕອບສະໜອງໄດ້ມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ສູງສຸດ. ມັນໄດ້ສ້າງວຽກເຮັດງານທຳ, ລາຍໄດ້ ແລະ ຜົນປະໂຫຍດທາງສັງຄົມອື່ນໆ ໃຫ້ແກ່ສະມາຊິກຊຸມຊົນ. ໂດຍສະເພາະ, ສະຫະກອນ ແມ່ນແຫຼ່ງການຈ້າງງານຫຼັກສຳລັບສະມາຊິກຊຸມຊົນ, ແລະ ພະນັກງານສະຫະກອນເກືອບທັງໝົດແມ່ນຜູ້ອາໄສຢູ່ໃນ TNF ແລະ ເປັນສະມາຊິກຂອງສະຫະກອນ (Espada ແລະ Sobrinho, 2019).

ຜົນສຳເລັດຂອງສະຫະກອນແມ່ນ ເປັນຜົນມາຈາກການຄຸ້ມຄອງບໍລິຫານຂອງຫຼາຍພາກສ່ວນ ທີ່ໄດ້ອະນຸຍາດໃຫ້ສະມາຊິກສະຫະກອນສ້າງຄວາມຮູ້ດ້ານວິຊາການ, ໄດ້ຮັບການສະໜັບສະໜູນດ້ານການຈັດຕັ້ງ, ແກ້ໄຂບັນດາສິ່ງທ້າທາຍຕ່າງໆທີ່ພົບໃນແຕ່ລະໄລຍະ ແລະ ສ້າງຄວາມສາມາດໃນການຟື້ນຕົວຄືນ. ຍົກຕົວຢ່າງ, ສະຖາບັນ Chico Mendes ເພື່ອການອະນຸລັກຊີວະນາໆພັນຂອງກະຊວງສິ່ງແວດລ້ອມ ແຫ່ງປະເທດບຣາຊິລ (ICMBio) ໄດ້ໃຫ້ການສະໜັບສະໜູນທີ່ສຳຄັນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການ ສົນທະນາປຶກສາຫາລື ລະຫວ່າງສະຫະກອນ ແລະ ອົງການລັດຖະບານກາງອື່ນໆ, ຊ່ວຍສະຫະກອນໃນການເຈລະຈາ ທາງດ້ານການຄ້າ,ສອດຄ່ອງກັບຂໍ້ກຳນົດດ້ານກົດໝາຍ, ແກ້ໄຂຂໍ້ຂັດແຍ່ງພາຍໃນ ແລະ ໄດ້ຮັບທຶນເພື່ອປະຕິບັດໂຄງການ (Espada ແລະ Sobrinho, 2019; Humphries, Andrade and McGrath, 2015). ບັນດາອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs) ໄດ້ໃຫ້ການສະໜັບສະໜູນທີ່ສຳຄັນ ເຊັ່ນ:ການຝຶກອົບຮົມໃນການຄຸ້ມຄອງປ່າໄມ້, ແລະ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງ ແລະ ການປະຕິບັດທາງດ້ານການເງິນ.ສະຫະກອນໄດ້ນຳໃຊ້ຜົນກຳໄລ ໂດຍວິທີການທີ່ສ້າງສັນເພື່ອຊ່ວຍຊຸມຊົນໃຫ້ມີການຜະລິດ ແລະ ແຫຼ່ງລາຍໄດ້ທີ່ຫຼາກຫຼາຍນອກ










ເໜືອຈາກໄມ້,ບຳລຸງຮັກສາພື້ນຖານໂຄງລ່າງເຊັ່ນ: ຖະໜົນຫົນທາງ ເຊິ່ງອຳນວຍຄວາມສະດວກໃນການເຂົ້າເຖິງສິ່ງອຳນວຍຄວາມສະດວກໃນເຂດຕົວເມືອງ ແລະ ເຂົ້າເຖິງຕະຫຼາດ, ສະໜອງສະຫວັດດີການທາງສັງຄົມ, ການເຂົ້າເຖິງການສຸຂະອານາໄມ ແລະ ການສຶກສາໃນຂົງເຂດທີ່ທຸກຍາກ ແລະ ຂາດການບໍລິການຂັ້ນພື້ນຖານ. ຄວາມຫຼາກຫຼາຍຂອງການຜະລິດໄດ້ເພີ່ມການສ້າງວຽກເຮັດງານທຳ ແລະ ນຳລາຍໄດ້ເປັນເງິນສົດມາສູ່ທ້ອງຖິ່ນຫຼາຍຂຶ້ນ (Espada ແລະ Sobrinho, 2019).

ຮູບແບບດັ່ງກ່າວມີທ່າແຮງ ໃນການຂະຫຍາຍການປະຕິບັດໃນປະເທດບຣາຊິລ ກໍ່ຄືພາກສ່ວນອື່ນໆຂອງໂລກ ບ່ອນທີ່ຊຸມຊົນມີສິດໃນການນຳໃຊ້ປ່າໄມ້ເພື່ອການຄ້າ.[9] ຮູບແບບດັ່ງກ່າວ, ເມື່ອມີການຈັດຕັ້ງປະຕິບັດທີ່ດີພ້ອມດ້ວຍການສະໜັບສະໜູນທີ່ເໝາະສົມຂອງໜ່ວຍງານລັດຖະບານ ແລະ ບໍ່ແມ່ນລັດຖະບານ, ສາມາດສະໜອງທາງເລືອກທີ່ສຳຄັນຕໍ່ການສຳປະທານການຕັດໄມ້ຂອງເອກະຊົນທີ່ດຳເນີນການທີ່ມີປະສິດທິຜົນຕ່ຳ, ບໍ່ສາມາດຕອບສະໜອງຄວາມຕ້ອງການດ້ານວັດຖຸດິບ, ບ່ອນທີ່ໄມ້ຜິດກົດໝາຍມີສ່ວນແບ່ງຫຼາຍໃນຕະຫຼາດໄມ້ (CNI 2018). ກໍລະນີສຶກສາດັ່ງກ່າວ ສະແດງໃຫ້ເຫັນເຖິງວິທີທີ່ໃຫ້ສິດທາງດ້ານການຄ້າ ຕໍ່ປ່າໄມ້ໃນການຮັບຮູ້ສິດທີ່ຖືກຕ້ອງຕາມກົດໝາຍ (ຫຼັກການທົ່ວໄປ 1 ຂອງ VGGT) ຄຽງຄູ່ກັບການສະໜັບສະໜູນ ທາງດ້ານການຄ້າ ແລະ ການຈັດຕັ້ງປະຕິບັດເພື່ອບັນລຸເປົ້າໝາຍ (ຫຼັກການທົ່ວໄປ 3 VGGT) ສາມາດໃຫ້ຜົນປະໂຫຍດທີ່ກວ້າງຂວາງສຳລັບຊຸມຊົນ ແລະ ປະກອບສ່ວນເຂົ້າໃນຕະຫຼາດໄມ້ທັງພາຍໃນ ແລະ ສາກົນ ແລະ ຕະຫຼາດຜະລິດຕະພັນ

[9] ນັບແຕ່ຊຸມປີ 1980, ບັນດາລັດຖະບານທົ່ວໂລກ ໄດ້ໃຫ້ສິດທີ່ຫຼາຍຂຶ້ນດ້ານປ່າໄມ້ ແກ່ຊຸມຊົນ ແລະ ຊາວກະສິກອນຂະໜາດນ້ອຍ, ລວມທັງການຮັບຮູ້ສິດໃນພື້ນທີ່ປ່າໄມ້ທີ່ມີຄວາມສົມບູນດ້ານລະບົບນິເວດ ຫຼາຍກ່ວາເຂດປ່າໄມ້ທີ່ຊຸດໂຊມ, ແລະ ສິດໃນການນຳໃຊ້ຜະລິດຕະພັນປ່າໄມ້ທີ່ເປັນໄມ້ ແລະ ບໍ່ແມ່ນໄມ້ ແທນທີ່ຈະຈຳກັດການນຳໃຊ້ພຽງແຕ່ເພື່ອການລ້ຽງຊີບເທົ່ານັ້ນ (Aggarwal *et al.*, 2021).

ປ່າໄມ້ອື່ນໆ. ສິ່ງທີ່ສຳຄັນທີ່ສຸດ, ກໍລະນີສຶກສານີ້ຮັບຮູ້ຄວາມຈິງທີ່ວ່າ ພຽງແຕ່ຮັບຮູ້ ຫຼື ໃຫ້ສິດແມ່ນມັກຈະບໍ່ພຽງພໍສຳລັບຊຸມຊົນທ້ອງຖິ່ນ ທີ່ຈະນຳໃຊ້ ແລະ ຈະໄດ້ຮັບຜົນປະໂຫຍດ.

### ແຜນດຳເນີນງານໃນການຍົກຍ້າຍຈັດສັນ ແລະ ການຕິດຕາມກວດກາ ຂອງ ບໍລິສັດ ຟອມການາ (FORM GHANA LIMITED'S MONITORING AND RESETTLEMENT ACTION PLAN)

ໃນທົ່ວໂລກ, ສັນຍາປ່າໄມ້ທີ່ຖືກຮ່າງຂຶ້ນແບບບໍ່ເໝາະສົມມັກຈະມີຄວາມຫຍຸ້ງຍາກໃນການຕິດຕາມກວດກາ ຫຼືບັງຄັບໃຊ້ ແລະ ການບໍ່ປະຕິບັດຕາມສັນຍາຂອງຝ່າຍຕ່າງໆສາມາດກໍ່ໃຫ້ເກີດຄວາມເສຍຫາຍທາງສັງຄົມ,ເສດຖະກິດ ແລະ ສິ່ງແວດລ້ອມໃນຊຸມຊົນບ່ອນທີ່ການລົງທຶນຕັ້ງຢູ່ (Cordes ແລະ Szoke-Burke, 2017). ເມື່ອພາກສ່ວນຕ່າງໆບໍ່ປະຕິບັດຕາມຂໍ້ກຳນົດຂອງສັນຍາເນື່ອງຈາກບໍ່ມີການຕິດຕາມກວດກາ ແລະ ການບັງຄັບໃຊ້ທີ່ພຽງພໍ, ຫຼື ມີລະບຽບການທີ່ບໍ່ຫັດກຸມ, ຈະສົ່ງຜົນໄດ້ຮັບທີ່ບໍ່ດີເກີດຂຶ້ນເຊັ່ນ: ການເຊື່ອມໂຊມຂອງດິນ, ການສູນເສຍຊີວະນາໆພັນ, ການເຊື່ອມໂຊມຂອງປ່າໄມ້, ການລະເມີດສິດທິທາງທີ່ດິນ ແລະ ສິດທິມະນຸດ ແລະ ການສູນເສຍລາຍໄດ້, ໂດຍສະເພາະໃນສະພາບການທີ່ກົດໝາຍທີ່ກ່ຽວຂ້ອງກັບປ່າໄມ້ພາຍໃນປະເທດຍັງອ່ອນແອ (ibid.).

ໃນປະເທດການາ, ເກືອບ 94 ເປີເຊັນຂອງເຂດສະຫງວນປ່າໄມ້ຖືກຊຸດໂຊມ, ເຊິ່ງກໍ່ໃຫ້ເກີດສິ່ງທ້າທາຍທີ່ໃຫຍ່ຫຼວງ. ການຟື້ນຟູ ແລະ ການປ່ຽນທີ່ດິນທີ່ຊຸດໂຊມໃຫ້ເປັນການປູກປ່າທີ່ມີການຄຸ້ມຄອງເປັນຢ່າງດີ ແມ່ນສ່ວນໜຶ່ງຂອງຍຸດທະສາດການຫຼຸດຜ່ອນຄວາມທຸກຍາກ ແລະຍຸດທະສາດປ່າໄມ້ ຂອງລັດຖະບານການາ (Oduro *et al.*, 2020). ບໍລິສັດ Form Ghana Limited ແມ່ນບໍລິສັດຄຸ້ມຄອງການປູກຕົ້ນໄມ້ທີ່ໄດ້ຮັບການສ້າງຕັ້ງຂຶ້ນໃນປະເທດການາໃນປີ 2007. ໃນນາມບໍລິສັດຍ່ອຍຂອງບໍລິສັດໂຮນລັງ B.V ທີ່ມີການລົງທຶນດ້ານປ່າໄມ້ແບບຍືນຍົງ, ມັນມີຈຸດປະສົງເພື່ອສະໜັບສະໜູນການຟື້ນຟູປ່າຂະໜາດໃຫຍ່ຂອງເຂດປ່າໄມ້ທີ່ຊຸດໂຊມ ຄືນໃໝ່ໃນປະເທດການາ. ບໍລິສັດ ໄດ້ເລີ່ມກິດຈະກຳຟື້ນຟູປ່າໃນປີ 2008 ຫຼັງຈາກການທົດລອງໂຄງການລິ ເລີ່ມໃນປີ 2001. ບໍລິສັດໄດ້ເຊັນສັນຍາເຊົ່າທີ່ດິນ 50 ປີ ທີ່ສາມາດຕໍ່ໄດ້ ໃນເນື້ອທີ່ຫຼາຍກວ່າ 14,000 ເຮັກຕາ ຂອງທີ່ດິນປ່າໄມ້ທີ່ເຊື່ອມໂຊມ ຈາກລັດຖະບານ ແລະ ເຈົ້າຂອງທີ່ດິນຕາມປະເພນີ ພ້ອມດ້ວຍຂໍ້ຕົກລົງແບ່ງປັນ ຜົນປະໂຫຍດສາມຝ່າຍ. ຮູບແບບທຸລະກິດຂອງດັ່ງກ່າວ ໄດ້ຖືກພິຈາລະນາວ່າເປັນການຮ່ວມມືລະຫວ່າງພາກລັດ ແລະເອກະຊົນ ທຳອິດໃນການຟື້ນຟູປ່າໄມ້ໃນປະເທດການາ.

ໂຄງການດັ່ງກ່າວ ຮຽກຮ້ອງໃຫ້ມີການຍົກຍ້າຍຊາວກະສິກອນຈາກເຂດສະຫງວນໄປສູ່ພື້ນທີ່ໃນບໍລິເວນໃກ້ຄຽງທີ່ຄຸ້ມຄອງໂດຍ ອຳນາດການປົກຄອງຕາມປະເພນີ. ໂດຍສອດຄ່ອງກັບ ຫຼັກການທົ່ວໄປ 2 ຂອງ VGGT ແລະ ຫຼັກການທີ 9 ແລະ 10 ຂອງ CFS-RAI, ບໍລິສັດ Form Ghana ໄດ້ສ້າງແຜນປະຕິບັດງານການຍົກຍ້າຍຈັດສັນ (RAP) ໂດຍມີການເຂົ້າຮ່ວມຢ່າງຫ້າວຫັນຂອງທຸກພາກສ່ວນທີ່ກ່ຽວຂ້ອງ. ຊາວກະສິກອນທີ່ຖືກຍົກຍ້າຍໄດ້ຮັບສິດນຳໃຊ້ທີ່ດິນ ແລະ ເປັນເຈົ້າຂອງຕາມປະເພນີໂດຍການຕົກລົງເຫັນດີກັບຊຸມຊົນເຈົ້າພາບ (ຊຸມຊົນທີ່ຕັ້ງຖິ່ນຖານຢູ່ກ່ອນແລ້ວ), ມີສະຖານທີ່ຢູ່ອາໄສຊົ່ວຄາວໃກ້ກັບສະຖານທີ່ກໍ່ສ້າງໃນຂະນະທີ່ເຮືອນຫຼັງໃໝ່ຂອງພວກເຂົາກຳລັງຖືກສ້າງຂຶ້ນ, ການຂົນສິ່ງເຄື່ອງຂອງຈາກທີ່ພັກອາໄສເດີມໄປສູ່ຊຸມຊົນໃໝ່ ແລະ ການເຂົ້າເຖິງແຫຼ່ງນ້ຳ ແລະ ສິ່ງອຳນວຍຄວາມສະອາດຕ່າງໆ ແລະ ສິ່ງອຳນວຍຄວາມສະດວກອື່ນໆຂອງຊຸມຊົນ. ບໍລິສັດ Form Ghana ມີຈຸດປະສົງເພື່ອປັບປຸງ ແລະ ເສີມຂະຫຍາຍສິ່ງອຳນວຍຄວາມສະດວກທີ່ມີຢູ່ໂດຍການສ້າງນ້ຳສ້າງ ແລະ ສິ່ງອຳນວຍຄວາມສະດວກອື່ນໆ ເພີ່ມເຕີມ. ຊາວກະສິກອນທີ່ຖືກຍົກຍ້າຍຈັດສັນກໍ່ຈະໄດ້ຮັບສິດໃນການປູກພືດແຊມໃນເຂດສະຫງວນ, ດັ່ງນັ້ນພວກເຂົາ ມີສິດຕາມກົດໝາຍໃນການປູກຝັງໃນຂອບເຂດສະຫງວນ. ເມື່ອຕົ້ນໄມ້ທີ່ປູກສູງປົກຄຸມພື້ນທີ່, ຊາວກະສິກອນໄດ້ຮັບອະນຸຍາດໃຫ້ຍ້າຍໄປເຂດອື່ນບ່ອນທີ່ຕົ້ນໄມ້ຍັງບໍ່ສູງປົກຄຸມ. ການປູກພືດແຊມໃນສວນປູກໄມ້ຍັງເປັນຜົນປະໂຫຍດແກ່ບໍລິສັດ ເນື່ອງຈາກວ່າການເຕີບ ໂຕຂອງຕົ້ນໄມ້ໃນເນື້ອທີ່ດິນທີ່ປູກພືດແຊມ ແມ່ນສົມບູນດີກ່ວາການເຕີບໂຕຂອງຕົ້ນໄມ້ທີ່ປູກໃນພື້ນທີ່ທີ່ ບໍ່ມີການປູກພືດແຊມ. ຊາວກະສິກອນທີ່ປູກພືດແຊມໃນສວນປູກໄມ້ທຸກຄົນໄດ້ຮັບໂອກາດໃນການເຮັດວຽກ, ບາງຄົນໄດ້ເຮັດວຽກຖາວອນ ໃນຂະນະທີ່ບາງຄົນໄດ້ເຮັດວຽກຕາມສັນຍາ. ຄົວເຮືອນ ທີ່ມີຄວາມດ້ອຍໂອກາດ (ຕົວຢ່າງ: ຄອບຄົວທີ່ມີແມ່ຍິງເປັນຫົວໜ້າຄົວເຮືອນໄດ້ຮັບການຊ່ວຍເຫຼືອເພີ່ມເຕີມ ໃນການກໍ່ສ້າງທີ່ພັກອາໄສໃນຊຸມຊົນເຈົ້າພາບ. ເຊັ່ນດຽວ ກັນ, ຄົວເຮືອນທີ່ມີຫົວໜ້າຄອບຄົວທີ່ເປັນຄົນພິການ ຈະໄດ້ຮັບການຊ່ວຍເຫຼືອສະໜັບສະໜູນໂດຍອີງໃສ່ ຄວາມຕ້ອງການຂອງແຕ່ລະບຸກຄົນ. ຊາວກະສິກອນຜູ້

ທີ່ສະໝັກໃຈສະໜອງທີ່ດິນ ສໍາລັບປະຊາຊົນທີ່ຖືກກະທົບ ທີ່ຖືກຍົກຍ້າຍຈັດສັນມາ ແມ່ນໄດ້ຮັບເງິນຊົດເຊີຍສໍາລັບ ທີ່ດິນ ແລະ ຜົນລະປູກຂອງພວກເຂົາ (ຕາມທີ່ໄດ້ຕົກລົງ ກັບຊາວກະສິກອນ). ບໍລິສັດ Form Ghana ສ້າງຕັ້ງ ລະບຽບກົນໄກການຮ້ອງທຸກ ແລະ ການແກ້ໄຂຄໍາຮ້ອງ ທຸກສໍາລັບປະຊາຊົນທີ່ໄດ້ຮັບຜົນກະທົບ. ທຸກການຮ້ອງ ທຸກຈາກຊາວກະສິກອນທີ່ຖືກຍົກຍ້າຍຈັດສັນມາໃໝ່ ຫຼື ຜູ້ທີ່ຕັ້ງຖິ່ນຖານຢູ່ແລ້ວ ຈະໄດ້ຮັບການພິຈາລະນາແກ້ໄຂ. ນອກຈາກນັ້ນ, ຫົວໜ້າຊຸມຊົນເຈົ້າພາບ ຮ່ວມກັບບໍລິສັດ Form Ghana ໄດ້ສ້າງຕັ້ງຄະນະກໍາມະການ ທີ່ບໍ່ເປັນ ທາງການ/ສະເພາະກິດ ຂຶ້ນເພື່ອຮັບປະກັນໃຫ້ຊາວກະສິ ກອນທີ່ເຂົ້າມາຕັ້ງຖິ່ນຖານໃນຊຸມຊົນເຈົ້າພາບມີຄວາມ ສະດວກສະບາຍໃນການຕັ້ງຖິ່ນຖານຂອງພວກເຂົາ. ໄດ້ມີ ການຈັດກອງປະຊຸມເປັນປົກກະຕິ ກັບຊາວກະສິກອນຜູ້ທີ່ ປູກພືດແຊມໃນສວນປູກເພື່ອປະເມີນການຈັດຕັ້ງປະຕິບັດ ໂຄງການໃນການສະໜັບສະໜູນການດໍາລົງຊີວິດຂອງຊຸມ ຊົນ (Oduro *et al.*, 2020; Form International, 2018).

ແຜນປະຕິບັດງານການຍົກຍ້າຍຈັດສັນ (RAP) ແມ່ນ ໄດ້ຮັບການພັດທະນາຂຶ້ນພາຍໃນກອບແຜນການປະຕິ ບັດ ງານເພື່ອຫຼຸດຜ່ອນຜົນກະທົບດ້ານເສດຖະກິດ-ສັງຄົມ (SEIMAP) ໃຫ້ສອດຄ່ອງກັບລະບຽບການເງິນກູ້ຈໍາ ນວນ 10 ລ້ານໂດລາສະຫະລັດຈາກທະນາຄານພັດທະນາ ອາຟຣິກາ ແລະ ມາດຕະຖານການດໍາເນີນງານສໍາລັບໂຄງ ການຟື້ນຟູປ່າໄມ້. ໃນເງື່ອນໄຂໜຶ່ງ ຂອງການອະນຸຍາດ ເຊົ່າທີ່ດິນ, ບໍລິສັດ Form Ghana ຍັງຈໍາເປັນຕ້ອງກະ ກຽມແຜນການຄຸ້ມຄອງສິ່ງແວດລ້ອມໂດຍລະອຽດ (EMPs) ຍື່ນຕໍ່ອົງການປົກປັກຮັກສາສິ່ງແວດລ້ອມ ການາ. ແຜນການຄຸ້ມຄອງສິ່ງແວດລ້ອມ (EMPs) ປະຈໍາປີຂອງບໍລິສັດ ລວມມີຂໍ້ມູນກ່ຽວກັບຄໍາຮ້ອງທຸກ ທັງ ໝົດຂອງປະຊາຊົນ ແລະ ລະບຽບການໃນການແກ້ໄຂ ບັນຫາຄໍາຮ້ອງທຸກດັ່ງກ່າວ ກ່ອນທີ່ໃບອະນຸຍາດຈະໄດ້ຮັບ ການຕໍ່ໃໝ່. ແຜນການຄຸ້ມຄອງສິ່ງແວດລ້ອມ (EMPs) ປະຈໍາປີໂດຍລະອຽດ, ບົດລາຍງານການຕິດຕາມກວດກາ, ການປະເມີນຜົນກະທົບທາງດ້ານເສດຖະກິດ ແລະສັງຄົມ, ການຕິດຕາມກວດກາຊີວະນາໆພັນ, ການວິເຄາະມູນຄ່າປ່າ ໄມ້ທີ່ມີມູນຄ່າການອະນຸລັກສູງ, ແຜນປະຕິບັດງານການ ຍົກຍ້າຍຈັດສັນ (RAP), ນະໂຍບາຍຄວາມຮັບຜິດຊອບ ທາງສັງຄົມຂອງບໍລິສັດ, ແລະ ກົນໄກການຮ້ອງທຸກສໍາລັບ ແຕ່ລະເຂດຂອງໂຄງການ ແມ່ນໄດ້ຮັບການສະເໜີໃນເວັບ ໄຊຂອງບໍລິສັດ.

ກົນໄກ ແລະ ແຜນການຕິດຕາມກວດກາທີ່ມີປະສິດຕິ ພາບສູງ, ພ້ອມທັງການຈັດຕັ້ງປະຕິບັດແຜນການຍົກຍ້າຍ ຈັດສັນ (RAP) ແມ່ນການປັບປຸງທີ່ມີຄວາມສໍາຄັນ ໃນການລົງທຶນດັ່ງກ່າວ. ເຖິງຢ່າງໃດກໍ່ຕາມ, ມັນມີຄວາມ ຈໍາເປັນທີ່ຈະມີການປັບປຸງເພີ່ມເຕີມ, ເຖິງແມ່ນວ່າຈະໃຊ້ ຄວາມພະຍາຍາມດັ່ງກ່າວແຕ່, ຊາວກະສິກອນທີ່ໄດ້ຮັບ ການຈັດສັນແລ້ວ ຍັງກັບຄືນບ້ານເຮືອນ ແລະ ເຂດກະ



ສິກຳເດີມຂອງເຂົາເຈົ້າ ໂດຍກ່າວເຖິງສິ່ງທ້າທາຍຕ່າງໆ ລວມທັງ: ໄລຍະທາງຈາກບ້ານເຮືອນຍົກຍ້າຍຈັດສັນມາໃໝ່ແມ່ນມີໄລຍະທາງໄກຈາກພື້ນທີ່ສວນໄມ້ຂອງບໍລິສັດ Form Ghana ສຳລັບເຮັດກະສິກຳ; ເຕັກໂນໂລຢີການປູກສາລີໃໝ່ ທີ່ໄດ້ນຳສະເໜີໃຫ້ແກ່ຊາວກະຊິກອນເພື່ອນຳໃຊ້ເຂົ້າໃນການເຮັດກະສິກຳ ໃນສະຖານທີ່ປູກໄມ້ຂອງບໍລິສັດ Form Ghana ແມ່ນໃຊ້ແຮງງານຫຼາຍເກີນໄປ; ບໍ່ມີທີ່ພັກຊົ່ວຄາວທີ່ພຽງພໍໃຫ້ແກ່ຊາວກະສິກອນທີ່ຍົກຍ້າຍມາໃໝ່ໃນຊຸມຊົນເຈົ້າພາບ. ສິ່ງເຫຼົ່ານີ້ຊີ້ໃຫ້ເຫັນວ່າບໍລິສັດ Form Ghana ຄວນມີມາດຕະການເພີ່ມເຕີມກ່ຽວກັບການທົບທວນ ແລະ ຈັດຕັ້ງປະຕິບັດກັບຊຸມຊົນເປັນແຕ່ລະໄລຍະ ແລະ ຄວນໄດ້ຮັບການປ້ອນຂໍ້ມູນໂດຍກົງແທນທີ່ຈະຜ່ານກົນໄກທາງອອນລາຍ, ແກ້ໄຂບັນຫາໄລຍະທາງໄກ, ໃຫ້ການຝຶກອົບຮົມຕົວຈິງກ່ຽວກັບການນຳໃຊ້ເຕັກໂນໂລຢີໃໝ່ ໃນການປູກສາລີເພື່ອການປັບປຸງຜົນຜະລິດໂດຍຜ່ານການສາທິດ ພາກສະໜາມ; ສະໜັບສະໜູນຊາວກະສິກອນທີ່ຖືກຍົກຍ້າຍຈັດສັນສາມາດສ້າງເຮືອນ ອີງຕາມຄວາມຕ້ອງການຂອງພວກເຂົາ; ສະໜັບສະໜູນ ການພັດທະນາ ທັກສະ/ການຝຶກອົບຮົມສຳລັບສະມາຊິກທີ່ມີຄວາມດ້ອຍໂອກາດ (ເຊັ່ນ: ບັນດາເມຍຂອງຜູ້ທີ່ໄດ້ຮັບການຍົກຍ້າຍ ຈັດສັນແລ້ວ) ເພື່ອສົ່ງເສີມປັບປຸງຊີວິດການເປັນຢູ່ຂອງຄົວເຮືອນຂອງຊາວກະສິກອນທີ່ໄດ້ຮັບການຈັດສັນແລ້ວ; ແລະ ການຊ່ວຍເຫຼືອໃນການດຳລົງຊີວິດປະຈຳວັນຂອງພວກເຂົາເຈົ້າໃນໄລຍະເລີ່ມຕົ້ນຂອງການເຂົ້າມາຕັ້ງຖິ່ນຖານໃນຊຸມຊົນເຈົ້າພາບ (Oduro *et al.*, 2020).



© FCNMedNE Ivan_Vidosavljevi-ç

# 4. ບົດບາດຂອງພາກສ່ວນທີ່ກ່ຽວຂ້ອງທີ່ເປັນພາກລັດ ແລະ ບໍ່ແມ່ນພາກລັດ ໃນການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບ

ໂດຍການທອດຖອນບົດຮຽນຈາກການສຶກສາຄົ້ນຄວ້າກໍລະນີສຶກສາ, ການລົງຢ້ຽມຢາມພາກສະໜາມ ແລະ ການສຳພາດຜູ້ຕາງໜ້າຊຸມຊົນ ແລະ ບໍລິສັດ ແລະ ການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງຫຼາຍພາກສ່ວນ ທີ່ໄດ້ຮັບການຈັດຂຶ້ນໃນລະຫວ່າງກອງປະຊຸມແລກປ່ຽນ ພາກໃຕ້ - ພາກໃຕ້ (South-South exchange events) ເຫັນໄດ້ວ່າ ບັນດາ ລັດຖະບານ, ຫົວໜ່ວຍທຸລະກິດ ແລະ ນັກລົງທຶນ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs) ແລະ ອົງການພັດທະນາຕ່າງໆ ໜ່ວຍງານທັງໝົດ ແມ່ນມີບົດບາດສຳຄັນ ໃນການຈັດຕັ້ງປະຕິບັດການລົງທຶນຢ່າງມີຄວາມຮັບຜິດຊອບ ໃນປະເທດຂອງພວກເຂົາ. ໂດຍສະເພາະ,

## 4.1

### ລັດຖະບານສາມາດ:

- ເພີ່ມທະວີຄວາມເຂັ້ມແຂງໃນການປະສານງານລະຫວ່າງກົມທີ່ກ່ຽວຂ້ອງ ເພື່ອກຳນົດ ແລະ ປະຕິບັດຍຸດທະສາດການລົງທຶນທີ່ສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບ. ສິ່ງນີ້ຍັງຈະເປັນການຊ່ວຍສ້າງສະພາບແວດລ້ອມໃຫ້ແກ່ບໍລິສັດ ເພື່ອການການລົງທຶນຢ່າງມີຄວາມຮັບຜິດຊອບ.
- ສອດຄ່ອງກັບລະບຽບກົດໝາຍ ແລະ ນະໂຍບາຍການປະຕິບັດທີ່ດີ, ລວມທັງ ຫຼັກການ VGGT ແລະ CFS-RAI, ພ້ອມທັງປະຕິບັດໃຫ້ສອດຄ່ອງກັບການຢັ້ງຢືນສາກົນ ເຊັ່ນ FSC ແລະ RSPO. ກົດໝາຍຄວນຮັບຮູ້ສິດຄອບຄອງນຳໃຊ້ທີ່ດິນ ແລະ ຊັບພະຍາກອນ ທີ່ຖືກຕ້ອງຕາມກົດໝາຍ ລວມທັງ ສິດທິຕາມປະເພນີ.
- ປະເມີນບົດສະເໜີການລົງທຶນທຽບໃສ່ຊຸດມາດຖານທີ່ກ້ວາງຂວາງ ເຊິ່ງປະກອບມີສິດໃນການນຳໃຊ້ທີ່ດິນ ແລະ ຊັບພະຍາກອນ, ຄວາມໝັ້ນຄົງດ້ານສະບຽງອາຫານ, ການປັບປຸງຊີວິດການເປັນຢູ່ຂອງຊຸມຊົນທ້ອງຖິ່ນ ແລະ ການປົກປັກຮັກສາການບໍລິການລະບົບນິເວດ. ຮັບປະກັນໃຫ້ບົດສະເໜີມີການກຳນົດແຜນການຫຼຸດຜ່ອນຜົນກະທົບທາງລົບທີ່ສຳຄັນຢ່າງເໝາະສົມ.
- ພັດທະນາກົນໄກການປຶກສາຫາລື ກັບພາກສ່ວນກ່ຽວຂ້ອງໃນທ້ອງຖິ່ນເຊັ່ນ: ອົງການຈັດຕັ້ງສັງຄົມ,ເຈົ້າຂອງທີ່ດິນ ແລະ ຜູ້ນຳໃຊ້ທີ່ດິນ ຈົນເຖິງຂະບວນການໃນການລົງທຶນ,ຈາກການພັດທະນາຍຸດທະສາດ, ການອະນຸມັດການລົງທຶນ, ການປະເມີນຜົນກະທົບ, ການອອກແບບການລົງທຶນ, ການຕິດຕາມກວດກາ ແລະ ການປະເມີນຜົນ (FAO, 2015). ຜ່ານການປຶກສາຫາລືດັ່ງກ່າວ, ໄດ້ສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ໃນຊຸມຊົນທີ່ໄດ້ຮັບຜົນກະທົບກ່ຽວກັບສິດທິຂອງເຂົາເຈົ້າ, ພັດທະນາຄວາມເຂົ້າໃຈຮ່ວມກັນກ່ຽວກັບສິ່ງທ້າທາຍພາຍໃນທ້ອງຖິ່ນທີ່ກ່ຽວຂ້ອງກັບການລົງທຶນ, ແລະ ກຳນົດການປະຕິບັດຕົວຈິງເພື່ອດຳເນີນການແກ້ໄຂ.
- ເຮັດໃຫ້ການເຮັດເອກະສານກ່ຽວກັບ ສິດຄອບຄອງທີ່ດິນທີ່ມີຢູ່ມີຄ່າໃຊ້ຈ່າຍທີ່ຕ່ຳ ແລະ ຜ່ານຂັ້ນຕອນດ້ານການບໍລິຫານທີ່ງ່າຍດາຍ. ເພີ່ມທະວີການມີສ່ວນຮ່ວມຂອງປະຊາຊົນໃນການວາງແຜນ ນຳໃຊ້ທີ່ດິນ, ການກຳນົດເຂດແດນຂອງຊຸມຊົນ ແລະ ຂະບວນການຈັດສັນທີ່ດິນ.
- ພັດທະນາກົນໄກຕ່າງໆ ເພື່ອສົ່ງເສີມທຸກພາກສ່ວນທີ່ກ່ຽວຂ້ອງ ໃຫ້ມີການປະຕິບັດທີ່ສອດຄ່ອງກັບກົດໝາຍ ແລະ ນະໂຍບາຍທີ່ມີຢູ່.ພັດທະນາເຄື່ອງມືໃນການກວດກາ ແລະ ມີການດຳເນີນການຕາມຂັ້ນຕອນທີ່ເໝາະສົມ ໂດຍນັກລົງທຶນ ແລະ ການລົງທຶນ. ພັດທະນາເຄື່ອງມືຕິດຕາມກວດກາການລົງທຶນ ແລະ ລະບົບການໃຫ້ຄະແນນຜົນການປະຕິບັດເຊິ່ງບໍລິສັດສາມາດນຳໃຊ້ເພື່ອອຳນວຍຄວາມສະດວກໃຫ້ແກ່ການປະຕິບັດ.
- ສະໜອງລະບົບທີ່ມີປະສິດຕິຜົນໃນການແກ້ໄຂຂໍ້ຂັດແຍ່ງ, ແກ້ໄຂຄຳຮ້ອງທຸກ, ແລະ ດຳເນີນການແກ້ໄຂ.

# 4

- ເພີ່ມທະວີການຕິດຕາມກວດກາ ແລະ ການປະເມີນຜົນ ຂອງນັກລົງທຶນ ແລະ ການລົງທຶນກ່ຽວກັບຜົນກະທົບທີ່ອາດຈະເກີດຂຶ້ນ ຕໍ່ສິດຄອບຄອງທີ່ດິນ,ຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນ, ສິດທິມະນຸດ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ສິ່ງແວດລ້ອມ. ສົ່ງເສີມການປະເມີນຜົນທີ່ເປັນເອກະລາດ ແລະ ມີຄວາມໂປ່ງໃສ. ແລກປ່ຽນຂໍ້ມູນຂ່າວສານໃນບັນດາຫົວໜ່ວຍພາກລັດ ກ່ຽວຂ້ອງກັບຂັ້ນຕອນການອະນຸມັດການລົງທຶນ. ສົ່ງເສີມ ແລະ ຂະຫຍາຍການນໍາໃຊ້ຮູບແບບການລົງທຶນຢ່າງມີຄວາມຮັບຜິດຊອບທີ່ປະສົບຜົນສໍາເລັດເພື່ອໃຫ້ມີການນໍາໃຊ້ທີ່ກວ້າງຂວາງ.



## 4.2.

### ນັກລົງທຶນ ແລະ ຫົວໜ່ວຍທຸລະກິດ ສາມາດ:[10]

- ຮັບຮອງເອົາ ແລະ ປະຕິບັດ ຮູບແບບການລົງທຶນຢ່າງມີຄວາມຮັບຜິດຊອບ ລວມທັງສິ່ງທີ່ຮັບປະກັນສິດຄອບຄອງນໍາ ໃຊ້ທີ່ດິນໃນຂັ້ນທ້ອງຖິ່ນ. ພິຈາລະນາຜົນປະໂຫຍດຂອງພວກເຂົາໃນການສະໜອງຄວາມໝັ້ນຄົງໃຫ້ແກ່ການລົງທຶນ, ຫຼຸດຜ່ອນຄວາມຂັດແຍ້ງ, ປ້ອງກັນຄວາມລົ້ມເຫຼວຂອງການລົງທຶນ ແລະ ອໍານວຍຄວາມສະດວກໃຫ້ແກ່ການປະດິດຄິດສ້າງ.
- ປະຕິບັດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຢ່າງຮອບດ້ານ ເພື່ອກໍານົດຜົນກະທົບທີ່ອາດຈະເກີດຂຶ້ນ ຕໍ່ສິດທິດ້ານທີ່ດິນ ແລະ ຊັບພະຍາກອນ, ຊີວິດການເປັນຢູ່, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ສິ່ງແວດລ້ອມ. ກໍານົດແຜນການທີ່ຈະແຈ້ງສໍາລັບການຫຼຸດຜ່ອນຜົນກະທົບທາງລົບ.
- ຫຼີກລ້ຽງຮູບແບບໂຄງການທີ່ກ່ຽວຂ້ອງກັບການໂອນສິດການນໍາໃຊ້ທີ່ດິນ ຈາກຊາວກະສິກອນຂະໜາດນ້ອຍ, ຊຸມຊົນ ແລະ ປະຊາຊົນທ້ອງຖິ່ນອື່ນໆ. ໂດຍສະເພາະ, ຫຼີກລ້ຽງບັນດາໂຄງການທີ່ຮຽກຮ້ອງໃຫ້ມີການເອົາດິນຈາກປະຊາຊົນ ເພື່ອໂຄງການສາທາລະນະ ແລະ ທຸກໆຮູບແບບຂອງການຍົກຍ້າຍຈັດສັນແບບສະໝັກໃຈ ຫຼື ບໍ່ສະໝັກໃຈ.
- ກໍານົດກົນໄກ ສໍາລັບການປຶກສາຫາລືທີ່ເໝາະສົມກັບບັນດາພາກສ່ວນກ່ຽວຂ້ອງໃນຂັ້ນທ້ອງຖິ່ນ ທີ່ອາດຈະໄດ້ຮັບຜົນກະທົບລວມທັງແມ່ຍິງ,ຊາວໜຸ່ມ ແລະ ກຸ່ມທີ່ດ້ອຍໂອກາດ. ຮັບປະກັນການປະຕິບັດ ຫຼັກການການຍິນຍອມ ຢ່າງເປັນອິດສະຫຼະ,ໄດ້ຮັບ ການເຫັນດີເຫັນພ້ອມລ່ວງໜ້າ ແລະ ມີການແຈ້ງຂໍ້ມູນທີ່ຄົບຖ້ວນ (FPIC): ທີ່ເໝາະສົມໂດຍຜ່ານ ຂັ້ນຕອນຕ່າງໆຂອງການລົງທຶນ.[11] ຮັບການຊ່ວຍເຫຼືອຈາກອົງການຈັດຕັ້ງທີ່ບໍ່ສັງກັດກັບລັດຖະບານ (NGO) ແລະ ອົງການຈັດຕັ້ງ ທາງສັງຄົມເພື່ອອໍານວຍຄວາມສະດວກໃຫ້ແກ່ການປຶກສາຫາລື ໃນບ່ອນທີ່ມີຄວາມຈໍາເປັນ.
- ຮັບປະກັນຄວາມໂປ່ງໃສໃນການຕັດສິນບັນຫາຕ່າງໆ ແລະ ມີການເປີດເຜີຍຂໍ້ມູນໂຄງການທັງໝົດທີ່ອາດຈະສົ່ງຜົນກະທົບທີ່ອາດຈະເກີດຂຶ້ນກັບພາກສ່ວນກ່ຽວຂ້ອງພາຍໃນທ້ອງຖິ່ນ.
- ນໍາໃຊ້ກົນໄກການແກ້ໄຂຂໍ້ຂັດແຍ່ງທີ່ກ່ຽວຂ້ອງກັບທີ່ດິນ, ຊີວິດການເປັນຢູ່ ຫຼື ບັນຫາອື່ນໆ ຢ່າງມີປະສິດທິຜົນ, ມີປະສິດທິພາບ ແລະ ມີຄວາມຍຸດຕິທໍາ.
- ນໍາໃຊ້ການຕິດຕາມກວດກາທີ່ມີປະສິດທິຜົນ, ໂດຍສະເພາະເພື່ອຫຼຸດຜ່ອນຄວາມສ່ຽງທາງສັງຄົມ ແລະ ສິ່ງແວດລ້ອມ ທີ່ເກີດຂຶ້ນຈາກກິດຈະກໍາຂອງໂຄງການ, ແກ້ໄຂຜົນກະທົບທາງລົບ, ນໍາໃຊ້ກົນໄກການລາຍງານທີ່ມີປະສິດຕິຜົນຕໍ່ພາກສ່ວນກ່ຽວຂ້ອງໃນທ້ອງຖິ່ນ.



## 4.3.

### ອົງການຈັດຕັ້ງທີ່ບໍ່ສັງກັດກັບລັດຖະບານ (NGOs) ແລະ ອົງການຈັດຕັ້ງສັງຄົມ ສາມາດ:[12]

- ອໍານວຍຄວາມສະດວກ ໃຫ້ແກ່ການມີສ່ວນຮ່ວມຂອງປະຊາຊົນ ຕະຫຼອດຮອດຂະບວນການລົງທຶນ, ລວມທັງການກໍານົດນະໂຍບາຍ ແລະ ຍຸດທະສາດ ການລົງທຶນຂອງຊາດ.
- ເກັບກໍາ ແລະ ເຜີຍແຜ່ຂໍ້ມູນທີ່ໜ້າເຊື່ອຖືກ່ຽວກັບການລົງທຶນປ່າໄມ້ທີ່ມີຢູ່.

---

[10] ເບິ່ງ Vhugen (2016) ສໍາລັບຄໍາແນະນໍາເພີ່ມເຕີມ

[11] ເບິ່ງ Fao (2014) ສໍາລັບຄໍາແນະນໍາເພີ່ມເຕີມ

[12] ເບິ່ງ FAO (2015) ສໍາລັບ ຂໍ້ສະເໜີແນະເພີ່ມເຕີມ

- ພັດທະນາເອກະສານຂໍ້ມູນ ສໍາລັບຊຸມຊົນກ່ຽວກັບສິດຄອບຄອງນໍາໃຊ້ ແລະ ຂໍ້ຕົກລົງການລົງທຶນ.
- ແນະນໍາ ນັກລົງທຶນ ແລະ ພະນັກງານພາກລັດ ກ່ຽວກັບວິທີການຕ່າງໆໃນການສ້າງເວທີປຶກສາຫາລື ແລະ ຂັ້ນຕອນການເຈລະຈາ ທີ່ມີຄວາມສະເໝີພາບ ແລະ ເໝາະສົມ ກັບສະພາບການຂອງທ້ອງຖິ່ນ.
- ສະໜອງຂໍ້ມູນຂ່າວສານກ່ຽວກັບຮູບແບບການລົງທຶນຢ່າງມີຄວາມຮັບຜິດຊອບ ໃຫ້ແກ່ລັດຖະບານ ແລະ ນັກລົງທຶນ, ແລະ ອໍານວຍຄວາມສະດວກໃຫ້ແກ່ການຮ່ວມມືກັບພາກສ່ວນກ່ຽວຂ້ອງໃນທ້ອງຖິ່ນ. ຊ່ວຍໂຄງການທົດລອງ ຂອງຮູບແບບທີ່ມີນະວັດຕະກໍາ ທີ່ຊ່ວຍໃຫ້ຊຸມຊົນທ້ອງຖິ່ນ ແລະ ຜູ້ຜະລິດຂະໜາດນ້ອຍເຂົ້າຮ່ວມໃນວຽກງານການລົງທຶນຢ່າງມີປະສິດທິຜົນ.
- ສະໜັບສະໜູນຊຸມຊົນໃນການກໍານົດລະບຽບການຂອງຊຸມຊົນ ສໍາລັບການມີສ່ວນຮ່ວມຂອງນັກລົງທຶນ. ສ້າງຂີດຄວາມສາມາດໃນທ້ອງຖິ່ນເພື່ອການມີສ່ວນຮ່ວມຢ່າງມີປະສິດທິຜົນໃນການລົງທຶນ.
- ສະໜັບສະໜູນຊຸມຊົນທ້ອງຖິ່ນ ແລະ ຊາວກະສິກອນຂະໜາດນ້ອຍໃນການຮຽກຮ້ອງກ່ຽວກັບທີ່ດິນ.
- ຕິດຕາມກວດກາການລົງທຶນ, ສະໜັບສະໜູນການເພີ່ມຄວາມໂປ່ງໃສ ໂດຍສະເພາະ ບ່ອນທີ່ຂາດຄວາມໂປ່ງໃສ ທີ່ມີຜົນກະທົບຕໍ່ກັບສິດທິມະນຸດ, ສິດຄອບຄອງນໍາໃຊ້, ຊີວິດການເປັນຢູ່ ແລະ ສິ່ງແວດລ້ອມ.
- ສະໜັບສະໜູນໜ່ວຍງານລັດຖະບານ ແລະ ຫົວໜ່ວຍທຸລະກິດໃນການສະໜອງການແກ້ໄຂຂໍ້ຂັດແຍ່ງ ແລະ ກົນໄກແກ້ໄຂຄໍາຮ້ອງທຸກ ທີ່ສາມາດເຂົ້າເຖິງໄດ້ ແລະ ມີປະສິດຕິພາບ ໃນລະດັບທ້ອງຖິ່ນ.



## 4.4

**ໜ່ວຍງານພັດທະນາ ສາມາດ:**

- ອໍານວຍຄວາມສະດວກໃຫ້ແກ່ ຮູບແບບ ແລະ ຂະບວນການ ຂອງຜູ້ທີ່ມີສ່ວນຮ່ວມຫຼາຍພາກສ່ວນຂອງຂະແໜງການຕ່າງໆ ເພື່ອຊ່ວຍໃນການກໍານົດ ແລະ ປະຕິບັດ ຍຸດທະສາດການລົງທຶນທີ່ສົ່ງເສີມການລົງທຶນແບບມີຄວາມຮັບຜິດຊອບ.
- ສະໜັບສະໜູນລັດຖະບານໃນການທົບທວນ ແລະ ປັບປຸງລະບຽບກົດໝາຍ ແລະ ນະໂຍບາຍຕ່າງໆ ໃຫ້ສອດຄ່ອງກັບ ຂໍ້ແນະນໍາ ແລະ ຫຼັກການຂອງສາກົນ.
- ສະໜັບສະໜູນລັດຖະບານ ເພື່ອເພີ່ມຄວາມເຂັ້ມແຂງໃນການຕິດຕາມກວດກາ ແລະ ປະເມີນຜົນ ຂອງນັກລົງທຶນ ແລະ ການລົງທຶນ ກ່ຽວກັບຜົນກະທົບທີ່ອາດຈະເກີດຂຶ້ນຕໍ່ສິດຄອບຄອງທີ່ດິນ, ຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນ, ສິດທິມະນຸດ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ສິ່ງແວດລ້ອມ. ສົ່ງເສີມການປະເມີນຜົນທີ່ເປັນເອກະລາດ ແລະ ໂປ່ງໃສ. ແລກປ່ຽນຂໍ້ມູນຂ່າວສານກັບບັນດາໜ່ວຍງານຂອງລັດຖະບານ ທີ່ກ່ຽວຂ້ອງກັບຂັ້ນຕອນການອະນຸມັດການລົງທຶນ.
- ຕິດຕາມກວດກາກໍລະນີສຶກສາທີ່ມີຜົນດີຂອງຮູບແບບການລົງທຶນທີ່ດີກວ່າເພື່ອກວດສອບຄໍາຮ້ອງທຸກ, ສະຫຼຸບ ແລະ ແລກປ່ຽນ ບົດຮຽນທີ່ຖອດຖອນໄດ້ ແລະ ກໍານົດວິທີການເພື່ອປັບປຸງຕື່ມອີກ.
- ສົ່ງເສີມການຄົ້ນຄວ້າ ແລະ ສ້າງໂອກາດໃນປະເທດຕ່າງໆ ແລະ ພາຍໃນປະເທດ, ເພື່ອການແລກປ່ຽນຄວາມຮູ້ກ່ຽວກັບການປະຕິບັດທີ່ດີກວ່າ, ສະແດງໃຫ້ເຫັນກໍລະນີສຶກສາທີ່ດີແລະ ຂະຫຍາຍການນໍາໃຊ້ຮູບແບບການລົງທຶນຢ່າງມີຄວາມຮັບຜິດຊອບທີ່ປະສົບຜົນສໍາເລັດ ເພື່ອໃຫ້ມີການນໍາໃຊ້ທີ່ກວ້າງຂວາງ.
- ພັດທະນາຄູ່ມືແນະນໍາ ສໍາລັບຊຸມຊົນກ່ຽວກັບ ຂໍ້ຕົກລົງ/ສັນຍາ ລະຫວ່າງຜູ້ລົງທຶນ ແລະ ຊຸມຊົນ ແລະ ການມີສ່ວນຮ່ວມໃນການລົງທຶນ.


©FAO Forestry


©FAO Forestry



# 5. ພາກສະຫຼຸບ

ບັນດາວິທີການໃນການຫຼຸດຜ່ອນ ຫຼື ຫຼີກລ້ຽງການໂອນທີ່ດິນຂະໜາດໃຫຍ່ ແລະ ການຮ່ວມມືທີ່ມີປະສິດຕິຜົນລະຫວ່າງຊຸມຊົນ ແລະ ຫົວໜ່ວຍທຸລະກິດ ແມ່ນມີທ່າແຮງໃນການປະກອບສ່ວນເຂົ້າໃນການຈ້າງງານ ແລະການຫຼຸດຜ່ອນຄວາມທຸກຍາກ,ຄວາມໝັ້ນຄົງດ້ານສະບຽງອາຫານ, ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະໄວໜຸ່ມ, ການຄຸ້ມຄອງຊັບພະຍາກອນທຳມະຊາດ, ແລະສາມາດປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍ ການພັດທະນາແບບຍືນຍົງ (SDGs) ຫຼາຍເປົ້າໝາຍ. ບັນດາປະເທດ ແລະ ບໍລິສັດຕ່າງໆໃນທົ່ວໂລກ ກຳລັງຮັບຮອງເອົາມາດຕະການຕ່າງໆເພື່ອປັບປຸງການລົງທຶນເພີ່ມຂຶ້ນ, ເຖິງຢ່າງໃດກໍ່ຕາມ, ມາດຕະການ ແລະ ໂຄງການລິເລີ່ມເຫຼົ່ານີ້ ຍັງມີຂໍ້ຈຳກັດໃນດ້ານຂອບເຂດ ແລະ ຂະໜາດ. ບັນດາລັດຖະບານ ແລະ ບັນດາຫົວໜ່ວຍທຸລະກິດສາມາດໄດ້ຮັບຜົນປະໂຫຍດຢ່າງຫຼວງຫຼາຍ ຈາກຄູ່ມືແນະນຳທີ່ມີຄຸນຄ່າ ແລະ ຊຸດຫຼັກການທີ່ສະໜອງໂດຍເຄື່ອງມືຫຼັກການ ຂອງ VGGT ແລະ CFS-RAI. ເຄື່ອງມືເຫຼົ່ານີ້ສາມາດນຳໃຊ້ເພື່ອອອກແບບການລົງທຶນຢ່າງມີຄວາມຮັບຜິດຊອບ ທັງດ້ານນະໂຍບາຍ ແລະ ການປະຕິບັດ.

ເອກະສານນີ້ຍົກໃຫ້ເຫັນບາງຮູບແບບການປະຕິບັດ ທີ່ດີກວ່າ ທີ່ໄດ້ຮັບການນຳໃຊ້ໃນປະເທດ ເຊຍຣາ ລີອອນ (Sierra Leone) ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ເອກະສານດັ່ງກ່າວ ຍັງນຳສະເໜີກໍລະນີສຶກສາເພີ່ມເຕີມ ທີ່ໄດ້ຮັບການຄັດ ເລືອກຈາກ ສະຫະລັດອາເມລິກາ, ອາຟຣິກາໃຕ້, ບາຊິລ ແລະ ການາເຊິ່ງຍົກໃຫ້ເຫັນວິທີການທີ່ນະໂຍບາຍ ແລະ ກອບກົດໝາຍແຫ່ງຊາດທີ່ກ້າວໜ້າ ພ້ອມທັງການປະຕິບັດຂອງບໍລິສັດ ໄດ້ອຳນວຍຄວາມສະດວກໃຫ້ແກ່ ຮູບແບບການລົງທຶນຢ່າງມີຄວາມຮັບຜິດຊອບ ແລະ ການປະຕິບັດຕາມຫຼັກການຕ່າງໆຂອງ VGGT ແລະ CFS-RAI.

ເວົ້າສະເພາະ, ລັດຖະບານ ກຳລັງດຳເນີນການເພື່ອແກ້ໄຂຄວາມບໍ່ໝັ້ນຄົງໃນການຄອບຄອງທີ່ດິນ ໂດຍຜ່ານການຮັບຮູ້ທາງດ້ານກົດໝາຍ ກ່ຽວກັບສິທິດ້ານ ທີ່ດິນຕາມປະເພນີ ແລະ ທີ່ດິນເຄົ້າເດີມ, ໂດຍການອຳນວຍຄວາມສະດວກໃຫ້ແກ່ການຮ່ວມມືລະຫວ່າງຊຸມຊົນ ແລະບໍລິສັດ, ສະໜັບສະໜູນທຸລະກິດທີ່ເປັນເຈົ້າຂອງ ແລະຄວບຄຸມໂດຍຊຸມຊົນ, ສົ່ງເສີມຂໍ້ຜູກພັນສັນຍາ ການຜະລິດກະສິກຳ (contract farming) ແລະ ອຳນວຍຄວາມສະດວກໃຫ້ແກ່ການຮ່ວມມືທາງທຸລະກິດ ແລະຮູບແບບ ການຜະລິດທີ່ມີການຮ່ວມມືອື່ນໆ.ບາງບໍລິສັດແກ້ໄຂຄວາມບໍ່ໝັ້ນຄົງໃນການຄອບຄອງທີ່ດິນ ໂດຍການຫຼີກລ້ຽງວິທີການທີ່ນຳໄປສູ່ການຍົກຍ້າຍຖິ່ນຖານ ແລະການສູນເສຍສິດທິໃນການນຳໃຊ້ທີ່ດິນຂອງຊຸມຊົນທ້ອງຖິ່ນແບບຖາວອນ ແທນທີ່,ພວກເຂົາຊ່ວຍເຫຼືອໃນການຮັບປະກັນສິດທິໃນການນຳໃຊ້ທີ່ດິນໃນທ້ອງຖິ່ນ ໂດຍຜ່ານການສ້າງແຜນທີ່ ແລະ ສ້າງເອກະສານກ່ຽວກັບສິດໃນທີ່ດິນຕາມປະເພນີ,ໂດຍການອຳນວຍຄວາມສະດວກໃນການອອກໃບຕາດິນຂອງຊຸມຊົນ ແລະ ໂດຍການນຳໃຊ້ຮູບແບບການແບ່ງປັນຜົນປະໂຫຍດເຊິ່ງຮັບຮູ້ສິດໃນການນຳໃຊ້ທີ່ດິນຂອງປະຊາຊົນທ້ອງຖິ່ນ. ເພື່ອສົ່ງເສີມຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ການຫຼຸດຜ່ອນຄວາມທຸກຍາກ, ບັນດາຫົວໜ່ວຍທຸລະກິດ ໄດ້ປະສົມປະສານ ຮູບແບບຮູບແບບການຜະລິດກະສິກຳຕາມສັນຍາ (Outgrower model) ໂດຍການສ້າງສະມັດຕະພາບການຜະລິດໃຫ້ແກ່ຜູ້ຜະລິດຂະໜາດນ້ອຍໂດຍຜ່ານການຝຶກອົບຮົມ; ຮັບປະກັນລາຄາຊື້ທີ່ມີຄວາມຍຸດຕິທຳ; ສະໜອງການຈ້າງງານໃຫ້ແກ່ປະຊາຊົນທ້ອງຖິ່ນ; ການແບ່ງປັນຜົນປະໂຫຍດ; ອະນຸຍາດໃຫ້ມີການປູກພືດແຊມໃນພື້ນທີ່ປູກໄມ້; ແລະ ເນັ້ນເຖິງການສະໜັບສະໜູນ ສຳລັບໄວໜຸ່ມ, ແມ່ຍິງ ແລະ ຄົວເຮືອນທີ່ດ້ອຍໂອກາດ. ອົງການຈັດຕັ້ງທີ່ບໍ່ສັງກັດກັບລັດຖະບານ (NGO) ແລະອົງການຈັດຕັ້ງສັງຄົມ (CSOs) ມີບົດບາດສຳຄັນໃນການອຳນວຍຄວາມສະດວກໃຫ້ແກ່ການລົງທຶນຢ່າງມີຄວາມຮັບຜິດຊອບ ໂດຍການລິເລີ່ມສ້າງສູນສະໜັບສະໜູນຊາວກະສິກອນ; ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການຈັດຕັ້ງຊຸມຊົນທ້ອງຖິ່ນ ແລະ ທັກສະດ້ານວິຊາການ;


©FAO/Joan Manuel Baliellas

ສົ່ງເສີມຄວາມຮັບຮູ້ດ້ານກົດໝາຍ; ອໍານວຍຄວາມສະດວກໃນການເຂົ້າເຖິງຕະຫຼາດ; ແລະ ຊ່ວຍໃຫ້ມີການເຂົ້າຮ່ວມຂອງ ແມ່ຍິງ, ຊາວໜຸ່ມ ແລະ ຜູ້ນໍາໃຊ້ທີ່ດິນອື່ນໆ. ເພື່ອແກ້ໄຂສິ່ງທ້າທາຍດ້ານສິ່ງແວດລ້ອມ, ບັນດາຫົວໜ່ວຍທຸລະກິດກໍາລັງຮັບຮອງນໍາໃຊ້ການຢັ້ງຢືນຂອງ ສະພາຄຸ້ມຄອງປ່າໄມ້ (FSC) ແລະ ສະມາຄົມການຜະລິດນໍ້າມັນປາມແບບຍືນຍົງ (RSPO), ແລະ ເຮັດວຽກຮ່ວມກັບຜູ້ຜະລິດຂະໜາດນ້ອຍ ເພື່ອຮັບປະກັນການຈັດຕັ້ງປະຕິບັດທີ່ມີຄວາມສອດຄ່ອງ.

ໃນຂະນະທີ່ບາງໂຄງການລິເລີ່ມເຫຼົ່ານີ້ ເຊັ່ນໂຄງການລິເລີ່ມໃນປະເທດ ເຊຍຣາ ລີອອນ (Sierra Leone) ແມ່ນຍັງຢູ່ໃນໄລຍະເລີ່ມຕົ້ນ ຂອງການຈັດຕັ້ງປະຕິບັດ, ກໍລະນີສຶກສາດັ່ງກ່າວ ໄດ້ສະແດງໃຫ້ເຫັນແນວໂນ້ມທີ່ດີໃນການແກ້ໄຂຄວາມກັງວົນຕ່າງໆທີ່ກ່ຽວຂ້ອງກັບການລົງທຶນທີ່ມີການນໍາໃຊ້ທີ່ດິນ. ຮູບແບບທຸລະກິດ ແລະ ການລົງທຶນຢ່າງມີຄວາມຮັບຜິດຊອບ ຈະຮຽກຮ້ອງໃຫ້ມີການຮ່ວມມືທີ່ສໍາຄັນລະຫວ່າງລັດຖະບານທີ່ມີການລົງທຶນຕັ້ງຢູ່, ນັກລົງທຶນ ແລະ ຫົວໜ່ວຍທຸລະກິດ, ອົງການຈັດຕັ້ງທີ່ບໍ່ສັງກັດກັບ ລັດຖະບານ(NGOs) ແລະ ອົງການຈັດຕັ້ງສັງຄົມ (CSOs) ເພື່ອຮັບປະກັນຄວາມຍືນຍົງດ້ານສິ່ງແວດລ້ອມ,ການພັດທະນາຢ່າງກວ້າງຂວາງ, ການຫຼຸດຜ່ອນຄວາມທຸກຍາກ,ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ຊີວິດການເປັນຢູ່ ແລະ ການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດໂດຍສອດຄ່ອງກັບຫຼັກການຂອງ VGGT ແລະ CFS-RAI.

# ເອກກະສານອ້າງອີງ


**Aggarwal, S., Larson, A., McDermott, C., Katila, P. & Giessen, L.** 2021 ການປະຕິຮູບໃນການຄອບຄອງທີ່ດິນ ເພື່ອປ່າທີ່ອຸດົມສົມບູນກ່ວາ: ວາລະນະໂຍບາຍທີ່ຍັງບໍ່ທັນສໍາເລັດ. *ນະໂຍບາຍດ້ານປ່າໄມ້ ແລະ ເສດຖະກິດ:* 123

**Alforte, A., Angan, J., Dentith, J., Domondon, K., Munden, L., Murday, S. &. Pradela, L.** 2014. ຊຸມຊົນໃນຖານະທີ່ເປັນຄູ່ຮ່ວມງານ: ການທົບທວນເບື້ອງຕົ້ນກ່ຽວກັບການສໍາປະທານ ແລະ ຄວາມຂັດແຍ່ງໃນການສໍາປະທານ ໃນປະເທດທີ່ມີເສດຖະກິດ ພັດທະນາແລ້ວ ແລະ ປະເທດທີ່ມີເສດຖະກິດທີ່ກໍາລັງພັດທະນາ. ໂຄງການ Munden. https://rightsandresources.org/wp-content/uploads/Communities-as-Counterparties-FINAL_Oct-21.pdf

**Bolondi, A.** 2018. *ກໍລະນີສຶກສາຂອງໂຄງການລົງທຶນຂະແໜງປ່າໄມ້ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ທະນາຄານສາກົນເພື່ອການສ້າງສາ ແລະ ພັດທະນາ. ທະນາຄານໂລກ* www.climateinvestmentfunds.org/sites/cif_enc/files/knowledge-documents/fip_lao_case_study_1.pdf

**Burapha Agro-Forestry (BAFCL). 2019.** ບົດລາຍງານປະຈໍາປີ ກ່ຽວກັບຄວາມຍືນຍົງ www.buraphawood.com/application/files/2016/0680/8556/Burapha_Annual_Sustainability_Report_2019_ON_LINE_VERSION_rev2.pdf

**Burapha Agro-Forestry (BAFCL). 2020.** ບົດສະຫຼຸບແຜນຄຸ້ມຄອງປ່າໄມ້ 2020-2030. http://buraphawood.com/application/files/9616/0076/4865/2020_Forest_Management_Plan_FMP_summary.pdf

**Burapha Agro-Forestry (BAFCL). n.d.** ບໍລິສັດ ກະສິກໍາ-ປ່າໄມ້ ບົວລະພາ (Burapha Agro-Forestry): ບໍລິສັດ. www.buraphawood.com/about-us/company

**ສູນສິດທິເດັກ ແລະ ທຸລະກິດ.** n.d. ບໍລິສັດ ອຸດສະຫະກໍາປູກໄມ້ ແມ່ນໍ້າຂອງ (Mekong Timber Planation) ກາຍເປັນບໍລິສັດລາວທໍາອິດໃນການເຂົ້າຮ່ວມກັບກຸ່ມປະຕິບັດການ ຂອງສູນ. www.childrights-business.org/news-and-events/mekong-timber-plantations-becomes-first-lao-company-to-join-the-centres-working-group.html

**Chamberlain, W.** 2017. ທີ່ດິນທີ່ຊຸມຊົນເປັນເຈົ້າຂອງທີ່ເປັນສວນປູກໄມ້ເພື່ອການຄ້າ - Mondi in Kranskop. In W. Chamberlain and W. Anseeuw, eds. *ທຸລະກິດທີ່ມີສ່ວນຮ່ວມ ໃນດ້ານກະສິກໍາ: ແມ່ນຫຍັງ, ດ້ວຍວິທີການໃດ ແລະ ເພື່ອໃຜ? ຄວາມເຂົ້າໃຈທີ່ສໍາຄັນ ໂດຍອີງໃສ່ກໍລະນີສຶກສາ ຂອງອາຟຣິກາໃຕ້* (ໜ້າ 137-150). https://agritrop.cirad.fr/584519/1/9781928355090.pdf

**ການລົງທຶນໃສ່ກອງທຶນກ່ຽວກັບດິນຟ້າອາກາດ (Climate Funds Investment).** 2018. 2017: ບົດລາຍງານປະຈໍາປີ: ແຜນການລົງທຶນໃນຂະແໜງປ່າໄມ້ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. www.climateinvestmentfunds.org/sites/cif_enc/files/meeting-documents/master_lao_fip_annual_monitoring_report_2017_hs_ep_comm.docx

**(Confederação Nacional da Indústria) CNI.** 2018. *Perspectivas e Desafios na Promoção do Uso das Florestas Nativas do Brasil, 1st ed. Brasília,* DF, Confederação Nacional da Indústria.

**Cordes, K.Y. & Szoke-Burke, S.** 2017. ຄຳແນະນຳ ກ່ຽວກັບສັນຍາດ້ານທີ່ດິນ: ໂຄງການປ່າໄມ້. https://scholarship.law.columbia.edu/sustainable_investment_staffpubs/85

**Debonne, N., van Vliet, J., Heinimann, A., & Verburg, P.** 2018. ການສະເໜີກ່ຽວກັບການຊື້ທີ່ດິນຂະໜາດໃຫຍ່ໃນສະຖານະການການປ່ຽນແປງການນຳໃຊ້ທີ່ດິນ ສຳລັບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. Reg ການປ່ຽນແປງຂອງສະພາບເວລ້ອມ. No. 18, 1857–1869. https://link.springer.com/article/10.1007/s10113-018-1316-8

**ການສຶກສາຄົ້ນຄວ້າຂອງ DHM.** 2021. ການສຳຫຼວດຜູ້ທີ່ມີສ່ວນຮ່ວມ: ຜົນການຄົ້ນພົບຈາກການສຳຫຼວດຜູ້ທີ່ມີ ສ່ວນຮ່ວມ 2021. www.sealaska.com/wp-content/uploads/UPDATED_Sealaska_Aug4_Zoom.pdf

**ສະຖາບັນໂລກ.** 2020. ການຊື້ພື້ນທີ່ດິນຂະໜາດໃຫຍ່ ກຳລັງຂັບເຄື່ອນການທຳລາຍປ່າໄມ້ເຂດຮ້ອນ https://news.climate.columbia.edu/2020/06/22/foreigners-are-buying-tropical-forests-then-destruction/

**Espada, A.L.V. & Sobrinho, M.V.** 2019. ການຕັດໄມ້ໃນປ່າຊຸມຊົນໃນ ອາເມຊອນ (Amazon): ການວິເຄາະ ກ່ຽວກັບອິດທິພົນພາຍນອກ, ການຄຸ້ມຄອງບໍລິຫານແບບຫຼາຍພາກສ່ວນ, ແລະ ຄວາມສາມາດໃນການປັບຕົວ. ປ່າໄມ້ 10. ເລກທີ. 6. www.mdpi.com/1999-4907/10/6/461/htm

**FAO. 2012.** Voluntary Guidelines on the Responsible Governance of Tenure of Land, Fisheries and Forests in the Context of National Food Security. Rome./ ບົດແນະນຳຕາມຄວາມສະໝັກໃຈການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ຢ່າງມີຄວາມຮັບຜິດຊອບ ໃນເລື່ອງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ໃຫ້ເງື່ອນໄຂຄວາມໝັ້ນຄົງດ້ານສະບຽງອາຫານຂອງຊາດ

**FAO. 2014a.** Principles for Responsible Investment in Agriculture and Food Systems. Rome.www.fao.org/3/au866e/au866e.pdf/ ຫຼັກການ ໃນການລົງທຶນທີ່ມີຄວາມຮັບຜິດຊອບໃນຂະແໜງກະສິກຳ ແລະ ລະບົບອາຫານ.ໂຣມ www.fao.org/3/au866e/au866e.pdf

**FAO.** 2014b. ເຄົາລົບຕໍ່ສິດຂອງຊາວພື້ນເມືອງໃນ ຫຼັກການ ການຍິນຍອມຢ່າງເປັນອິດສະຫຼະ, ໄດ້ຮັບການເຫັນດີເຫັນພ້ອມລ່ວງໜ້າ ແລະ ມີການແຈ້ງຂໍ້ມູນທີ່ຄົບຖ້ວນ (FPIC): ບົດແນະນຳໃນການປະຕິບັດຕົວຈິງ ສຳລັບລັດຖະບານ, ບໍລິສັດ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs), ຊົນເຜົ່າພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນທີ່ກ່ຽວ ຂ້ອງກັບການໄດ້ມາຂອງທີ່ດິນ, ການຄຸ້ມຄອງຄູ່ມືແນະນຳເຕັກນິກການຄອບຄອງນຳໃຊ້ ເລກທີ 3.

**FAO.** 2015. ປົກປ້ອງສິດຄອບຄອງນຳໃຊ້ທີ່ດິນໃນເງື່ອນໄຂຂອງການລົງທຶນດ້ານກະສິກຳ: ຄູ່ມືດ້ານວິຊາການໃນ ການປົກປ້ອງສິດຄອບຄອງນຳໃຊ້ທີ່ດິນໂດຍສອດຄ່ອງກັບ ບົດແນະນຳຕາມຄວາມສະໝັກໃຈກ່ຽວກັບການບໍລິຫານສິດຄອບຄອງນຳໃຊ້ຢ່າງ ມີຄວາມຮັບຜິດຊອບ ໃນເລື່ອງທີ່ດິນ, ການປະມົງ ແລະ ປ່າໄມ້ ໃນເງື່ອນໄຂຂອງຄວາມ ໝັ້ນຄົງດ້ານສະບຽງອາຫານຂອງຊາດ, ສຳລັບພະນັກງານພາກລັດທີ່ມີສ່ວນຮ່ວມໃນການສົ່ງເສີມ, ການອະນຸມັດ ແລະ ຕິດຕາມກວດກາ ການລົງທຶນດ້ານກະສິກຳ, ການປົກຄອງບໍລິຫານຄູ່ມືວິຊາການດ້ານການຄອງຄອບນຳໃຊ້. 4. www.fao.org/3/i4998e/I4998E.pdf

**FAO 2016.** ການຄຸ້ມຄອງການຄວບຄຸມທີ່ມີຄວາມຮັບຜິດຊອບ: ຄູ່ມືດ້ານເຕັກນິກສຳລັບນັກລົງທຶນ, ໂດຍ D. vhgen. ໂຣມ

**FAO.** 2018. ການທົບທວນຄືນການສຳປະທານປ່າໄມ້: ປັບປຸງການຈັດສັນປ່າໄມ້ຂອງລັດ ເພື່ອໃຫ້ມີຜົນໄດ້ຮັບທາງດ້ານເສດຖະກິດ, ສັງຄົມແລະ ສິ່ງແວດລ້ອມ ທີ່ດີຂຶ້ນ. www.fao.org/3/I6037EN/I6037en.pdf

**FAO.** 2022. ສະພາບປ່າໄມ້ໂລກ ປີ 2022. ເສັ້ນທາງປ່າໄມ້ສຳລັບການຟື້ນຟູສີຂຽວ ແລະ ການສ້າງເສດຖະກິດທີ່ມີສ່ວນຮ່ວມ, ມີຄວາມສາມາດໃນການຟື້ນຕົວຄືນໄດ້ໄວ ແລະ ມີຄວາມຍືນຍົງ. Rome, FAO. https://doi.org/10.4060/cb9360en

**FAO & EFI (European Forest Institute).** 2018. ເຮັດໃຫ້ການສຳປະທານປ່າໄມ້ໃນເຂດຮ້ອນປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍ, 2030: ບົດແນະນຳຕາມຄວາມສະໝັກໃຈ ໂດຍ Y.T. Tegegne, J. Van Brusselen, M. Cramm, T. Linhares-Juvenal, P. Pacheco, C. Sabogal, and D. Tuomasjukka. FAO Forestry Paper No. 180, Rome. 128 pp. www.fao.org/3/I9487EN/i9487en.pdf

**FAO & ICRAF (World Agroforestry).** 2019. ກະສິກຳປ່າໄມ້ ແລະ ສິດຄອບຄອງນຳໃຊ້. ເອກະສານການປະຕິບັດກ່ຽວກັບຂະແໜງປ່າໄມ້ ສະບັບເລກທີ. 8. ກຸງໂລມ. 40 pp. License: CC BY-NCSA 3.0 IGO. Agroforestry and tenure (fao.org)

**FAO & UNEP (United Nations Environment Programme).** 2020. ສະພາບການຂອງປ່າໄມ້ໂລກ, ປີ 2020. ປ່າໄມ້, ຊີວະນາໆພັນ, ແລະ ປະຊາຊົນ. ກຸງໂລມ. www.fao.org/3/ca8642en/ca8642en.pdf

**Feyertag, J. & Bowie, B.** 2021. ຄ່າໃຊ້ຈ່າຍດ້ານການເງິນໃນການຫຼຸດຜ່ອນຄວາມສ່ຽງທາງສັງຄົມ: ຄ່າໃຊ້ຈ່າຍ ແລະ ປະສິດທິຜົນຂອງຍຸດທະສາດການຫຼຸດຜ່ອນຄວາມສ່ຽງສຳລັບນັກລົງທຶນໃນປະເທດທີ່ມີເສດຖະກິດທີ່ກຳລັງພັດທະນາ. ບົດລາຍງານ ODI.  https://cdn.odi.org/media/documents/ODI_RE2.PDF

**FinnFund.** 2022a. FinnFund ໄດ້ຂັບເຄື່ອນເປົ້າໝາຍການພັດທະນາທີ່ຍືນຍົງ: ກໍລະນີສຶກສາ: ບໍລິສັດ ກະສິກຳ ແລະ ປ່າໄມ້ ບົວລະພາ, ລາວ. www.finnfund.fi/en/news-and-publications/reports_publications/other_reports_and_publications/case-study-in-sustainability-work-burapha-agro-forestry-laos/

**FinnFund.** 2022b. ບໍລິສັດ ກະສິກຳ ແລະ ປ່າໄມ້ ບົວລະພາ www.finnfund.fi/en/investing/investments/burapha-agro-forestry

**ທະນາຄານພັດທະນາວິສາຫະກິດຂອງ ປະເທດດັດ (Dutch Enterpreneurial Development Bank).** 2020. ບໍລິສັດ ບົວລະພາ, ການພັດທະນາປະເທດໂດຍການນຳໃຊ້ຊັບພະຍາກອນປ່າໄມ້.www.youtube.com/watch?v=I1PS9kice3E

**Form International.** 2018. ການສ້າງໂຄງການຟື້ນຟູປ່າໄມ້ຂອງປະເທດການາ: ແຜນປະຕິບັດງານໃນຫຼຸດຜ່ອນ ຜົນກະທົບດ້ານເສດຖະກິດ-ສັງຄົມ: ບົດລາຍງານສຸດທ້າຍ. www.formghana.com/_files/ugd/312552_fa28b6d5190d4f43a5c3c1a156fcb597.pdf

**Gironde, C., Golay, C., & Messerli, P. & Carbonnay, G. eds.** 2016. ນະໂຍບາຍການພັດທະນາສາກົນ. https://library.oapen.org/bitstream/id/ba5eab7a-c9ec-4f40-80b5-4f2976296781/613328.pdf

**ເວທີສົນທະນາກ່ຽວກັບ ທີ່ດິນພູມສັນຖານໂລກ (Global Landscapes Forum).** 2018. ບົດຮຽນທີ່ຖອດຖອນໄດ້ຈາກ ບໍລິສັດ Miro Forest ກ່ຽວກັບການຄຸ້ມຄອງທຸລະກິດປູກໄມ້. https://news.globallandscapesforum.org/26042/lessons-learned-miro-forestry-plantation-management/

**ລັດຖະບານແຫ່ງ ປະເທດ Sierra Leone (GoSL).** 2015. ນະໂຍບາຍທີ່ດິນແຫ່ງຊາດສະບັບສົມບູນ ຂອງປະເທດ ເຊຍຣາ ລີອອນ (Sierra Leone), ສະບັບທີ 6. ກະຊວງທີ່ດິນ, ການວາງແຜນປະເທດ ແລະ ສິ່ງແວດລ້ອມ.

**ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (GOLPDR).** 2012. ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງເວດລ້ອມ (ສະບັບປັບປຸງ).www.ajcsd.org/chrip_search/dt/pdf/Useful_materi-als/Lao_PDR/Environmental_Protection_Law_Revised_Version.pdf

**Herrmann, R.** 2017. ຮູບແບບທຸລະກິດກະສິກຳທາງເລືອກ ສຳລັບ ການລົງທຶນພາກເອກະຊົນຂະໜາດໃຫຍ່ ໃນປະເທດ Sierra Leone: ບົດຮຽນຈາກ ກໍລະນີສຶກສາ ໂຄງການ ນ້ຳມັນປາມ ແລະ ໝາກໂກໂກ້ ໃນປະເທດກຳລັງພັດທະນາ. https://landportal.org/fr/file/48024/download

**Hett, C., Nanhthavong, V., Hanephom, S., Phommachanh, A., Sidavong, B., Phouang-phet, K., Lu, J., Shattuck, A. et al. 2020.** ການເຊົ່າທີ່ດິນ ແລະ ການສຳປະທານ ໃນ ສປປ ລາວ: ຄຸນລັກສະນະຂອງການລົງທຶນ ໃນທີ່ດິນ ແລະ ຜົນກະທົບຂອງມັນ. ເມືອງ ເບີນ (Bern): ສູນພັດທະນາ ແລະ ສິ່ງແວດລ້ອມ (CDE), ມະຫາວິທະຍາໄລ Bern ແຫ່ງ ປະເທດສະວິດເຊີແລນ, ສຳນັກພິມ ເມືອງເບີນ (Bern Open Publishing) https://boris.unibe.ch/133115/1/Land_deals_in_the_Lao_PDR_En-g_4SEP2020_LQ.pdf

**Humphries, S., Andrade, D., & McGrath, D.** 2015. ປະເທດບຣາຊິລ: Cooperativa Mista da Flona do Tapajós: ວິສາຫະກິດປ່າໄມ້ຊຸມຊົນທີ່ປະສົບຜົນສຳເລັດ. ໃນທຸລະກິດປ່າໄມ້ທີ່ເປັນປະຊາທິປະໄຕ: ບົດ ສະຫຼຸບຂອງບັນດາອົງການຈັດຕັ້ງທຸລະກິດປ່າໄມ້ທີ່ບໍລິຫານໂດຍທ້ອງຖິ່ນທີ່ປະສົບຜົນສຳເລັດ, D. Mac-queen, A. Bolin & M. Greijmans, eds. London, International Institute for Environment and Development (IIED).

**IDH (The Sustainable Trade Initiative).** 2021. ການລົງທຶນຮ່ວມກັນ ການຄຸ້ມຄອງທີ່ດິນແບບຍືນຍົງ ເພື່ອຊ່ວຍ ບັນລຸເປົ້າໝາຍໃນການຮັກສາສົມດຸນຂອງດິນຈາກການເຊື່ອມໂຊມ. ຄວາມຮູ້ໃໝ່ຈາກກອງທຶນ ການຮັກສາສົມ ດຸນຂອງດິນຈາກການເຊື່ອມໂຊມ ແລະ ສິ່ງອຳນວຍຄວາມສະດວກດ້ານເຕັກນິກວິຊາການ. https://www.idhsustainabletrade.com/uploaded/2022/04/2020-LDN-Report-10.5-Medium.pdf

**IFAD (International Fund for Agricultural Development), Procasur & AIPP (Asia Indigenous Peoples Pact).** 2013. ການຄຸ້ມຄອງປ່າໄມ້ປ່ອງແບບຍືນຍົງ ແລະ ການອອກໃບຕາດິນຊຸມຊົນ ໃນເມືອງ ສັງທອງ: ບົດຮຽນຕົວຢ່າງຈາກ ບ້ານຫ້ວຍຫ່າງ ແລະ ບ້ານ ນາປໍ (Huay Hang ແລະ Napor). http://asia.procasur.org/wp-content/uploads/2013/10/Case-Study_Huayhang_Lao_Eng.pdf

**IFC (International Finance Corporation).** n.d. ມາດຕະຖານການປະຕິບັດ IFSC. https://firstfor-sustainability.org/risk-management/implementing-ifc-environmental-and-social-require-ments/establish-and-maintain-an-esms/ifc-environmental-and-social-performance-re-quirements/ifc-performance-standards/

**Kenney-Lazar, M.** 2018. ການຄຸ້ມຄອງຈັດສັນກ່ຽວກັບການເອົາດິນຈາກປະຊາຊົນ: ການຍຶດເອົາທີ່ດິນທີ່ ກ່ຽວຂ້ອງ ໃນປະເທດລາວ. ການບັນທຶກຂອງສະມາຄົມນັກພູມມີສາດຂອງອາເມລິກາ 108, ເລກທີ 3. www.ohchr.org/Documents/Issues/EPoverty/Lao/MilesKenneyLazarAnnex1.pdf

**Lasley, S.** 2021. Sealaska ພະຍາຍາມສ້າງອະນາຄົດທີ່ດີກວ່າ. ຂ່າວກ່ຽວກັບບໍ່ແຮ່. www.mining-newsnorth.com/story/2021/10/12/alaska-native-claims/sealaska-strives-to-build-a-better-future/7039.html

**Lay, J., Anseeuw, W., Eckert, S., Flachsbarth, I., Kubitza, C. Nolte, K. &. Giger, M.** 2021. ການຍຶດເອົາ ແລະ ຫັນປ່ຽນທີ່ດິນຂອງປະຊາຊົນ ມາເປັນການປູກຟັງຂະໜາດໃຫຍ່ທົ່ວໂລກ: ຜົນປະໂຫຍດ

ດ້ານການພັດທະນາແມ່ນ ມີໜ້ອຍ, ຄວາມສ່ຽງຕໍ່ປະຊາຊົນ ແລະ ສິ່ງແວດລ້ອມ ແມ່ນມີຫຼາຍ. ບົດລາຍງານການວິເຄາະ III. Bern, Montpellier, Hamburg, Pretoria: ສູນພັດທະນາ ແລະ ສິ່ງແວດລ້ອມ, ມະຫາວິທະຍາໄລເບີນ (Bern); ສູນຮ່ວມມືດ້ານການສຶກສາຄົ້ນຄວ້າດ້ານກະສິກຳເພື່ອການພັດທະນາ (Centre de coopération internationale en recherche agronomique pour le développement); ສະຖາບັນເຢຍລະມັນ ສຳລັບ ການສຶກສາຄົ້ນຄວ້າພື້ນທີ່ດິນ ແລະ ໂລກ (German Institute for Global and Area Studies); ມະຫາວິທະຍາໄລ Pretoria, Bern Open Publishing. ສຳນັກຂ່າວສານເບີນ.

**Legault, D. & Cochrane, L.** 2021. ປ່າໄມ້ ແລະ ຄົນຕ່າງປະເທດ: ການຄອບຄອງທີ່ດິນຂະໜາດໃຫຍ່ ໃນ Gabon. Land 10, No. 4. www.mdpi.com/2073-445X/10/4/420/htm

**Macqueen, D., Bolin, A. Greijmans, Grouwels, S., & Humphries, S.** 2018. ນະວັດຕະກຳສູ່ຄວາມຈະເລີນຮຸ່ງເຮືອງ ທີ່ເກີດຂຶ້ນໃນຮູບແບບທຸລະກິດປ່າໄມ້ທີ່ມີການຄຸ້ມຄອງໃນທ້ອງຖິ່ນ ແລະ ມູມມອງໃນການຂະຫຍາຍການປະຕິບັດໃຫ້ກ້ວາງຂວາງ. ການພັດທະນາສາກົນ 125. https://doi.org/10.1016/j.worlddev.2018.08.004

**Makhathini, M.** 2010. ຮູບແບບ "ການຂາຍ ແລະ ການເຊົ່າຄືນ" ຂອງບໍລິສັດ Mondi ໃນ ອາເມລິກາໃຕ້. In L. Cotula and R. Leonard eds. ແນວທາງເລືອກໃນການຄອບຄອງທີ່ດິນ: ການລົງທຶນດ້ານການກະສິກຳ ແລະ ຮູບແບບທຸລະກິດ ທີ່ມີການຮ່ວມມື *ໜ້າ. 19--32.* https://pubs.iied.org/sites/default/files/pdfs/migrate/12567IIED.pdf

**Maeying Huamjai Phattana (MHP).** 2019. ການເຂົ້າເຖິງຂອງຊຸມຊົນຕໍ່ຂໍ້ມູນຂ່າວສານກ່ຽວກັບພື້ນທີ່ປ່າໄມ້ທີ່ມີການວາງແຜນໄວ້ ສຳລັບການຫັນປ່ຽນເພື່ອຈຸດປະສົງການນຳໃຊ້ຢ່າງອື່ນ. https://loggingoff.info/wp-content/uploads/2019/09/MHP-Report-Final.pdf

**Messerli, P., Peeters, A., Schoenweger, O., Nanhthavong, V. & Heinimann, A.** 2016. ພື້ນທີດິນຂາດຄວາມອຸດົມສົມບູນ ຫຼື ປະຊາຊົນດ້ອຍໂອກາດ? ການວິເຄາະຮູບແບບ ແລະ ຂະບວນການໃນການຄອບຄອງທີ່ດິນຂະໜາດໃຫຍ່ ໃນອາຊີຕາເວັນອອກສ່ຽງໃຕ້. ໃນ C.C. Gironde, C. Golay & P. Messerli., eds. ການຄຸ້ມຄອງທີ່ດິນຂະໜາດໃຫຍ່: ສຸມໃສ່ ອາຊີຕາເວັນອອກສ່ຽງໃຕ້. *pp* 136--171. Leiden, Brill Nijhoff.

**ບໍລິສັດ Miro Forestry (SL) Ltd. & Yoni Chiefdom.** 2011. *Lease.*www.openlandcontracts.org/contract/ocds-591adf-6875302332/view#/

**Munden Project Ltd.** 2017. ສິດຄອບຄອງນຳໃຊ້ ແລະ ການລົງທຶນ ໃນອາຊີຕາເວັນອອກສ່ຽງໃຕ້: ການວິເຄາະໂດຍການປຽບທຽບ ແນວໂນ້ມທີ່ສຳຄັນ. https://rightsandresources.org/wp-content/uploads/2017/09/TMP-SEA-Key-Trends.pdf

**Mysealaska.** 2020. ບົດລາຍງານພາບລວມທາງການເງິນປະຈຳປີ 2019.https://mysealaska.com/news/item/businesses/2019-annual-report-financial-overview/

**Mysealaska.** 2021. Sealaska, ບົດທົບທວນ ປີ 2021. https://mysealaska.com/news/item/community/sealaska-2021-year-in-review/

**Nanhthavong, V., Oberlack, C., Hett, C. Messerli, P. & Epprecht, M.** 2021. ເສັ້ນທາງສູ່ສະຫວັດດີພາບຂອງມະນຸດ ຊາດ ໃນເງື່ອນໄຂການຄອບຄອງທີ່ດິນໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ການປ່ຽນແປງດ້ານສິ່ງແວດລ້ອມໂລກ 68. www.sciencedirect.com/science/article/pii/S0959378021000315

**ອົງການ New Forests.** 2021. ການລົງທຶນແບບຍືນຍົງ ໃນປ່າໄມ້ປູກຂອງປະເທດອາຊຽນ ອາຊີຕາເວັນອອກສ່ຽງໃຕ້: ກໍລະນີສຶກສາ ຈາກກອງທຶນປ່າໄມ້ອາຊີເຂດຮ້ອນໃນລາວ. https://newforests.com.au/wp-content/uploads/2021/02/New-Forests-Sustainable-Investment-in-South-east-Asian-Plantation-Forestry.pdf

**Oduro, K.A., Obeng, E.A., & Damnyag, L.** 2020. ບົດລາຍງານການກວດສອບຄວາມສອດຄ່ອງຂອງແຜນດຳເນີນງານໃນການຍົກຍ້າຍຈັດສັນ - ໂຄງການຟື້ນຟູປ່າໄມ້ຂອງປະເທດການາ - ບົດລາຍງານສຸດທ້າຍກ່ຽວກັບການກວດສອບ. www.formghana.com/_files/ugd/312552_61663b3e0b914a1791e379248797c597.pdf

**PRI (Principles for Responsible Investment).** 2021. *About the PRI.* https://www.unpri.org/about-us/about-the-pri

**ສະພາພັດທະນາຊັບພະຍາກອນ (Resource Development Council).** n.d. ບໍລິສັດ Alaska Native. www.akrdc.org/alaska-native-corporations

**Ribeiro, M.F.** 2020. ບໍລິສັດປ່າໄມ້ຂອງບຣາຊິລ ສະແດງໃຫ້ເຫັນວ່າ ການຢັ້ງຢືນໄມ້ ໄດ້ຮັບຜົນຢ່າງແທ້ຈິງ. *Mongabay*. https://news.mongabay.com/2020/07/a-brazilian-forest-community-shows-certified-timber-really-does-work/

**ໂຄງການແຜນງານ ດ້ານຊັບພະຍາກອນ ແລະ ສິດທິ (Rights and Resources Initiative [RRI]).** 2015. *ໃຜເປັນເຈົ້າຂອງທີ່ດິນຂອງໂລກ? ພື້ນຖານສາກົນ ກ່ຽວກັບສິດທິດ້ານທີ່ດິນຂອງຊາວພື້ນເມືອງ ແລະ ຊຸມຊົນທີ່ມີການຮັບຮູ້ຢ່າງເປັນທາງການ.*https://rightsandresources.org/wp-content/uploads/GlobalBaseline_web.pdf

**Sealaska.** 2020. ເກນການປະຕິບັດກ່ຽວກັບບົດບາດຍິງຊາຍຂອງ Sealaska, ບົດລາຍງານການປະຕິບັດການບັນທຶກ.www.sealaska.com/businesses/sealaska-board-crosses-gender-threshold-reports-record-performance/

**Sealaska.** n.d. ບໍລິສັດ Sealaska Timber Company. www.sealaska.com/ (ເບິ່ງທີ່ www.sealaska.com/businesses/sealaska-timber-company/)

**United Nations Global Compact.** n.d.*The power of principles.* https://www.unglobalcompact.org/what-is-gc/mission/principles

**ຫ້ອງການກວດສອບຂອງລັດຖະບານແຫ່ງສະຫະລັດອາເມລິກາ (United States of America Government Accountability Office).** 2012. ບໍລິສັດ Alaska Native Corporations ລະດັບພາກພື້ນ: ສະຖານະພາບ 40 ປີຫຼັງຈາກການສ້າງຕັ້ງ, ແລະ ການພິຈາລະນາໃນອະນາຄົດ. www.gao.gov/assets/660/650857.pdf

**ອົງການເພື່ອການພັດທະນາສາກົນຂອງສະຫະລັດອາເມລິກາ (USAID).** n.d. ລາຍການກໍລະນີສຶກສາໃນການລົງທຶນໂດຍການນຳໃຊ້ທີ່ດິນຢ່າງມີຄວາມຮັບຜິດຊອບ. *Landlinks*. https://www.land-links.org/case-study/responsible-land-based-investments/#challenge

**ກະສິກຳ ແລະ ປ່າໄມ້ ໂລກ (World Agroforestry).** 2014. ຮູບແບບກະສິກຳປ່າໄມ້ຂະແໜງເອກະຊົນ ແມ່ນມີຜົນສຳເລັດສຳລັບຊາວກະສິກອນໃນລາວ. www.worldagroforestry.org/news/private-sector-agroforestry-model-pays-farmers-laos

**ທະນາຄານໂລກ (World Bank).** 2020. ບົດຄວາມກ່ຽວກັບຂະແໜງປ່າໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ: ກ້າວສູ່ ພູມສັນຖານພື້ນທີ່ປ່າໄມ້ແບບຍືນຍົງ ສໍາລັບການເຕີບໂຕສີຂຽວ, ການສ້າງວຽກເຮັດງານທໍາ ແລະ ຄວາມສາມາດໃນການປັບໂຕ. ເວທີດ້ານນະໂຍບາຍສີຂຽວ. www.greengrowthknowledge.org/research/lao-pdr-forest-note-toward-sustainable-forest-landscapes-green-growth-jobs-and-resilience

ຂໍ້ມູນເພີ່ມເຕີມ, ຕິດຕໍ່:

ຂະແໜງປ່າໄມ້-ຊັບພະຍາກອນທຳມະຊາດ ແລະ ການຜະລິດແບບຍືນຍົງ
ອີເມວ : NFO-Publications@fao.org
ເວັບໄຊ: www.fao.org/forestry/en

ອົງການອາຫານ ແລະ ການກະເສດ ແຫ່ງສະຫະປະຊາຊາດ
ໂຣມ, ປະເທດ ອີຕາລີ

CC4957LO/1/04.24